ບັນທຶກເຫດການ

ວັນເກີດ [illegible] ຄົບຮ້ອຍປີ

ມຕຸກິປັນຍາ ສມາຄົມ ... ຫໍສມຸດແຫ່ງພຸທທວົງສາປ່າດວງ

ອະນາຄາຣິກະທັມມະປາລະ

ຫນັງສື

ບັນທຶກເຫດກາຣນ໌

ເນື່ອງໃນກາຣຈັດງານສລອງວັນເກີດຄົບຮ້ອບປີຂອງທ່ານ

ອະນາຄາຣິກະທັມມະປາລະ

ເຣີ່ມແຕ່

ວັນທີ ໑໗ – ໒໐ ກັນຍາ ໑໙໖໔

ຈັດພິມເຜີຍແຜ່

ໂດຍ

ອົງຄ໌ກາຣພຸທອົງສ໌

ວັດມະຫາພຸທວົງສາປ່າຫລວງ ວຽງຈັນທ໌

ໃນສະບັບນີ້ :-

ໜ້າ

- ຣາຍຊື່ພຸທບໍຣິສັທຈາກປະເທສໄທທີ່ບໍຣິຈາກເງິນສ້າງໜັງສືເຫລັ້ມນີ້ ແລະທ່ານຜູ້ຊ່ວຍເຫລືອໃນກາຣພິມ.
- ຂໍເວົ້ານຳທ່ານ !
- ສຳເນົາເອກສາຣຕິດຕໍ່ກ່ຽວກັບກາຣຈັດງານທັມມະປາລະ ໕
- ບັນທຶກປະຈຳວັນ ໑໗ – ໒໐ ກັນຍາ ໑໙໖໔ ໂດຍ ສ. ໄຊຍະວົງສ໌ ໑໗
- ຄຳກ່າວໃຂພິທີສະແດງປາຖະກະຖາ. ໒໕
- ຊີວະປະວັດຂອງອະນາຄາຣິກະທັມມະປາລະ ໒໖
  ໂດຍ... ພຣະມະຫາກ້າວ ພຸທວົງສ໌ ປ. ໙ M.A.
- ກາຣກູ້ພຸທຄະຍາ ໂດຍ ພ.ຕ.ອ. ເລື່ອນ ວິໄລທົງສ໌ ເລຂາທິກາຣພຸທວົງສ໌ ແລະເຈົ້າແຂວງວຽງຈັນທນ໌ ໓໔
- ຄຳສຣູປ ອະນຸໂມທະນາອັດພິທີ.

ແລະໄຫວ້ມາແລ້ວດ້ວຍຕົນເອງ ແລະອີກຮູປທີ່ສອງນັ້ນເບິ່ງຜາດຜົນແລ້ວຄືບໍ່ມີຄວາມໝາຍ ແຕ່ອັນທີ່ຈິງສິ່ງນີ້ຄນະທັມມະຍາຕຣາ ຈາກລາວອັນມີພຣະອາຈາຣຍ໌ໃຫຍ່ເປັນຫົວໜ້າໄປຫ້ອມລ້ອມຢືນພິຈາຣະນາກັມມະຖານຢູ່ນັ້ນ ແມ່ນ "ສັນຍະລັກສ໌ແຫ່ງການຕໍ່ສູ້ ໂດຍເອົາຊີວິດເປັນເດີມພັນ" ຂອງທ່ານທັມມະປາລະ ອັນຈັກເປັນທິດຖານຸຄະຕິ ເຕືອນໃຈເຮົາຊາວພຸທຜູ້ຮັບຜິດຊອບພຣະພຸທສາສນາ ຈະເພິ່ງຄິດ ! ຄິດ ! ຄິດ ! ຮ່ຳເພິງ ! ແລ້ວເຮັດ !

ອີກອັນນຶ່ງ ຂໍຮຽນວ່າສຳນວນແລະຂໍ້ຄວາມໃນເຣື່ອງແຕ່ລະເຣື່ອງ ຍ່ອມແຕກຕ່າງກັນໄປຕາມສຳນວນ ພາສາຂອງຜູ້ເປັນເຈົ້າຂອງຜູ້ ຈັດພິມບໍ່ໄດ້ປ່ຽນແປງແກ້ໄຂ ເພາະນອກຈາກໃຫ້ສົມຊື່ວ່າເປັນ "ໜັງສືບັນທຶກເຫດການ໌" ຕາມຄວາມເປັນຈິງແລ້ວຍັງເພື່ອເປັນການສະແດງຄວາມເຄົາຣົບຕໍ່ລິກຂະສິທຂອງທ່ານຜູ້ເປັນເຈົ້າຂອງເຣື່ອງນຳດ້ວຍ.

ສ່ວນຄວາມຂາດຕົກບົກບາງໃດ ໆ ໃນດ້ານການພິມ ອັນຫາກຈະມີຄນະຜູ້ຈັດເຮັດຂໍຮັບຜິດ ແລະກໍຫວັງຈະໄດ້ຮັບຄວາມໃຫ້ອະໄພຍ໌ແລະກະຣຸນາຕຸກເຕືອນດ້ວຍເມດຕາທັມເປັນຢ່າງດີ.

ຄນະຜູ້ຈັດທຳ.



ໃນພິທີສລອງເທສການ
ອັນ ຍິ່ງ ໃຫຍ່ ຂອງ ໂລກ
ພຣະພຸທສາສນາ ຕໍ່
ໜ້າເດີ່ນປະຊຸມ ແມ່ນ
ໂຕ້ະໝູ່ບູຊາພຣະຣັຕນະ
ຕັຍແລະຮູບແຕ້ມຂຍາຍ
ຂນາດໃຫຍ່ ຂອງທ່ານ
ອະນາຄາຣິກະ
ທັມມະປາລະ



ພຣະອາຈາຣຍ໌ມະຫາ
ປາລ ອານັນໂທ
ປະທານຜູ່ ໃຫ້ກຳ ເນີດ
ພຸທວົງສ໌ ກ່າວໄຂພິທີ
ສລອງວັນເກີດຄົບຮອບ
ຮ້ອຍປີຂອງທ່ານອະນາ
ຄາຣິກະ ທັມ ມະປາລະ
ວັນທີ໑໐ກັນຍາ ໑໙໕໔

ຈາກຊ້າຍພະນະທ່ານແກ້ວ ວິພາກຣ ຣັຖມົນຕຣີຊ່ວຍ ກະຊວງປະຊາສົງເຄາະຫ໌, ພະນະທ່ານຈຸນພັນ ອີສ ຣາງກູຣ ນະອະນຸທຍາ ເອກອັຄ ຄະ ຣາຊ ທູດ ໄທ ພະນະທ່ານ ນາຍພົລພູມີ ໜໍ່ສວັນ ຮອງນາຍົກຣັຖ ມົນຕຣີ ຣັຖມົນຕຣີກະຊວງ ການຄັງ, ພະນະ ທ່ານ ພະ ຍາອຸ່ນເຮືອນ ນໍຣະສິງຫ໌ ຣັຖມົນຕຣີ ກະຊວງທັມມະ ການ ພະນະທ່ານບົວວັນ ນໍ ຣະສິງຫ໌ຣັຖມົນຕຣີກະຊວງ ບຸຣິທັມແລະພະນະທ່ານໂຕ ແກ້ວ ຫລວງ ໂຄຕ ຣ.ມ.ຕ. ຊ່ວຍກະຊວງສຶກສາທິການ

ບັນດາທ່ານຜູ້ມີກຽດ ທີ່ເຂົ້າ ຮ່ວມໃນພິທີ ກຳລັງຟັງ ພຣະມະຫາກ້ວ ພຸທວົງສ໌ ປ໗ ສະແດງປາຖະກະຖາ ເຣື່ອງ ຊີວະປວັດຂອງອະ ນາຄາຣິກະທັມມະປາລະ ດ້ວຍຄວາມສົນໃຈ

(ສຳເນົາ)

ເອກສາຣຕິດຕໍ່

ກ່ຽວກັບກາຣຈັດງານສລອງວັນເກີດ

ຄົບຮ້ອຍປີຂອງທ່ານ

ອະນາຄາຣິກະທັມມະປາລະ

ທີ່ວັດມຫາພຸທວົງສາປ່າຫລວງ

ວຽງຈັນທນ໌

ເມື່ອວັນທີ່ ໑໗ – ໒໐ ກັນຍາ ໑໙໖໔

24 / VII
ห้ามจำหน่าย

໑໑
ພິທີສລອງ

ວັນເກີດ ຄົບຮ້ອຍປີ ຂອງ ທ່ານທັມມະປາລະ

ເນື່ອງຈາກປີນີ້ (໑໙໖໔) ເປັນປີເກີດທີ່ຄົບຮ້ອຍ ຂອງທ່ານອະນາຄາຣິກະທັມມະປາລະ ວີຣະບຸຣຸສຜູ້ຍິ່ງໃຫຍ່ຂອງໂລກພຸທສາສນາສມັຍປັຈຈຸບັນ ຜູ້ກອບກູ້ສັງເວຊະນີຍະສະຖານທັງສີ່ຄືບ່ອນປະສູດ ຕັສຣູ້ ສະແດງປະຖົມເທສນາ ແລະປະຣິນິພານຂອງສົມເດັດພຣະສັມມາສັມພຸທເຈົ້າ ຜູ້ຟື້ນຟູພຣະພຸທສາສນາໃຫ້ກັບສ່ອງແສງຂຶ້ນອີກ ໃນອິນເດັຍຄັ້ງນັ້ນ ເພື່ອເປັນເຄື່ອງສະແດງເຖິງຄວາມກະຕັນຍູກະຕະເວທີຕໍ່ທ່ານທັມມະປາລະ ໂດຍຄຳເຊີນຊວນຂອງອົງການພຸທສາສະນິກະສັມພັນແຫ່ງໂລກ ຊາວພຸທທົ່ວໂລກ ຈະໄດ້ຈັດງານສລອງວັນສຳຄັນນີ້ເປັນພິເສສ ແລະໃນໂອກາສນີ້ຊາວພຸທລາວເຮົາ ພ້ອມກັບອົງຄ໌ການພຸທວົງສ໌ ກໍຈະໄດ້ຈັດການສລອງຂຶ້ນ ເປັນເວລາ ໓ ມື້ ໓ ຄືນ ທີ່ວັດມຫາພຸທວົງສາປ່າຫລວງວຽງຈັນທນ໌ ດັ່ງລາຍການຕໍ່ໄປນີ້ ຄື:

ວັນພະຫັດ ທີ ໑໗ ກັນຍາ ໒໕໐໗ : ມີການຕົບແຕ່ງສະຖານທີ່ຕິດຕັ້ງຮູປພາບສັງເວຊະນີຍະສະຖານທັງ ໔ ແລະອື່ນ ໆ.

– ເວລາ ໑໗ ໂມງແລງ: ມີການສູດປະຣິດຕະມຸງຄຸລອຸທິສສ່ວນກຸສົລແດ່ທ່ານທັມມະປາລະ ຈົບແລ້ວມີ ເທສນານຶ່ງກັນ.

ວັນສຸກ ທີ ໑໘ ກັນຍາ ໒໕໐໗ :

– ເວລາ ໐໗ ໂມງ: ມີການຕັກບາດຖວາຍຈັງຫັນ ແດ່ພຣະສົງສາມເນນ (ເປັນພິທີອຸທິສສ່ວນກຸສົລ).

– ເວລາ ໑໗ ໂມງ: ມີການສູດປະຣິດຕະມຸງຄຸລ ອຸທິສສ່ວນກຸສົລແດ່ ທ່ານທັມມະປາລະ ເທສນານຶ່ງກັນ.

ວັນເສົາທີ່ ໑໙ ກັນຍາ ໒໕໐໗ :

– ເວລາ ໑໑ ໂມງ: ຖວາຍພັດຕາຫານເພນແດ່ ພຣະເຖຣະຄະນະສະພາທັມມະກະຖຶກ ແລະພຣະສົງຄ໌ສາມເນຣ ໃນວັດປະມານ ໓໐໐ ກວ່າຮູປ.

- ເວລາ ໑໔ ໂມງ : ມີການສົນທະນາທັມມະເປັນຄະນະ ໂດຍສະມາຊິກສະພາທັມມະກະຖຶກ (ຣາຍການພິເສສ)

- ເວລາ ໑໗ ໂມງ : ມີການສູດປະຣິຕຕະມຸງຄຸລ ອຸທິສ່ວນກຸສົນແດ່ທ່ານທັມມະປາລະ

ວັນທິດທີ ໒໐ ກັນຍາ ໒໕໐໗ :

- ເວລາ ໐໗ ໂມງ : ມີການຕັກບາດ ຖວາຍຈັງຫັນ ແດ່ພຣະສົງສາມະເນນ

- ເວລາ ໑໔ ໂມງ ; ມີການສະແດງປາຖະກະຖາເຣື່ອງ "ຊີວິຕແລະງານອັນຍິ່ງໃຫຍ່ຂອງທ່ານທັມມະປາລະ" ໂດຍພຣະມະຫາກ້າວພຸທທະໂຄສະໂກ ປ. ໙ M.A ອະດີດນັກສຶກສາຈາກປະເທສອິນເດັຍ.

- ເວລາ ໑໕ ໂມງ: ກ່າວສະດຸດີ "ງານກອບກູ້ພຸທທະຄະຍາຂອງທ່ານທັມມະປາລະ" ໂດຍ ພ.ຕ.ອ. ເລື່ອນ ວິໄລຫົງສ໌ ເລຂາທິການ ອົງການພຸທວົງສ໌

- ເວລາ ໑໖ ໂມງ : ກ່າວສຣຸບແລະອະນຸໂມທະນາ ໂດຍພຣະອາຈາຣຍ໌ມະຫາປາລ ອານັນໂທ ເຈົ້າສຳນັກພຸທວົງສ໌

- ເວລາ ໑໙ ໂມງ : ມີການສາຍຊິເນມາ ເຣື່ອງພຸທປະວັດ-ສັງເວຊະນີຍະສະຖານແລະອື່ນໆທີ່ກ່ຽວກັບອິນເດັຽ. ດັ່ງນັ້ນຈຶ່ງຂໍນິມົນຕ໌ແລະເຊີນຊວນສາທຸຊົນທັງຫລາຍ ໄດ້ໂຜດໄປຮ່ວມທຳບຸນກິນທານ ສຶກສາຫາຄວາມຮູ້ແລະມ່ວນຊື່ນ ໃນໂອກາສນີ້ ໂດຍພ້ອມພຽງກັນເທີ້ນ.

ຫມາຍເຫດ: ສະເພາະວັນທິດ ທີ ໒໐ ກັນຍາ ເວລາບ່າຍ ໑ ໂມງ ສຳລັບພຣະ-ເນນມີຣົຖຂົນສົ່ງ ທີ່ວັດສີໂຄ-ວັດໄຕ-ວັດອຸບມຸງ-ວັດຫົວເມືອງ-ວັດສີຖານ-ວັດອົງຕື້-ວັດມີໄຊ-ວັດສີເມືອງ ວັດຂົວຫລວງ-ວັດທົ່ງຕູມ-ວັດທາດຫລວງ ແລະວັດທາດຝຸ່ນ; ສ່ວນສາຍໃຕ້ ມີຣົຖຮັບສົ່ງທີ່ວັດບໍ່ໂອ

ນິມິດຕັງ ສາທຸຮູປານັງ ກະຕັນຍຸກະຕະເວທິຕາ

-ຄົນດີຕ້ອງເປັນຜູ້ຮູ້ຈັກ ແລະຕອບແທນ ຜູ້ມີຄຸນ-

DHARMAPLA BIRTH CENTENARY

In the Occasion of Comemorating of the Great Event-Birth Centenary of ANAGARIKA (Homeless) DHARMAPALA, the founder of The Maha Bodhi Society of India and the great Buddtist leader of modern times, The Buddha Vongsa organisation with the co-operatien of The ministry of Cults, under the Chairmanship of Mr.PHYA KHHM NOY CHANTHAPANYA requests the pleasure of the company

H.E. Mr. S. BIKRAM SHAH & Madame

at a Ceremony to be held at WAT SOKE PALUANG (opposite the new Japanese Electric power House) on Sunday the 20th Septembor 1964 accordigg to following programmês;

14.20 Opening Ceremony.

14.25 Speech on "The Life and Noble work of ANAGARIKA DHRMAPALA" by Ven' ble Bhikknu Maha Kao - P. 9; M. A. (Nalanda - India)

15.00 Speech by Mr. Col. Leuane Vilayhongsa; Gen. Secretary of Bauddha Vongsa Organisation.

15.25 Vote of Thanks by Ven' ble Phra ACHARYA Maha Pala ANANDO; founder of The Buddha Vongsa Organisation.

All ARE CORDIAllY WElCOME.

(ສຳເນົາຈົດໝາຍ)

ອົງກາຣພຸທທວົງສ໌
ວັດມະຫາພຸທທວົງສາປ່າຫລວງ
ພຣະນະຄອຣວຽງຈັນທນ໌
ເລຂທີ່ ໙໐/ພວ/໑໙໖໔

ວຽງຈັນ, ວັນທີ ໑໐ ກັນຍາ ໒໕໐໗

ຈາກ : ເລຂາທິກາຣອົງຄ໌ກາຣພຸທທວົງສ໌

ຮຽນ : ພະນະທ່ານຣັຖມົນຕຣີວ່າການກະຊວງທັມມະການ

ທີ່ ພຣະນະຄອຣວຽງຈັນທນ໌.

ເຣື່ອງ; ການຈັດງານພິທີສລອງວັນເກີດຄົບຮ້ອຍປີ ຂອງທ່ານອະນາຄາຣິກະທັມມະປາລະ.

ເນື່ອງດ້ວຍອົງກາຣພຸທທວົງສ໌ ອັນເປັນອົງການເຜີຍແຜ່ ແລະເທີດທູນພຣະພຸທສາສນາ ໃນພຣະຣາຊອານາຈັກລາວ ໄດ້ສຳນຶກໃນພັນທະໜ້າທີ່ຂອງຊາວພຸທ ອັນມີຂະບວນການເຄື່ອນໄຫວຂອງພຣະພຸທສາສນາໃນທົ່ວໂລກ ໄດ້ກຳໜົດຈະໃຫ້ມີການສລອງວັນເກີດຄົບຮ້ອຍປີຂອງທ່ານອະນາຄາຣິກະທັມມະປາລະ ວີຣະບຸຣຸສທາງພຣະພຸທສາສນາ ຜູ້ຍິ່ງໃຫຍ່ໃນສມັຍປັຈຈຸບັນ ດັ່ງທີ່ພະນະທ່ານໄດ້ຊາບແລ້ວນັ້ນ ພິທີສລອງນີ້ໄດ້ກຳໜົດຂຶ້ນທີ່ມະຫາພຸທທວົງສາປ່າຫລວງ ວຽງຈັນທນ໌ ດັ່ງໝາຍກຳໜົດການ ທີ່ໄດ້ສເນີມາຮຽນພະນະທ່ານພ້ອມນີ້ ທັງນີ້ກໍດ້ວຍມີເຫຕຜົລດັ່ງຕໍ່ໄປນີ້ ;

-ເພື່ອປະຕິບັດຕາມຄຳເຊີນຊວນແລະຕົກລົງກັນຣະວ່າງ ເລຂາທິກາຣສະມາຄົມມະຫາໂພທິແຫ່ງປະເທສອິນເດັຽ ກັບທ່ານພຣະອາຈາຣຍ໌ມະຫາປາລ ອານັນໂທ ເຈົ້າສຳນັກຜູ້ໃຫ້ກຳເນີດພຸທທວົງສ໌ ຕາມຈົດໝາຍເລກທີ່ ໙໑໖/໑ມກ/໖໒ ລົງວັນທີ ໒໐ ກັນຍາ ໑໗໖໒.

-ເພື່ອໃຫ້ເປັນໄປຕາມມະຕິຕົກລົງຂອງກອງປະຊຸມອົງກາຣພຸທສາສະນິກະສັມພັນແຫ່ງໂລກຄັ້ງທີ່ ໖ ທີ່ປະເທສຂະເມນ ຊຶ່ງໄດ້ຣະບຸໄວ້ແລ້ວໃນມາຕຣາ ໖-໗ ແຫ່ງຂໍ້ຕົກລົງນັ້ນໂດຍຜູ້ຕາງໜ້າຊາວພຸທລາວເຮົາ ໄດ້ຮ່ວມປະຊຸມນຳດ້ວຍເປັນທາງກາຣແລ້ວ

-ເພື່ອປະຕິບັຕຕາມມະຕິກອງປະຊຸມຄະນະກັມມາທິກາຣ ພຸທທວົງສ໌ສມັຍວິສາມັນ ມີ/-

໑໙໖໔ ລົງວັນທີ ໑ ກັນຍາ ໑໙໖໔ ທີ່ໄດ້ຕົກລົງໃຫ້ມີການສລອງວັນເກີດຄົບຮ້ອຍປີຂອງທ່ານ ທັມມະປາລະ ຂຶ້ນທີ່ວັດມະຫາພຸທວົງສາປ່າຫລວງ ພ້ອມທັງໃຫ້ຂໍຄວາມອຸປະຖັມຈາກກະຊວງ ທັມມະການ.

ຍິ່ງກ່ວານັ້ນການສລອງວັນເກີດຂອງຄົນສຳຄັນຢ່າງທ່ານທັມມະປາລະນີ້ ເປັນການຊຸກຍູ້ ຂບວນການເຄື່ອນໄຫວຂອງສິລທັມ ແລະເປັນການສະແດງຄວາມໂຄຣົບບູຊາ ຕໍ່ອົງສົມເດັດພຣະ ສັມມາສັມພຸທເຈົ້າ ຕໍ່ບັພພະບຸຣຸສທາງພຣະພຸທສາສນາ ອັນຈັດເປັນທິດຖານຸຄະຕິອັນດີແກ່ອະ ນຸຊົນຂອງຊາວລາວສນາສືບໄປ.

ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ຮຽນມາຂໍຄວາມອຸປະຖັມຈາກທາງຣາຊການ ກະຊວງທັມມະ ການຕາມສົມຄວນພ້ອມທັງຂໍໃຫ້ພະນະທ່ານໄດ້ໃຫ້ກຽດເປັນປະທານແກ່ງານນີ້ຈະເປັນພຣະຄຸນຍິ່ງ

ດ້ວຍເມດຕາທັມ

(ລາຍເຊັນ)

(ພ.ຕ.ອ. ເລື່ອນ ວິໄລທົງສ໌)

ບັນທຶກລາຍງານການປະຊຸມ ຄນະກັມມະການພຸທວິງສ໌

ສມັຍວິສາມັນ ໔/ ໑໙໖໔ ທີ່ວັດມະຫາພຸທວົງສ໌ສາປ່າຫລວງ ວຽງຈັນ

ບ່ອນປະຊຸມ : ສຳນັກງານພຸທວົງສ໌

ວັນເວລາ : ວັນທີ ໑໕ ກັນຍາ ໒໕໐໗ ເວລາ ໑໖ ໂມງ ໓໐ ນາທີ

ປະທານກອງປະຊຸມ : ພຣະອາຈາຣຍ໌ມະຫາປານ ອານັນໂທ ໃນນາມຄນະສົງຄ໌ແລະພະນະທ່ານ ແກ້ວ ວິພາກຣ ພ້ອມສະມາຊິກອີກ ໑໔ ທ່ານ :

ຫົວຂໍ້ທີ່ໄດ້ພິຈາຣະນາແລະຕົກລົງກັນ ດັ່ງຕໍ່ໄປນີ້ :

໑/ ການເຊີນແຂກ : ເຣື່ອງນີ້ ຫລັງຈາກໄດ້ຟັງລາຍງານຂອງທ່ານ ພ.ຕ.ອ ເລື່ອນ ວິໄລຫົງສ໌ ວ່າການຈັດງານນີ້ ບໍ່ເປັນທາງຣາຊການ ແຕ່ເປັນຂບວນການຂອງຊາວພຸທ ຊຶ່ງແມ່ນ ຄນະພຸທວົງສ໌ຈັດຂຶ້ນ ຕາມຄວາມເຫັນຂອງພະນະທ່ານຣັຖມົນຕຣີກະຊວງທັມມະການ ຈຶ່ງຢາກ ໃຫ້ເຊີນແບບບໍ່ເປັນທາງຣາຊການ ຫາກໃຜຮູ້ຈັກມັກຄຸ້ນ ຈະເຊີນເປັນສ່ວນຕົວກໍຍ່ອມທຳໄດ້ ໂດຍສະເພາະຊາວອິນເດັຽແລະຊາວພຸທທັງໃນແລະນອກປະເທສ ທີ່ຢູ່ວຽງຈັນດັ່ງນັ້ນ ເມື່ອໄດ້ ຮັບຊາບແລ້ວ ກອງປະຊຸມ ໄດ້ຟັງຄວາມຄິດຄວາມເຫັນຂອງພະນະທ່ານແກ້ວ ວິພາກຣແລະ ທ່ານເກື້ອ ປະທຸມຊາດ ອະທິບໍດີກົມທັມມະການ ຈຶ່ງເຫັນດີໃນຫລັກການໃຫ້ເຊີນ ບັນດາທູ ຕານຸທູດຂອງປະເທສທີ່ເປັນສະມາຊິກຂອງອົງການພຸທສາສນິກະສັມພັນແຫ່ງໂລກ, ພຸທສາສນິ ກົນ ວຽງຈັນ ແລະມູນນິທິອາຊີ ແຕ່ເຣື່ອງນີ້ກອງປະຊຸມ ໄດ້ມອບໃຫ້ທ່ານ ເກື້ອ ປະທຸມຊາດ ນຳຄວາມໄປລາຍງານພະນະທ່ານຣັຖມົນຕຣີ ເມື່ອເພິ່ນເຫັນດີຢ່າງໃດແລ້ວ ຈຶ່ງດຳເນີນການຕໍ່ໄປ ແລະເພື່ອຄວາມຮຽບຮ້ອຍຈົບງານຂອງພິທີນີ້ ກອງປະຊຸມ ໄດ້ຕົກລົງແຕ່ງຕັ້ງຄະນະກັມມະການ ຮັບຕ້ອນແຂກຜູ້ມີກຽດດັ່ງນີ້ :

- ທ່ານເກື້ອ ປະທຸມຊາດ ຕາງໜ້າພະນະທ່ານຣັຖມົນຕຣີກະຊວງທັມມະການ (ພະນະທ່ານຣັຖມົນຕຣີ ຯ ມາດ້ວຍຕົວເອງ)
- ພະນະທ່ານແກ້ວ ວິພາກຣ
- ທ່ານພະຍາຄຳນ້ອຍ ຈັນທະປັນຍາ ປະທານພຸທວົງສ໌
- ພ.ຕ.ອ. ເລື່ອນວິໄລຫົງສ໌ ເລຂາທິການພຸທວົງສ໌

- ທ່ານນາຍພິລສັງ
- ທ່ານທຸມແພງ ປະທຸມວັນ
- ທ່ານພາ ພົນເສນາ ຈາກກົມພິທີການທູດ

໒/ ກ່ຽວກັບການຕົບແຕ່ງສະຖານທີ່ແລະສາສນາພິທີ : ການທັງສອງພະແນກນີ້ ເປັນພາຣະຂອງຄະນະກັມມະການພາຍໃນວັດ ເຊິ່ງຈະໄດ້ດຳເນີນຕໍ່ໄປ.

໓/ ກ່ຽວກັບການພິມເອກສາຣ ແລະການແປລາຍງານພິທີການ : ເຣື່ອງນີ້ກອງປະຊຸມໄດ້ມອບໃຫ້ມະຫາບຸນຖິນ ແລະມະຫາທັງສາ ຟ້າວຈັດການແປແລະພິມປະວັດຫຍໍ້ ພາກລາວ–ອັງກິດ ຂອງທ່ານທັມມະປາລະໄວ້ແຈກຢາຍພວກຊາວຕ່າງ ໆປະເທສທີ່ຖືກເຊີນມາໃນງານດ້ວຍ.

໔/ ກ່ຽວກັບການມະຫໍຣະສົບ : ເຣື່ອງນີ້ທ່ານນາຍພິລສັງ ເຊິ່ງເປັນກັມມະການອຸປະຖັມແຫ່ງພຸທວົງສ໌ແລະເປັນກັມມະການຈັດງານສລອງ ໄດ້ແຈ້ງຄວາມຈຳນົງຈະໃຫ້ເຈົ້າໜ້າທີ່ຊຶ່ງເນມາ ນຳເຄື່ອງສາຍໄປ ບໍຣິການ ແຕ່ໃຫ້ຊອກຫາພັນທີ່ເຫມາະສົມມາຈາກບ່ອນອື່ນໄວ້ໃຫ້ພ້ອມແລະເຣື່ອງນີ້ ທາງເຈົ້າໜ້າທີ່ພຸທວົງສ໌ ຈະໄດ້ຈັດມາຫາດ້ວຍຕົນເອງ.

໕/ ການພິມບັດເຊີນແລະປະວັດທັມມະປາລະ : ເຣື່ອງນີ້ຫລັງຈາກໄດ້ຮັບຄວາມເຫັນດີຂອງພະນະທ່ານຣັຖມົນຕຣີ ທັມມະການແລ້ວ ໃຫ້ຟ້າວຂໍໜັງສືກະຊວງທັມມະການ ເຖິງພິທີການທູດແລະກະຊວງຖແລງຂ່າວ : ຂໍໃຫ້ພິທີການທູດຊ່ວຍຮ່າງບັດເຊີນ ແລະແຈ້ງຣາຍຊື່ທູດແລະຄົນສຳຄັນທີ່ຄວນເຊີນ ພ້ອມທັງໃຫ້ທ່ານພາ ພົນເສນາ ໄດ້ໃຫ້ກຽດຊ່ວຍເຫລືອໃນວັນງານດ້ວຍ ສ່ວນກະຊວງຖແລງຂ່າວ ໃຫ້ຊ່ວຍໂຄສນາປ່າວເຕືອນ ແລະໃຫ້ເຈົ້າໜ້າທີ່ຝ່າຍເຄື່ອງກະຈາຍສຽງແລະບັນທຶກສຽງບັນທຶກພາບ ໄປຊ່ວຍເຫລືອໃນ ວັນທີ ໑໐ ກັນຍານັ້ນດ້ວຍ./

ປິດປະຊຸມເວລາ ໑໗ ໂມງ ດ້ວຍຄວາມຮຽບຮ້ອຍເປັນຢ່າງດີ.

ປະທານກອງປະຊຸມ

(ພະນະທ່ານແກ້ວ ວິພາກຣ) ຜູ້ບັນທຶກການປະຊຸມ

(ບຸນຖິນ ຈັນທະມົນຕຣີ)

ໝາຍເຫດ : ໃນທີ່ສຸດວົກລົງເຊີນຈຳເພາະປະເທສອິນເດັຽ ໂທ ອົງຄ໌ການເອກຊົນຕ່າງປະເທສລາວອົງຄ໌ການ .

ເລກທີ ກ໔໕/ທກ

໑໓ ເສັດຕາມ ໑໙໖໔

ລັດຖະມົນຕີ ວ່າການກະຊວງທັມມະການ

ຮຽນ ພະນະທ່ານລັດຖະມົນຕີກະຊວງຖແລງຂ່າວ ໂຄສນາການ

ແລະທ່ອງທ່ຽວ

ທີ່ ນະຄອນວຽງຈັນ.

ເຣື່ອງ : ຂໍຄວາມຮ່ວມມື ໃນພິທີສລອງວັນເກີດຄົບຮ້ອຍປີ ຂອງທ່ານທັມມະປາລະ.

ຂ້າພະເຈົ້າຂໍຖືເປັນກຽດ ຮຽນໃຫ້ພນະທ່ານຊາບວ່າ ຄນະກັມມະການອຳນວຍການພຸທທວົງສ໌ ໄດ້ປະຊຸມກັນເມື່ອວັນທີ ໑ ກັນຍາ ໑໙໖໔ ໄດ້ຕົກລົງໃຫ້ມີການສລອງວັນເກີດຄົບຮ້ອຍປີ ຂອງທ່ານທັມມະປາລະ ຂຶ້ນທີ່ວັດມະຫາພຸທທວົງສາປ່າຫລວງ ວຽງຈັນ ດັ່ງໝາຍກຳໜົດການ ທີ່ໄດ້ແນບມາຮຽນພນະທ່ານພ້ອມນີ້ ໑ ສະບັບ.

ພິທີນີ້ ຈະເປັນໄປກ້ວາງຂວາງພໍສົມຄວນ ແລະເປັນພິທີທີ່ກ່ຽວກັບປວັດສາດພຣະພຸທສາສນາ ອັນກ່ຽວກັບງານພຣະສາສນາໃນຕ່າງປະເທດ ຈຶ່ງໄດ້ມີການນິມົນແລະເຊີນບັນດາພຣະສົງສາມເນນວັດຕ່າງໆ ແລະພຸທບໍຣິສັດ ທັງຊາວລາວແລະຕ່າງປະເທດ ເປັນຈຳນວນມາກຫລາຍ,

ໂດຍເຫັນວ່າ ພິທີສລອງນີ້ຈະເປັນເຄື່ອງປະກາດກຽຕິຄຸນພຣະພຸທສາສນາ ເປັນເຄື່ອງສ້າງຄວາມເຂົ້າໃຈກັນດີ ຣະຫວ່າງຊາວພຸດທົ່ວໄປ ອັນຈະເປັນປໂຍດແກ່ປະເທດຊາດສາສນາເປັນສ່ວນຮວມນຳດ້ວຍ ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍຄວາມຮ່ວມມືຈາກພນະທ່ານໃນການນີ້ຄື :

- ຊ່ວຍໂຄສນາໃນພາກຂ່າວ ກ່ອນແລະຫລັງວັນງານພິທີພໍສົມຄວນ.
- ສົ່ງເຈົ້າໜ້າທີ່ຂ່າວ ແລະເຈົ້າໜ້າທີ່ບັນທຶກພາບ ບັນທຶກສຽງ ພ້ອມກັບເຄື່ອງກະຈາຍສຽງໄປຮ່ວມໃນງານ (ສະເພາະວັນທີ ໒໐ ກັນຍາ ໑໙໖໔ ທ່ານັ້ນ).

ຂ້າພະເຈົ້າ ຂໍຂອບພະຄຸນລ່ວງໜ້າ ມາພ້ອມນີ້ເປັນຢ່າງສູງ./

(ລາຍເຊັນ)

ພະຍາ ອະນຸຣັກ ພັກດີ

(ອຸ່ນເຮືອນ ນໍຣະສິງຫ໌)

ເລກທີ ໗໙໔/ທກ.　　　　　　　　　　໑໔ ເສັດຕາມ ໑໙໘໔

ຣັດຖມົນຕຣີ ວ່າການກະຊວງທັມມະການ

ຮຽນ ພນະທ່ານຣັດຖມົນຕຣີ ວ່າການກະຊວງ

ມະຫາດໄທ

- ທີ່ ນະຄອນວຽງຈັນ.

ເຣື່ອງ : ພິທີສລອງວັນເກີດ ຄົບຮ້ອຍປີ ຂອງທ່ານອະນາຄາຣິກະທັມມະປາລະ.

ຂ້າພະເຈົ້າຂໍຖືເປັນກຽດ ຮຽນໃຫ້ພນະທ່ານຊາບວ່າ ຄນະກັມມະການອຳນວຍການພຸທວົງສ໌ ໄດ້ປະຊຸມກັນເມື່ອວັນທີ ໑ ກັນຍາ ໑໙໘໔ ແລະໄດ້ຕົກລົງໃຫ້ມີການສລອງວັນເກີດຄົບຮ້ອຍປີ ຂອງທ່ານທັມມະປາລະ ຂຶ້ນທີ່ວັດມະຫາພຸທວົງສາປ່າຫລວງ ເປັນເວລາ ໓ ມື້ ໓ ຄືນ ເລີ່ມແຕ່ວັນທີ ໑໗ ກັນຍາ ເຖິງ ໒໐ ກັນຍາ ໑໙໘໔, ພິທີມີແຕ່ດ້ານສາສນາລ້ວນໆ ບໍ່ມີການລົ້ນເລີງປະເພດອື່ນ ດັ່ງພນະທ່ານຈະຊາບໄດ້ຕາມລາຍການທີ່ໄດ້ສົ່ງມາຮຽນພ້ອມນີ້ ໑໐ ສະບັບ.

ພິທີການຈະເປັນໄປຢ່າງກ້ວາງຂວາງພໍສົມຄວນ ເພາະມີການນິມົນພຣະສົງອົງຄະເຈົ້າມາຮ່ວມຫລາຍວັດ.

ໂດຍເຫັນວ່າ ວັດມະຫາພຸທວົງສາປ່າຫລວງຢູ່ບ່ອນປ່ຽວ ເມື່ອມີຜູ້ຄົນມາເຕົ້າໂຮມກັນມາກໜ້າຫລາຍຕາພໍຄວນແລ້ວ ຈຶ່ງຢາກໃຫ້ທຸກສິ່ງທຸກຢ່າງ ເປັນໄປໂດຍມີຣະບຽບຮຽບຮ້ອຍ ດັ່ງນັ້ນຂ້າພະເຈົ້າຈຶ່ງຂໍຄວາມກະຣຸນາຈາກພນະທ່ານ ຈົ່ງໂປດສົ່ງເຈົ້າໜ້າທີ່ຝ່າຍຕຳຣວດ ໄປຮັກສາຄວາມປອດໄພ ໃນພິທີງານສລອງນີ້ໃຫ້ທ່ານດ້ວຍ ຈະເປັນພຣະຄຸນຍິ່ງ./

(ລາຍເຊັນ)

ພະຍາ ອະນຸຣັກ ພັກດີ
(ອຸ່ນເຮືອນ ບໍຣະສິງຫ໌)

ພະຣາຊອານາຈັກລາວ
ໂຮງຮຽນພຣະຣິຍັຕິທັມ
ແຂວງອັຕຕະປື

ວັດຫລວງໃໝ່ອັຕຕະປື
ວັນທີ ໑໗ ກັນຍາ ໑໙໖໔.

ເລຂທີ ໗໑

ຈາກ ຫົວໜ້າໂຮງຮຽນພຣະປຣິຍັຕິທັມ ປະຈຳແຂວງອັຕຕະປື
ເຖິງ ທ່ານຫົວໜ້າຈັດພິທີງານລະລຶກເຖິງວັນເກີດ ຂອງທ່ານທັມມະປາລະ ທີ່ ນະຄອນວຽງຈັນ.

(ໂດຍຜ່ານ ພນະ ຯ ທ່ານທ່ານຣັຖມົນຕຣີກະຊວງທັມມະການ)

ເຣື່ອງ – ຂໍສແດງຄວາມຍິນດີໃນພິທີງານລະລຶກເຖິງວັນເກີດຮອບ ໑໐໐ ປີ ຂອງທ່ານທັມມະປາລະ

ເນື່ອງດ້ວຍໄດ້ຮັບຂ່າວທາງວິທຍຸກະຈາຍສຽງແຫ່ງພະຣາຊອານາຈັກລາວ ໃນວັນທີ ໑໓ ກັນຍາ ໑໙໖໔ ເວລາ ໑໗ ໂມງ ໑໕ ແຈ້ງວ່າ ຈະມີການປະກອບພິທີງານລະລຶກເຖິງວັນເກີດຮອບ ໑໐໐ ປີ ຂອງທ່ານທັມມະປາລະ ຂຶ້ນທີ່ສຳນັກວັດພຸທວົງສາປ່າຫລວງ ນະຄອນວຽງຈັນ ແຕ່ວັນທີ ໑໓ ເຖິງວັນທີ ໒໐ ກັນຍາ ໑໙໖໔ ຂ້າພະເຈົ້າຮູ້ສຶກປີຕິຍິນດີເປັນທີ່ສຸດ ຄນະຄຣູສອນແລະນັກສຶກສາພຣະຈີວ ນັກຮຽນໂຮງຮຽນພະປຣິຍັຕິທັມ ຕລອດພຸທສາສນິກະຊົນໄດ້ຊາບຂ່າວນີ້ແລ້ວ ຕ່າງກໍຮູ້ສຶກຍິນດີແລະຊົມເຊີຍເປັນຢ່າງຍິ່ງ ທັງນີ້ເພາະມາຮູ້ວ່າທ່ານທັມມະປາລະຜູ້ນີ້ ເປັນຜູ້ໄດ້ທຳປະໂຍຊນ໌ແກ່ພຣະພຸທສາສນາເປັນອັນມາກໂດຍຈຳເພາະຂ້າພະເຈົ້າເອງ ໄດ້ໄປເຫັນຮ່ອງຮອຍແຫ່ງການໃຊ້ຊີວິຕຂອງທ່ານ ເຮັດວຽກໃຫ້ພຣະພຸທສາສນາ ທີ່ປະເທສອິນເດັຽຊຶ່ງອາຈເວົ້າໄດ້ວ່າ ເປັນທີ່ສອງຂອງພຣະຍາອະໂສກມະຫາຣາຊ ຄືນອກຈາກຈະຮູ້ຈັກວ່າທ່ານໄດ້ກອບກູ້ຟື້ນຟູແລະເຜີຍແຜ່ພຣະພຸທສາສນາແລ້ວ ຍັງໄດ້ເຫັນທ່ານສ້າງສູນກາງພຸທກິດສະຖານ ເປັນອາຄານ ມີ ຊັ້ນ ຊື່ວ່າທັມມະຣາຊິກະຊາຣິຕິຍະວິຫານ ໄວ້ທີ່ເມືອງກັລກັດຕາສ້າງສາລາເປັນທີ່ພັກຂອງຊາວພຸທທັງຫລາຍ ໄວ້ທີ່ກຳບິນອຸລຸເວລາພຸທຄະຍາແລະໄດ້ສ້າງພຸທສະຖານໃຫ້ເປັນທີ່ສຳລັບບັນພະຊາອຸປະສົມບົທ ຂອງພຸທສາສນິກະຊົນຊື່ວ່າ ມູລະຄັນທະກຸຕິວິຫານໄວ້ທີ່ອິສິປັຕນະມິຄະທາຍະວັນ ເມືອງພາຣານະສີ ປະໄວ້ໃຫ້ຂ້າພະເຈົ້າແລະຊາວພຸທທັງຫລາຍໃນທົ່ວໂລກນີ້ໄດ້ໄປໄຫວ້ພຸທສັງເວຊນີຍສຖານໄດ້ຮູ້ໄດ້ເຫັນ ຍິ່ງເຮັດໃຫ້ຂ້າພະເຈົ້າຮູ້ສຶກເຖິງຄຸນງາມຄວາມດີຂອງທ່ານຫລາຍ.

ການທີ່ທ່ານຫົວໜ້າຈັດການພ້ອມຄນະ ໄດ້ຈັດພິທີລະລຶກເຖິງວັນເກີດຮອບ ໑໐໐ ປີ ຂອງທ່ານທັມມະປາລະ ໃນຄາວນີ້ເປັນການດີຫລາຍ ຂ້າພະເຈົ້າພ້ອມຄນະຄຣູສອນແລະບັນດາພຣະຈົວ ນັກຮຽນຕລອດພຸທສາສະນິກະຊົນທັງຫລາຍ ຂໍສແດງຄວາມປິຕິຍິນດີແລະຊົມເຊີຍຕໍ່ພິທີງານທີ່ທ່ານຫົວໜ້າພ້ອມຄນະໄດ້ຈັດຂຶ້ນນີ້ ດ້ວຍຄວາມບໍຣິສຸດໃຈແລະກະຕັນຍູເປັນຢ່າງສູງ.

ເພື່ອເປັນທີ່ຣະລຶກແລະເພື່ອເປັນກຽຕແກ່ທ່ານທັມມະປາລເອງ ຂ້າພະເຈົ້າໄດ້ຣວບຣວມແລະຂຽນຊີວະປະວັດຫຍໍ້ຂອງທ່ານ ຈຶ່ງໄດ້ຄັດມາພ້ອມນີ້ມາສົມທົບໃນພິທີງານນີ້ດ້ວຍ ຂ້າພະເຈົ້າຂໍສແດງຄວາມເສັຽໃຈ ທີ່ບໍ່ມີວິທີຢ່າງອື່ນອີກມາສົມທົບໃນພິທີງານນີ້ ເພາະເປັນການກະທັນຫັນຫລາຍ.

ສຸດທ້າຍ ພວກຂ້າພະເຈົ້າທັງຫລາຍຂໍອ້ອນວອນໃຫ້ດວງວິນຍານ ຂອງທ່ານທັມມະປາລະຜູ້ໃຊ້ຊີວິຕອັນມີຄ່າເຮັດວຽກພຣະພຸທສາສນາ ເປັນເວລາເຖິງສັຕຕະວັດ ຜູ້ໄດ້ສ້າງກຽດປະວັດຢ່າງໃຫຍ່ຫລວງໄວ້ໃນໂລກຂອງຊາວພຸທ ຜູ້ຍອມອຸທິດຊີວິຕເພື່ອກອບກູ້ຟື້ນຟູພຣະພຸທ-ສາສນາ ໃນດິນແດນອັນເປັນທີ່ເກີດຂອງພຣະພຸທເຈົ້າ ແລະໄດ້ປະຕິສັງຂອນຊ້ອມແປງພຸທສັງເວຊນິຍະສຖານ ເພື່ອຮັກສາປະວັດສາດແລະຄວາມສຳຄັນຂອງພຣະພຸທສາສນາໄວ້ ອັນເປັນວຽກການທີ່ເປັນປະໂຍຊນ໌ຢ່າງຍິ່ງໃຫຍ່ ແກ່ບັນດາຊາວພຸທທັງຫລາຍທົ່ວໂລກໃນປັດຈຸບັນນີ້ ສະຖິດຢູ່ໃນທີ່ສຸຄະຕິ ຕລອດກາລະນານ ເທີ້ນ.

ຂໍຊາວພຸທ, ຊາວໂລກ ແລະສັພະສັດທີ່ມີລົມຫາຍໃຈທັງປວງ ຈົ່ງໄດ້ຮັບຄວາມສງົບສຸກເທີ້ນ.

ຫົວໜ້າໂຮງຮຽນພະປຣິຍັດຕິທັມ.

(ລາວເຊັນ:)

ພຣະຫລັກຄຳທັມມະສາດໂກວິທ (ບຸກເພັງ)



ລົ້ນເຫລືອ ຈາກ ຕັ່ງອື້
ບັນດາ ພຸທບໍຣິສັດ
ທັງຫລາຍ ໄດ້ນັ່ງ
ຕາມພື້ນຢ່າງສະດວກ
ສະບາຍ.

ນາງພອພິດ ນັກຮຽນໂຮງຮຽນ ວັນອາທິດ
ສຳນັກພຸທວົງສ໌ ກຳລັງສະແດງປາຖະກະ
ຖາທັມມະໃນວັນພິທີສລອງທັມມະປາລະ



ບັນທຶກປະຈຳວັນ

ໃນພິທີສລອງວັນເກີດຄົບຮ້ອຍປີ

ຂອງ

ທ່ານອະນາຄາຣິກະທັມມະປາລະ

ໂດຍ........ສ. ໄຊຍະວົງສ໌

໑໗ ກັນຍາ ໑໘໖໔ (ວັນເກີດຈິງ)

ໂດຍເຫດທີ່ທ່ານອະນາຄາຣິກະທັມມະປາລະ ຜູ່ເປັນຊາວພຸທທຍິ່ງໃຫຍ່ຂອງໂລກພຣະພຸທສາສນາຍຸຄປັຈຈຸບັນ ແລະເປັນຫນີ້ບຸນຄຸນຊາວພຸທໃນທົ່ວໂລກ ຍາກທີ່ຈະຫາໃຜທຽບທັນດັ່ງນັ້ນ ຄະນະກັມການອົງຄ໌ການພຸທທວົງສ໌ ຈຶ່ງໄດ້ມີຄວາມປີຕິຍິນດີເຫັນເປັນເອກສັນທ໌ຈັດໃຫ້ມີການສລອງຂຶ້ນ ດັ່ງກຳຫນົດການທີ່ກ່າວແລ້ວເບື້ອງເົ້ນນັ້ນ ຈຳເພາະມື້ນີ້ອັນເປັນວັນທຳອິດແລະເປັນວັນຄ້າຍວັນເກີດຈິງຂອງທ່ານທັມມະປາລະແຕ່ຂ້ອນແຈ້ງມາຫລັງຈາກກິຈຈວັດຕືການ ສູດມົນຕ໌ເຊົ້າຂອງພຣະສົງສາມເນນແລະອຸປາສົກອຸປາສິກາແຫ່ງສຳນັກວັດປ່າຫລວງ ສັ່ງສຸດລົງແລ້ວຕາມບໍຣິເວນພື້ນດິນກວ້າງໃຫຍ່ຂອງວັດອັນປົກຄຸມຫມັ້ນບັງດ້ວຍຣຸກຂະຊາດນານາພັນ ກໍໄດ້ຮັບການປັດກວາດດັດແປງໃຫ້ມີຄວາມສະອາດງົດງາມ ເຊິ່ງທຸກຄ້ວນຫນ້າພິກຂຸສາມເນນແລະອຸປາສົກອຸປາສິກາ ຕ່າງກໍຊ່ວຍເຫລືອຈັດແຈ່ງຕາມຫນ້າທີ່ໃຜລາວດ້ວຍຄວາມເອົາໃຈໃສ່ແລະຍິນດີສຸດທະຍິ່ງ ທີ່ສຳນັກງານພຸທທວົງສ໌ແລະທີ່ທັມມະສາລາຫລັງໃໝ່ ໄດ້ມີການຕົບແຕ່ງດ້ວຍທຸງທິວ ທຸງພຣະພຸທສາສນາແລະທຸງຊາດຄູ່ສັບກັນໄປ ຕາມຝາຜນັງ ກົກເສົາ ໄດ້ມີແຜ່ນແປ້ນປະມານ ໑໒ X ໓" ຫ້ອຍໄວ້ອຽງລາຍປາຍກັນຢູ່ ແຜ່ນແປ້ນນັ້ນ ທາພື້ນສີຟ້າ ໂຕຫນັງສືສີຂາວ ຂຽນຄະຕິທັມຄະຕິເຕືອນໃຈ ໃຫ້ຄົນລະຊົ່ວປະພຶດດີ ໃຫ້ວຸຫມັ່ນຫັນແຮງໃຫ້ມີຄວາມກະຕັນຍູກະຕະເວທີ ລ ຯ

ເປັນທີ່ໜ້າຍິນດີຍິ່ງກໍຄື ຕາມແຈຕ່າງໆ ໄດ້ຕິດຕັ້ງຮູບສັງເວຊະນີຍະສະຖານທັງສີ່ ຄືທີ່ປະສູດ ຕຣັສຮູ້ ສແດງປະຖົມເທສນາແລະສະເດັດປະຣິນິພພານ ຮູບປະວັດພຣະພຸທອົງໃນປາງຕ່າງໆ ໂດຍສະເພາະດ້ານຂວາ ຂອງພຣະປະທານແທ່ນບູຊາ ໄດ້ມີຮູບພາບຂອງທ່ານອະນາຄາຣິກະທັມມະປາລະຊຽນຂຍາຍອອກໂດຍຈິຕກຣຂອງອົງຄ໌ການພຸທວົງສ໌ ຄືທ້າວບຸນມີ, ຮູບພາບນີ້ ໄດ້ມີການຕັ້ງອ່ວາຍໜ້າໄປຫາພຣະພຸທຮູປ ແລະມີພວງດອກໄມ້ອ້ອມຂອບປະດັບທູບທຽນ ຖືກໄດ້ບູຊາ ຄວັນຟຸ້ງສວ່າງສໄວຢູ່ຕລອດການ ເຊິ່ງພາບນີ້ໄດ້ເປັນເຄື່ອງສະດຸດຕາສະດຸດໃຈຂອງບັນດາແຂກຜູ້ເຂົ້າຮ່ວມໃນງານເປັນພິເສສ.

ເວລາ ໑໗ ໂມງ ພິທີສູດປະຣິຕຕະມຸງຄຸລ ຖວາຍກຸສົລແດ່ທ່ານອະນາຄາຣິກະທັມ–ມະປາລະ ກໍໄດ້ເຣີ່ມຂຶ້ນຕາມພິທີທາງພຣະພຸທສາສນາ ໂດຍມີພຣະຄຣູຄູນມຸນີວົງສ໌ ອະດີດປະທານອົງຄ໌ການສົງຄ໌ເປັນປະທານ ບັນດາພຸທບໍຣິສັດທັງຊາຍຍິງ ເຖົ້າແກ່ແລະບ່າວສາວ ໄດ້ມາເຕົ້າໂຮມກັນ ທີ່ທັມມະສາລາປະມານ ໖໐໐ ກວ່າຄົນຫລັງຈາກພິທີສ້ຽງສຸດລົງແລ້ວ ກໍໄດ້ມີການສແດງທັມມະກະຖາ ສົນທະນາທັມມະ

ຈົນຮອດເວລາ ໒໔ ໂມງ ຈຶ່ງເລີກການປະຊຸມ.

ສຸໂຂ ພຸທທານະມຸປປາໂທ

ການເກີດຂຶ້ນຂອງນັກປາຊຍ໌ບັນດິດ ຢ່າງພຣະພຸທເຈົ້າ ເປັນການນຳຄວາມສຸຂມາໃຫ້ໂລກ

ວັນທີ ໑໘ ກັນຍາ ໑໙໖໔

ນີ້ນີ້ເປັນວັນທີສອງຂອງພິທີງານສລອງ ພຸທບໍຣິສັດໂດຍການອວານທາງຂອງອົງຄ໌ການພຸທວົງສ໌ ໄດ້ຈັດແຈ່ງ ພັດຕາຫານຖວາຍ ພຣະພິກຂຸສົງຄ໌ ໖໙ ຮູບ ຊຶ່ງມີອາດຍາທັມເຈົ້າພຣະຄຣູຄູນມຸນີວົງສ໌ ວັດພຣະທາຕຸຫລວງເໜືອວຽງຈັນທນ໌ ເປັນປະທານ, ຫລັງຈາກຈາກພໍ່ອອກແມ່ອອກ ທຳພິທີບູຊາພຣະຣັຕນະຕັຍ ໄຫວ້ພຣະແລະຮັບສີລຫ້າສີລແປດແລ້ວກໍໄດ້ສູດຖວາຍພອນພຣະ (ຄືສູດພາຫຸງ) ຂະນະດຽວກັນນັ້ນ ບັນດາທ່ານພຸທບໍຣິສັດ ກໍໄດ້ທຳພິທີໃສ່ບາດ ທີ່ວາງລຽນກັນໄວ້ເປັນຖັນແຖວ

ຈາກນັ້ນພຣະອາຈານຍ໌ມະຫາປາລ ອານັນໂທ ໄດ້ສະແດງພຣະທັມມະເທສນາ ນຶ່ງ

ກັນທ໌ໃນຫົວເຣື່ອງວ່າຣູປັງ ຊີຣະຕິ ມັຈຈານັງ ນາມະໂຄຕັງ ນະຊີຣະຕິ "ຮູບຮ່າງຂອງຄົນສູນສລາຍໄປໄດ້ ແຕ່ສິ່ງທີ່ບໍ່ສູນສລາຍໄປແມ່ນກຽຕິຄຸນຄວາມດີ" ໃນພຣະທັມມະເທສນານັ້ນ ພຣະອາຈາຣຍ໌ມະຫາປາລອານັນໂທ ໄດ້ກ່າວເນັ້ນເຖິງຄຸນຄວາມດີທີ່ທ່ານ ອະນາຄາຣິກະທັມມະປາລະໄດ້ປະກອບໃຫ້ແກ່ໂລກຫລາຍດ້ານຫລາຍປະການ ໂດຍສະເພາະແມ່ນການຕໍ່ສູ້ກູ້ເອົາສັງເວຊະນີຍະສະຖານທັງສີ່ໃຫ້ກັບຄືນມາເປັນມູລມໍຣະດົກຂອງຊາວພຸທອີກຈົນໄດ້ ການທີ່ເຮົາຊາວລາວຕ້ອງພາກັນເຮັດບຸນບູຊາທ່ານທັມມະປາລະໃນມື້ນີ້ ກໍແມ່ນປ້ອນພວກເຮົາພາກັນຄິດເຖິງບຸນຄຸນຂອງຜູ້ມີຄຸນນັ້ນເອງ ເຖິງແມ່ນເພິ່ນຜູ້ນັ້ນ ຈະເປັນຄົນປະເທສອື່ນ ທີ່ເຮົາບໍ່ເຄີຍຮູ້ຈັກໜ້າຕາກໍຕາມ ແຕ່ເຮົາກໍຮູ້ຈັກເພິ່ນໄດ້ດີ ໃນຖານະທີ່ເພິ່ນເປັນ "ໂຕແທນຊາວພຸທ" ໄປຕໍ່ສູ້ກອບກູ້ມໍຣະດົກຮວມຂອງພຸທສາສນາແລະໄປຟື້ນຟູພຣະພຸທສາສນາໃຫ້ກ້າວກຸ່ງຮຸ່ງເຣືອງຂຶ້ນອີກໃນໂລກ ມີຜົນສົ່ງມາຮອດເຮົາທຸກມື້ນີ້ ..."

ເມື່ອເທສນາສຸດແລ້ວ ກໍໄດ້ທຳພິທີຖວາຍແຈກພັດຕາຫານແກ່ພຣະສົງຄ໌ ເສັດແລ້ວກໍລ້ຽງອາຫານແບບກັນເອງຣະຫວ່າງພໍ່ອອກແມ່ອອກ ດ້ວຍຄວາມຮັກແພງສນິດສນົມເປັນຢ່າງດີ ຜູ້ໄປຮ່ວມພໍ່າເພັງກອງການກຸສົລໃນມື້ນີ້ ທີ່ພິເສສຈາກພຸທບໍຣິສັດທົ່ວໄປປະມານ ໓໐໐ ກວ່າຄົນ ແລ້ວກໍມີ: ພະນະທ່ານແກ້ວ ວິພາກຣ ຣັຖມົນຕຣີຊ່ວຍວ່າການກະຊວງປະຊາສົງເຄາະຫ໌ ທ່ານນາຍພົລ ສັງ ຮອງເສນາທິການກອງທັບແຫ່ງຊາດ ຝ່າຍເສດຖະກິຈແລະສັງຄົມ ທ່ານ ພ. ຕ. ອ. ເລື່ອນ ວິໄລຫົງສ໌ ເລຂາທິການອົງຄ໌ການພຸທວົງສ໌, ທ່ານຫຸມແພງ ປະທຸມວັນ ອະທິບໍດີກົມປະຊາສົງເຄາະຫ໌, ທ່ານລ້ຽງ ອິນສີຊຽງໃໝ່ ຫົວໜ້າສ່ວນສາອາກຣ ທ່ານມະຫາບຸຕຕຣີ ຊາເນຕວິໄລ ທີ່ປຶກສາກົມວິທະຍຸກະຈາຍສຽງ ທ່ານຍາພໍ່ພາຍ ຊະນະນິກຣ, ທ່ານຍາພໍ່ໄຫລ່ ວິໄລຫົງສ໌, ທ່ານຍາພໍ່ຄຳສີ ທ່ານມະຫາຣົງສີ ຍາພໍ່ເສັງ ໄຊສົງຄາມ ທ່ານຍາແມ່ເພັ້ງດວງຈັນທ໌ ຊົງວິໄລ ແລະພຸທບໍຣິສັດທັງຫລາຍ..ຯ

ຕອນແລງ ເວລາ ໑໗ ໂມງ ພິທີສູດປະຣິຕຕະມຸງຄົລ ອຸທິສສ່ວນກຸສົລແດ່ທ່ານ ອະນາຄາຣິກະທັມມະປາລະ ເປັນປະຈຳວັນ ກໍໄດ້ຖືກຈັດຂຶ້ນ ຄື່ດັ່ງວັນວານ ດ້ວຍຄວາມສຳເຣັດຮຽບຮ້ອຍເປັນຢ່າງດີ ຯ

ພຸທບໍຣິສັດ ໔ ພິກຂຸ ພິກຂຸນີ ອຸປາສົກ ອຸປາສິກາ ມີສ່ວນຮັບຜິດ
ຊອບຕໍ່ຄວາມເສື່ອມຄວາມຈເຣີນ ຂອງພຸທສາສນາທ່ຽມກັນເດີ !

ວັນທີ ໑໙ ກັນຍາ ໑໙໖໔

ມື້ນີ້ເປັນວັນທີສາມຂອງກາຣສລອງວັນເກີດຄົບຮ້ອຍປີ ຂອງທ່ານທັມມະປາລະ ຄນະກັມມະກາຣໄດ້ຈັດໃຫ້ມີກາຣສະແດງກິຈກາຣຂອງອົງກາຣທາງພຣະ ພຸທສາສນາທີ່ດຳເນີນຢູ່ໃນພຣະຣາຊອານາຈັກລາວ ທີ່ສຳຄັນແລະຄວນທີ່ຈະໃຫ້ປະຊາຊົນໄດ້ຮູ້ໄດ້ເຫັນ ແລະໃນທະນາບຳ ກໍຄື:

- ກາຣສະແດງກິຈກາຣຂອງສະພາທັມມະກະຖຶກ
- ກາຣສະແດງກິຈກາຣຂອງໂຮງຮຽນອົບຮົມສີລທັມວັນອາທິດ

ຕັ້ງແຕ່ເວລາ ໘-໙ ໂມງເຊົ້າເປັນຕົ້ນໄປ ໃນຝ່າຍອອກດົນບາດໂຍມ ໄດ້ມີກາຣກະກຽມເຄື່ອງພັດຕາຫາຣເປັນພິເສສ ເພາະໄດ້ຊາບຂ່າວວ່າມື້ນີ້ ມີພຣະສົງສາມເນນທີ່ໄດ້ຮັບນິມົນຕ໌ມາສັນໃນງານປະມານ ໓໐໐ ກວ່າອົງຄ໌ ຄືພວກພຣະພິກຂຸທີ່ເປັນສະມາຊິກສະພາທັມມະກະຖຶກ ໓໐ ກວ່າຕົນ ພ້ອມກັບຫົວໜ້າອາຈາຣຍ໌ສອນແລະສິນນະນິສິດ ຈາກໂຮງຮຽນປາລີຊັ້ນສູງວັດວັດອົງຄ໌ຕື້ປະມານ ໒໐໐ ກວ່າຕົນ ຫລັງຈາກສັນພັດຕາຫາຣເພລໃຫ້ສົນພຣະເປັນທີ່ຮຽບຮ້ອຍແລ້ວ ກິຈກາຣສະພາທັມມະກະຖຶກກໍໄດ້ເປີດຂຶ້ນ ທີ່ເດີນຟັງປາກະຖາ ພຸທວົງສ໌ເມື່ອເວລາ ໑໓ ໂມງ ໓໐ ນາທີ ໂດຍພຣະອາຈາຣຍ໌ມະຫາປາລ ອານັນໂທ ເປັນຜູ້ກ່າວໄຂກາຣປະຊຸມແລ້ວ ພຣະມະຫາຄຳແພງ ແສງສວ່າງ ເລຂານຸກາຣສະພາທັມມະກະຖຶກ ກ່າວຣາຍງານກິຈກາຣຂອງສະພາຕັ້ງແຕ່ທຳອິດ ຕາມຄຳຮ້ອງຂໍຂອງກະຊວງທັມມະກາຣຄະນະກັມມະກາຣກ່ຽວກັບກິຈກາຣສະພາທັມມະກະຖຶກນີ້ ກໍເລີຍໄດ້ຖືກຈັດຕັ້ງຂຶ້ນ ຕາມດຳຣັດອັຖມົນຕຣີກະຊວງທັມມະກາຣ ເລຂທີ່ ໒໗ / ທກ ກປ ວັນທີ ໒໗ ມີນາ ໑໙໖໒ ໂດຍມີພຣະຫລັກຄຳແກ້ວຂັນຕີໂກ ເຈົ້າຄນະແຂວງ ແຂວງວຽງຈັນທນ໌ເປັນປະທານ ພຣະອາຈາຣຍ໌ມະຫາປາລ ອານັນໂທ ເປັນປະທານກັມມະກາຣທຳກາຣແອບເຝິກ ພຣະມະຫາຄຳແພງ ແສງສວ່າງເປັນເລຂານຸກາຣຄະນະກັມມະກາຣ ແລະກັມມະກາຣສະພາທັມມະກະຖຶກກໍໄດ້ດຳເນີນກາຣຕລອດມາແຕ່ບັດນັ້ນ ຂະນະນີ້ມີສະມາຊິກທີ່ເຂົ້າຮັບກາຣອົບຮົມຈຳນວນຫລາຍຂຶ້ນໂດຍລຳດັບຜາກົດວ່າກາຣດຳເນີນງານໄດ້ຮັບຜົລສຳເຣັດເປັນຢ່າງດີ ສະມາຊິກຫລາຍອົງມີຄວາມສາມາດໃນກາຣເທສນາປາກົດແກ່ທ່ານຜູ້ຟັງແລ້ວ ເຖິງກິຈກາຣຂອງສະພາທັມມະກະຖຶກຍັງບໍ່ກ້າວໄປໄດ້ໄກແລະກວ້າງຂວາງຕາມທີ່ຄວນ ແຕ່ກໍຫວັງວ່າຄົງຈະໄດ້ຮັບຄວາມເຂົ້າໃຈແລະສນັບສນຸນກິຈກາຣນີ້ຈາກ

ທ່ານທັງຫລາຍໃນໂອກາສຕໍ່ໄປເປັນຢ່າງດີ ດັ່ງນັ້ນ ເພື່ອສະແດງໃຫ້ທ່ານພຸທບໍຣິສັດທັງຫລາຍ ຊາບເຖິງຜົລການສຶກສາອົບຮົມແລະຄວາມສາມາດຂອງສະມາຊິກທັມມະກະຖຶກໃນລາງດ້ານ ຈຶ່ງໄດ້ຈັດໃຫ້ມີຣາຍການພິເສສຂຶ້ນໃນມື້ນີ້ ເປັນເຄື່ອງຣະລຶກຖຶງ ທ່ານອະນາຄາຣິກະທັມມະປາລະ...

ຫລັງຈາກນັ້ນ ພຣະມະຫາທອງຄູນ ຕຸຕຖະທັມໂມ ອາຈາຣຍ໌ຜູ້ໃຫ້ການອົບຮົມສະພາທັມມະກະຖຶກ ໄດ້ຖືກນິມົນຕ໌ເປັນປະທານເປີດຣາຍການຕໍ່ໄປ ດັ່ງນີ້:

ການສະແດງປາຖະກະຖາທັມມະ

– ເຣື່ອງ "ຊາດກັບສາສນາ" ໂດຍ ພຣະມະຫາສຸກັນ ປ. ໗

– ,, "ກະຕັນຍູກະຕະເວທີ" ,, ພຣະມະຫາສົມລົດ ມະຫິນທິຍາໂນ ປ. ໓

ການສົນທະນາທັມມະ

,, "ປັນຍາດີກວ່າຊັບ" ຝ່າຍສເນີ ໕ ອົງຄ໌ ຝ່າຍຄ້ານອີກ ໕ ອົງຄ໌ ໂຮມເປັນ ໑໐ ອົງຄ໌.

ການສະແດງກິຈການໂຮງຮຽນອົບຮົມສີລທັມວັນອາທິດ

ໃນຣາຍການນີ້ ໄດ້ຈັດໃຫ້ມີສອງພແນກຄື:

– ການບັນຣະຍາຍທັມມະມີຜູ້ບັນຣະຍາຍ ຈາກສຳນັກພຸທວົງສ໌ຄື: ທ້າວເວັງຣະວັນ ບັນຣະຍາຍເຣື່ອງ "ເດັກນ້ອຍ ກັບພຣະພຸທະສາສນາ. ນາງພຣພິດ ສະແດງເຣື່ອງ ທັມມະກ່ຽວກັບຊີວິດປະຈຳວັນຢ່າງໃດ"

– ການຕອບປັນຫາທັມມະແລະພຸທປວັດ: ໃນການນີ້ເດັກນ້ອຍຈາກສຳນັກພຸທວົງສ໌ແລະຈາກສ່າວັກວັດທົວເມືອງ ໄດ້ຜັດປ່ຽນກັນຕອບ ທັງຊາຍແລະຍິງ ເຊິ່ງເດັກນ້ອຍຫລາຍຄົນ ໄດ້ສະແດງຄວາມສາມາດດ້ານສັງຄົມ ດ້ານສະຕິປັນຍາອອກໃຫ້ປາກົດແກ່ສາທາຣະນະຊົນ ໄດ້ເປັນຢ່າງດີ ເປັນໜ້າພາກພູມໃຈ ສຳລັບເຮົາຜູ້ເປັນພໍ່ແມ່ນຳພາເຂົາ ຫາກແມ່ນຍຸວະຊົນຂອງຊາດລາວເຮົາໄດ້ຮັບການປັບປຸງສົ່ງເສີມໃຫ້ຖືກທາງ ແຕ່ຍັງນ້ອຍແລ້ວເຊື່ອແນ່ວ່າ ອະນາຄົດອັນສຸກໃສຂອງຊາດລາວເຮົາ ຕ້ອງປາກົດເປັນຄວາມຈິງຂຶ້ນໂດຍບໍ່ຕ້ອງສົງສັຍ.

ຫລັງຈາກການຕອບປັນຫາສຸດລົງແລ້ວ ທ່ານ ພ.ຕ.ອ. ເລື່ອນ ວິໄລຫົງສ໌ ເລຂາທິການ

ພຸທວົງສ໌ ໄດ້ໃຫ້ກຽດເປັນປະທານແຈກຣາງວັລແກ່ເດັກນ້ອຍ ທີ່ໄດ້ສະແດງຄວາມສາມາດໃນເທື່ອນີ້ໂດຍທົ່ວກັນ ເປັນຕົ້ນວ່າເຂົ້າໜົມຫວານ ປຶ້ມແລະສໍຊຽນ ແລ້ວມີກາຣຮ້ອງເພັງສໍຣະເສີນພຸທຄຸນ ອັດຣາຍກາຣ

ຄນະກັມະກາຣຈັດຣາຍກາຣນີ້ແມ່ນພຣະມະຫາຄຳເກີ້ງ ຣາຊບຸດ ພ. ທບ. ແລະພຣະມະຫາຄຳພຸຍ ໄຊສວັສດິ ພ. ທບ. (ຈາກມະຫາຈຸລາລົງກຣນ໌ຣາຊວິທຍາລັຍ ມະຫາວິທຍາລັຍພຣະພຸທະສາສນາແຫ່ງປະເທສໄທ) ເປັນຜູ້ຈັດກາຣດ້ວຍຄວາມເອົາໃຈໃສ່ເປັນພິເສດ

ຕອນແລງ ເວລາ ໑໗ ໂມງ ກໍໄດ້ມີພິທີສູດປະຣິຕຕະມຸງຄຸນ ອຸທິສສ່ວນກຸສົລແດ່ທ່ານທັມມະປາລະອີກຄືດັ່ງວັນກ່ອນ ພິທີໄດ້ສ້ຽງສຸດດ້ວຍຄວາມຮຽບຮ້ອຍເປັນທີ່ໜ້າໂມທະນາສາທຸກາຣຍິ່ງ ./

<u>ວັນອາທິດທີ່ ໒໐ ກັນຍາ ໑໙໖໔</u>

ໃນພິທີສລອງວັນເກີດຄົບຮ້ອຍປີຂອງທ່ານອະນາຄາຣິກະທັມມະປາລະ ທີ່ທາງອົງຄ໌ກາຣພຸທວົງສ໌ ພ້ອມດ້ວຍພຸທບໍຣິສັດທັງພາຍໃນແລະພາຍນອກໄດ້ຈັດຂຶ້ນທີ່ພຣະນະຄອຣວຽງຈັນທນ໌ ຈຳເພາະມື້ນີ້ ວັນທີ່ ໒໐ ກັນຍາ ນະເດີ່ນສຳລັບເປັນບ່ອນປະຊຸມ ຟັງປາຖະກະຖາ ຯ ລ ຯ ຂອງສຳນັກພຸທວົງຄ໌ ອັນລາດສະອາດງົດງາມດ້ວຍຊີມັງປະມານ ໒໐໐໐ ແມດກາເຣ ມີກົກໄມ້ນານາຊນິດ ເຊັ່ນຕົ້ນໝາກໄຟ ຕົ້ນໝາກແຫວ ຕົ້ນໝາກມ່ວງ ກໍໄລ່ແລະກໍບົງ ຯ ລ ຯ ຮຽງຣາຍກັນເປັນສເມືອນເສົາ ແລະທອດກ້ານງ່າສາຂາ ອອກໃບຂຽວສົດສລ້າງ ເປັນເຄື່ອງແທນກະເບື້ອງສັງກະສີມຸງບັງແດດແລະຝົນ (ແຕ່ເປັນຈັ່ງບຸນຝົນບໍ່ຕົກ)ໄດ້ຖືກປະດັບຕົບແຕ່ງດ້ວຍທຸງທິວແລະໄຟປ່າງງົດງາມເປັນພິເສສ ມີແຜ່ນແປ້ນຄະຕິທັມ ທາພື້ນສີຟ້າ ໂຕໜັງສືສີຂາວ ຫ້ອຍປາຍປັ່ງກັນຢູ່ຕາມໂຄນກົກໄມ້ນານາຊະນິດນັ້ນ ເປັນເຄື່ອງເຕືອນສະຕິ ເຕືອນໃຈຜູ້ໄປຮ່ວມໃນງານ ນອກນັ້ນກໍມີຮູປພາບສັງເວຊະນີຍະສະຖານທັງສີ່ ຮູປທີ່ກ່ຽວກັບປະເທສອິນເດັຽ ແລະທາງພຣະພຸທສາສນາ ທີ່ໄດ້ຮັບຄວາມຮ່ວມມືດ້ວຍດີຈາກທາງສະຖານເອກອັຄຣາຊທູດອິນເດັຽ ຈັດຫາມາໃຫ້ວິດຕັ້ງເປັນທິວແຖວສງ່າງາມເຊິ່ງພາບແຫ່ງສະຖານທີ່ປະຊຸມໃນວັນນັ້ນ ຍາກເຫລືອເກີນທີ່ຂ້າພະເຈົ້າ ຜູ້ເປັນລາວ ແຕ່ຮູ້ພາສາລາວໜ້ອຍໆ ນີ້ຈະນຳ

ມາບັນຣະຍາຍອອກເປັນພາສາໃຫ້ທ່ານເຂົ້າໃຈໄດ້ພໍພຽງ ນອກຈາກທ່ານຈະໄດ້ເຫັນດ້ວຍຕາ ຕົນເອງເທົ່ານັ້ນ

ເມື່ອຄຶດສາວຫາອະດີຕກາລ ທີ່ສົມເດັດພຣະບໍຣົມສາສດາສັມມາສັມພຸທເຈົ້າ ຍັງຊົງສະເດັດໂຜດສັຕໂລກຢູ່ໃນຊົມພູທະວີບປາງນັ້ນ ສຖານທີ່ຊົງໃຊ້ເປັນບ່ອນພໍາເພັງພຸທກິຈກໍແມ່ນ ເປັນປ່າ ເປັນແດນສງົບທັງນັ້ນທີ່ເຫັນໄດ້ຄັກແນ່ ກໍຄື ບ່ອນຊົງປະສູຕ (ປ່າລຸມພິນີ) ບ່ອນຊົງຕຣັສຮູ້ເປັນພຸທເຈົ້າ (ກ້ອງຕົ້ນໂພທິ) ບ່ອນຊົງສະແດງທັມມະຈັກຣ໌ (ປ່າອິສິປຕະນະມິຄະທາຍະວັນ) ບ່ອນສະເດັດປະຣິນິພພານ (ປ່າໄມ້ສາລະ)

ດັ່ງນັ້ນການທີ່ພຣະພິກຂຸສົງສມັຍນີ້ ເຖິງແມ່ນວິທຍາສາດຈະເຈີນ ແຕ່ກໍຍັງນິຍົມໃຊ້ຮົ່ມໄມ້ແນວປ່າເປັນບ່ອນພໍາເພັງພາວະນາ ແລະສາທາຣະນະປະໂຍຊນ໌ອື່ນ ໆ ທາງພຣະພຸທສາສນາ ຊຶ່ງເປັນການຈໍາເຣີນຮອຍບຸຄົລບາທຂອງສົມເດັດພຣະສັມມາສັມພຸທເຈົ້າຂອງເຮົາໂດຍແທ້ ແລະເປັນການຖືກຕ້ອງຕາມຫລັກອະນາມັຍຂອງສມັຍວິທຍາສາດນີ້ນໍາດ້ວຍ ຍິ່ງກວ່ານັ້ນ ຍັງເປັນການຊ່ວຍຮັກສາແນວໄມ້ໄວ້ໃຫ້ເປັນປະໂຍຊນ໌ແກ່ໂລກໃນດ້ານອື່ນ ໆ ອີກນໍາ

ນີ້ວັນທີ ໒໐ ກັນຍານີ້ ເປັນວັນສຸດທ້າຍ ມີຣາຍການພິເສສຄື ພຣະມຫາກ້າວ ພຸທະໂຄສະໂກ ປ. ໙ ເອັມ. ເອ. ຊຶ່ງສໍາເຣັດການສຶກສາຈາກປະເທສອິນເດັຍ ໄດ້ສະແດງປາຖະກະຖາໃນເຣື່ອງວ່າ “ຊີວະປວັດຂອງທ່ານອະນາຄາຣິກະທັມມະປາລະ” ແລະ ທ່ານ ພ.ຕ.ອ. ເລື່ອນ ວິໄລທັງສ໌ ເລຂາທິການພຸທວົງສ໌ ໄດ້ສະແດງຄວາມຍິນດີລົ້ນເຫລືອຕໍ່ທ່ານທັມມະປາລະໂດຍການກ່າວສະດຸດີ (ສັຣະເສີນ) ໃນຫົວເຣື່ອງວ່າ “ງານກູ້ພຸທທະຍາ ຂອງທ່ານທັມມະປາລະ” ການທີ່ທ່ານຜູ້ມີກຽດຝ່າຍຄະຫັຖ ຢ່າງທ່ານ ພ.ຕ.ອ. ເລື່ອນ ວິໄລທັງສ໌ ມີຄວາມສົນໃຈ ມີຄວາມຮູ້ທາງພຣະພຸທສາສນາແລະສາມາດສະແດງໃຫ້ພາກົດໄດ້ເປັນຢ່າງດີຍິ່ງນີ້ ໄດ້ກໍໃຫ້ເກີດຄຸນູປະການຢ່າງຍິ່ງແກ່ຂບວນການເຄື່ອນໄຫວ ດ້ານສີລທັມຂອງສັງຄົມໂລກ ໂດຍສະເພາະໃນຍຸຄປັຈຈຸບັນນີ້

ບັນດາແຂກທູດານຸທູຕຕ່າງປະເທສແລະແຂກຜູ້ມີກຽດທັງພາຍໃນ ແລະ ນອກປະເທສທັງຝ່າຍຄະຫັຖແລະບັພພະຊິດ ກໍໄດ້ຫລັ່ງໄຫລກັນເຂົ້າມາສູ່ສະຖານທີ່ປະຊຸມ ດ້ວຍອາການຊົມຊື່ນຍິນດີ; ດ້ານຕາເວັນອອກແມ່ນບ່ອນນັ່ງສໍາລັບພຣະພິກຂຸສາມເນນ ມີທັງເຄື່ອງລະໂອງແລະຕັ່ງອີເຫລັກທັມມະດາ ດ້ານຕາເວັນຕົກ ແມ່ນສໍາລັບພວກຄະຫັຖ ໂດຍແຂກຜູ້ມີກຽດ

24/VII

ທູຕານຸທູດ ໄດ້ຖືກເຊີນໃຫ້ນັ່ງວ່າງກາງ ຕໍ່ໜ້າໂຕ໊ະໝູ່ບູຊາພຣະປະທານ ເຊິ່ງຫ້ອມລ້ອມດ້ວຍພຣະບໍຣົມສາຍາລັກສ໌ຂອງພຣະບາທສົມເດັດພຣະເຈົ້າມຫາຊີວິດ ພຣະສາຍາຂອງອົງຄ໌ສົມເດັດພຣະສັງຄະຣາຊ ແລະທີ່ປະທັບຕຶງໃຈຂອງຄົນເປັນທີ່ສຸດ ແມ່ນຮູປພາບຂນາດ ໒໔ ນີ້ວ ຊຶ່ງວາດຂຍາຍຈາກຮູປຖ່າຍຈິງ ຂອງທ່ານ ອະນາຄາຣິກະທັມມະປາລະ ໂດຍນາຍຊ່າງຂອງພຸທວົງສ໌ໄດ້ຖືກໃສ່ຂອບຕິດຕັ້ງປີ້ນໜ້າຕໍ່ພຣະພຸທປະທານ ຫ້ອມລ້ອມບູຊາດ້ວຍພວງດອກໄມ້ ທູບທຽນ ຢ່າງສງ່າງາມ

ໃນບັນດາທ່ານພຸທບໍຣິສັທ ກວ່າ ໑໗໐໐ ຄົນທີ່ຮ່ວມໃນງານສລອງນີ້ ທ່ານຜູ້ມີກຽດ ທີ່ປວັດສາດທາງພຣະພຸທສາສນາຣະວ່າງຊາດຈະໄດ້ບັນທຶກໄວ້ຢ່າງ ພາກ ພູມນັ້ນກໍມີອາທິ ພະນະທ່ານນາຍພິລພູມີ ໜໍ່ສວັນ ຮອງນາຍົກຣັຖມົນຕຣີ ຣັຖມົນຕຣີກະຊວງການຄັງ ຜູ້ຮັກສາການນາຍົກຣັຖມົນຕຣີ, ພະນະທ່ານພະຍາອຸ່ນເຮືອນ ນໍຣະສິງຫ໌ ຣັຖມົນຕຣີກະຊວງທັມມະການ, ພະນະທ່ານບົວວັນ ນໍຣະສິງສ໌ ຣັຖມົນຕຣີກະຊວງຍຸຕິທັມ, ພະນະທ່ານແກ້ວ ວິພາກຣ ຣັຖມົນຕຣີຜູ້ຊ່ວຍກະຊວງປະຊາສົງເຄາະຫ໌, ພະນະທ່ານໄຕ ແກ້ວຫລວງໂຄດ ຣັຖມົນຕຣີຊ່ວຍກະຊວງສຶກສາສິລປາກຣແລະກິລາຍຸວະຊົນ, ທ່ານນາຍພິລສັງ ຮອງເສນາທິການຝ່າຍເສດຖະກິຈແລະສັງຄົມກອງທັບແຫ່ງຊາດ, ພະນະທ່ານຈະຣູນພັນ ອິສຣາງກູຣ ນະອະຍຸທຍາ ເອກອັຄຄະຣາຊທູຕໄທປະຈຳລາວ ພ້ອມດ້ວຍຄະນະ, ທ່ານ ສ. ສັດທາຊີວັນ ຜູ້ຊ່ວຍທູດຝ່າຍວັທນະທັມສະຖານເອກອັຄຄະຣາຊທູດອິນເດັຽປະຈຳລາວ ແລະພະຣິຍາ, ທ່ານອີວານສ໌ ຫົວໜ້າມູລນິທິອາຊີປະຈຳລາວ ທ່ານແມນ ຫົວໜ້າຝ່າຍວັທນະທັມສຳນັກງານຖແລງຂ່າວອະເມຣິກັນ ຯ ລ ຯ

ເມື່ອໄດ້ເວລາເຣີ່ມພິທີແລ້ວ ພຣະອາຈາຣຍ໌ມະຫາປາລ ອານັນໂທ ໃນນາມພຸທວົງສ໌ ໄດ້ກ່າວສັມໂມທະນີຍະກະຖາໄຂການປະຊຸມ (ດັ່ງທີ່ທ່ານຈະໄດ້ຊາບຈາກຣາຍການຕໍ່ໄປ) ແລະຫລັງຈາກການປາຖະກະຖາສຸດລົງແລ້ວ ກໍໄດ້ກ່າວອະນຸໂມທະນາບັນດາທ່ານທີ່ໄດ້ຮ່ວມໃນການບຸນໃຫຍ່ຂອງພຣະພຸທສາສນາຣະວ່າງຊາດເທື່ອນີ້ ໂດຍທົ່ວກັນ

ຕອນກາງຄືນ ໄດ້ມີການສາຍຊີເນມາທາງພຣະພຸທສາສນາແລະທີ່ກ່ຽວກັບສັງເວຊະນີຍະສະຖານໃນປະເທສອິນເດັຽ ເປັນການອັດພິທີສລອງ ເທດການອັນຍິ່ງໃຫຍ່ນີ້ ດ້ວຍຄວາມພາກພູມຍິນດີ

ຄຳກ່າວໃຂພິທີສະແດງປາຖະກະຖາ

ປະຈຳວັນທີ ໒໐ ກັນຍາ ໑໙໖໔

ໂດຍ

ພຣະອາຈາຣຍ໌ມະຫາປານ ອານັນໂທ

ເຈົ້າສຳນັກວັດມະຫາພຸທວົງສາປ່າຫລວງ

ຂໍນ້ອມນມັສການ ເຖຣານຸເຖຣະ ທີ່ເຄົາຣົບແລະນັບຖືທັງຫລາຍ ແລະຂໍຈະເຣີນພຣ ທ່ານອຸປາສົກ ອຸປາສິກາຜູ້ໃຈບຸນທັງຫລາຍ

ວັນນີ້ເປັນວັນທີ ໗ ຂອງການທຳບຸນວັນເກີດຄົບຮ້ອຍປີ ຂອງທ່ານອະນາຄາຣິກະທັມມະປາລະ ທີ່ຄນະກັມມະການພຸທທະວົງສ໌ ໄດ້ຈັດຂຶ້ນເພື່ອເປັນເຄື່ອງຣະນຶກເຖິງຄວາມດີ ຂອງທ່ານ ດັ່ງທາງສຳນັກໄດ້ປະກາສໃຫ້ຊາບວ່າ ວັນທີ ໑໗ ກັນຍາ ເປັນວັນເຣີ່ມຕັ້ງ ຕລອດເຖິງວັນທີ ໒໐ ກັນຍາ ເມື່ອເຖິງວັນແລະເວລາກຳໜົດແລ້ວ ທ່ານພຸທທະບໍຣິສັທທັງພາຍນອກແລະພາຍໃນ ທັງໃນປະເທສແລະຕ່າງປະເທສ ທີ່ເປັນຊາວພຸທດ້ວຍກັນ ໄດ້ພາກັນມາສັນນິບາດປະຊຸມດ້ວຍຄວາມພ້ອມພຽງກັນຢ່າງມີຣະບຽບຮຽບຮ້ອຍດີ ໃນເບື້ອງຕົ້ນໄດ້ພາກັນນ້ອມນຶກເຖິງຄຸນພຣະຣັດນະຕັຍຄື ພຣະພຸທ ພຣະທັມ ພຣະສົງຄ໌ ອັນເປັນແກ້ວດວງປະເສີຖຫາສິ່ງປຽບປານບໍ່ໄດ້ ແລ້ວໄດ້ພາກັນສງົບກາຍ ສງົບວາຈາ ສງົບຈິດໃຈ ຈຶ່ງຂໍສແດງຄວາມຂອບອົກຂອບໃຈເປັນຢ່າງຍິ່ງ ທີ່ມີຄວາມອຸດສາຫະມາຮ່ວມບຸນກຸສົລໃນຄາວນີ້ ນັບວ່າເປັນມິ່ງຄົລໃຫ້ແກ່ສຳນັກແລະງານໃນຄາວນີ້ເປັນຢ່າງດີ ໃນວາຣະຕໍ່ໄປນີ້ຂໍໃຫ້ທ່ານສາທຸຊົນ ຈົ່ງຟັງຣາຍການສແດງຊີວະປະວັດຂອງທ່ານອະນາຄາຣິກະທັມມະປາລະ ແລະການຟື້ນຟູພຸທທະຄະຍາ ດັ່ງທ່ານເຫລົ່ານັ້ນຈະໄດ້ສແດງໃນໂອກາສຕໍ່ໄປນີ້

ປາຖະກະຖາ ເຣື່ອງ ຊີວະປະວັດຂອງ

"ອະນາຄາຣິກະ ທັມມະປາລະ"

ສະແດງ ໂດຍ

ພຣະມະຫາກ້າວ ພຸທວົງສ໌

ວັນນີ້ເປັນວັນທີ່ສຳຄັນຂອງພວກເຮົາຊາວພຸທທັງຫລາຍ ເປັນຫຍັງຈຶ່ງວ່າວັນສຳຄັນ? ເພາະວ່າວັນນີ້ເປັນວັນຄົບຮອບປີເກີດຮ້ອຍປີຂອງທ່ານທັມມະປາລະ ຜູ້ທີ່ເສັຽສລະເພື່ອຟື້ນຟູພຣະສາສນາໃຫ້ກັບຄືນມາສູ່ອິນເດັຽ ແລະແຜ່ຜາຍໄປສູ່ປະເທສເອີຣົບອະເມຣິກາແລະປະເທສອື່ນໆອີກ ຂໍ້ສຳຄັນຢ່າງນຶ່ງກໍ່ຄືທ່ານໄດ້ເສັຽສລະຕໍ່ສູ້ເອົາສັງເວຊນີຍະສຖານທັງ ໔ ອັນເປັນມໍຣະດົກອັນລ້ຳຄ່າ ຄືນຈາກພວກໄມທັນດ໌ (ພຣະຮິນດູ) ຄືນມາເປັນມໍຣະດົກຂອງຊາວພຸທດັ່ງເດີມຈົນເທົ່າເຖິງທຸກວັນນີ້ ດ້ວຍເຫດນີ້ທ່ານຜູ້ນີ້ຈຶ່ງເປັນຜູ້ສຳຄັນ ແລະມີອຸປກາຣະຄຸນອັນຍິ່ງໃຫຍ່ແກ່ພວກເຮົາ ສນັ້ນພວກເຮົາຊາວພຸທທຸກປະເທສຈຶ່ງໄດ້ທຳບຸນອຸທິສທາຄຸນທ່ານ ແລະຈຶ່ງຈຳເປັນສົນໃຈຢາກຮູ້ປະວັດແລະຜົລງານຂອງທ່ານວ່າເປັນມາຢ່າງໃດ ພວກເຮົາຄວນຮູ້ໄວ້ເພື່ອຈະໄດ້ຖືເອົາເປັນຕົວຢ່າງຕໍ່ໄປ

ກ່ອນອື່ນທີ່ຈະເລົ່າເຣື່ອງຂອງທ່ານ ຂ້າພະເຈົ້າຈະຂໍເລົ່າການເປັນໄປຕ່າງໆ ຂອງພຣະພຸທສາສນາເສັຽກ່ອນ ຄືຫລັງຈາກພຣະບໍຣົມສາສດາສະເດັດດັບຂັນທະປຣິນິພພານໄປແລ້ວປະມານສອງຮ້ອຍກວ່າປີ ພຣະຍາອໂສກຣາຊ ໄດ້ທຳການຟື້ນຟູພຣະພຸທສາສນາ ໂດຍການທຳສັງຄາຍະນາຄັ້ງທີ່ ໓ ແລະໄດ້ສົ່ງພຣະອໍຣະຫັນຕ໌ອອກໄປເຜີຍແຜ່ພຸທສາສນາໃນຕ່າງປະເທສ ຄາວນັ້ນສາສນາຈະເຣີນສຸດຂີດທົ່ວອິນເດັຽເປັນເວລາປະມານພັນກວ່າປີ.

ຕໍ່ມາເມື່ອເມື່ອປີ ພ.ສ. ໑໓໐໐ ກວ່າປີ ມີພຣາຫມຜູ້ນຶ່ງຊື່ສັງກຣາຈາຣຍ໌ ຊຶ່ງເປັນນັກປາຊແລະນັກສອນສາສນາຄົນສຳຄັນຂອງຮິນດູ ໄດ້ທຳການປະກາສສາສນາຮິນດູຢ່າງ ເອົາຈິງເອົາຈັງທ່ານຜູ້ນີ້ໄດ້ເອົາຫລັກປຣັຊຍາຂອງສາສນາຕ່າງໆໃນປະເທສອິນເດັຽ ຣວມທັງຂອງພຸທສາສນາອີກດ້ວຍເຂົ້າຜສົມກັນ ແລ້ວຍົກເອົາພຣະພຸທະເຈົ້າຂຶ້ນເປັນອະວະຕານຂອງພຣະນາຣາຍປາງທີ່ ໙

ແລ້ວກ່າວອ້າງວ່າ ສາສນາຮິນດູກັບພຸທເປັນອັນນຶ່ງອັນດຽວກັນ ຄັ້ງນີ້ສາສນາພຸທກໍເລີຍຖືກສາສນາຮິນດູກືນເອົາເສັຽໝົດ ຜູ້ຄົນຊາວອິນເດັຽກໍຫັນໄປນັບຖືສາສນາຮິນດູຫລາຍຂຶ້ນຕາມລຳດັບ ຈົນລືມພຣະພຸທສາສນາໄປເລີຍ

ຕໍ່ມາເມື່ອ ພ.ສ. ໑໐໓໙ ກະສັດມຸສລິມໄດ້ເຂົ້າມາມີອຳນາດໃນອິນເດັຽ ໄດ້ທຳລາຍມ້າງເພວັດວາສາສນາຂ້າພຣະພິກສຸສົງເປັນຈຳນວນຫລາຍ ພຣະຢູ່ບໍ່ໄດ້ກໍແຕກໜີໄປຕ່າງປະເທສ ບາງອົງກໍຫອບເອົາພຣະຄັມພີຣ໌ຄື ພຣະໄຕຣປິດົກຂ້າມພູດອຍໄປຢູ່ໃນທິເບດກໍມີ ຈີນ, ມັງໂກເລັຽ, ເນປາລ ແລະພະມ້າກໍມີ ມະຫາວິທຍາລັຍນາລັນທາທີ່ໃຫຍ່ຍິ່ງທີ່ສຸດໃນອິນເດັຽ ແລະໃນໂລກສມັຍນັ້ນ ກໍຖືກພວກມຸສລິມໃຈມືດເຜົາເຫລືອແຕ່ພຽງຊາກ ຕັ້ງແຕ່ນັ້ນມາພຣະພຸທສາສນາກໍເສື່ອມໄປຈາກອິນເດັຽແລະໝົດໄປໃນທີ່ສຸດ ບໍ່ມີພຣະເຫລືອຢູ່ໃນດິນແດນແຫ່ງນີ້ອີກພຽງແຕ່ຮູບດຽວ ສຖານທີ່ສຳຄັນຂອງພຣະພຸທະສາສນາເປັນຕົ້ນສັງເວຊນີຍະສຖານ ທັ້ງ ໔ ກໍເຫລືອແຕ່ພຽງຊາກດິນຈີ່ ປາສຈາກຄົນຫລຽວແລເປັນເວລາປະມານ ໗໐໐ ກວ່າປີ ເມື່ອນຶກເຖິງຄວາມຫລັງແລ້ວເຮັດໃຫ້ຂ້າພະເຈົ້າສັງເວຊສລົດໃຈ ເພາະຂ້າພະເຈົ້າໄດ້ໄປເຫັນດ້ວຍຕາຕົນເອງ ແລະນຶກກວາມມະໂນພາບໃນອະດີດ ສມັຍພຸທະກາລທີ່ພຸທສາສນາກຳລັງຮຸ່ງເຮືອງແລ້ວ ຮູ້ສຶກວ່າເຮັດໃຫ້ເກີດສັງເວຊສລົດໃຈຢ່າງຍິ່ງ ພຣະພຸທສາສນາເສື່ອມສູນໃນອິນເດັຽຄາວນີ້ ເໝືອນກັບເດັກອະນາຖາຫຽວຂໍທານຕາມກລາດ ບໍ່ມີໃຜກະຣຸນາແລະຫລຽວແລ ປ່ອຍຖິ້ມໄປຕາມຍະຖາກັມ໌

ແຕ່ກໍມີກົດທັມມະດາຢູ່ວ່າ ທີ່ໃດມີຄວາມຈະເຣີນແລ້ວ ຕ້ອງມີຄວາມເສື່ອມ ແລະເມື່ອເສື່ອມສຸດຂີດແລ້ວກໍຕ້ອງກັບຈະເຣີນຂຶ້ນ ເໝືອນກັບພຸທະສາສນາຂອງເຮົາ ຂນະນີ້ກຳລັງຈະເຣີນຂຶ້ນມາແດ່ແລ້ວດັ່ງຈະເຫັນໄດ້ດັ່ງນີ້

ເມື່ອປະມານ ພ.ສ. ໒໓໙໕ ທ່ານເຊີ໌ ອະເລັກຊານເດີ໌ ຄຸນນິງແຮມ (ຊາວອັງກິດ) ໄດ້ຈັດການຂຸດຄົ້ນໂບຮານວັດຖຸຂອງພຣະພຸທະສາສນາໃນອິນເດັຽຫລາຍແຫ່ງ ວັດຖຸໂບຮານທີ່ຖືກຈົມດິນຢູ່ເປັນເວລາຫລາຍປີ ກໍໄດ້ຂຶ້ນມາຜາກົດແກ່ສາຍຕາຂອງປະຊາຊົນຊາວອິນເດັຽອີກເທື່ອນຶ່ງ ແລະຊາວອິນເດັຽກໍໄດ້ເຫັນຄວາມຍິ່ງໃຫຍ່ ແລະຄວາມສຳຄັນຂອງພຣະພຸທະສາສນາທີ່ມີຕໍ່ເຂົາມາຕັ້ງແຕ່ອະດີດຍິ່ງຂຶ້ນ ທັງໃນດ້ານສິລປະ ວັທນະທັມ໌ ອາຣະຍະທັມ໌ ການສຶກສາແລະສາສນາ ເຮັດໃຫ້ຊາວອິນເດັຽມີຄວາມສົນໃຈແລະຕື່ນໂຕຂຶ້ນແດ່ແລ້ວ

ເມື່ອປີ ພ.ສ. ໒໔໐໓ ເຊີຣ໌ ເອດວິນ ອາໂນລດ໌ ນັກປະພັນທີ່ມີຊື່ສຽງຂອງອັງກິດ ໄດ້ຂຽນບົທຄວາມກ່ຽວກັບພຣະພຸທະສາສນາຫລາຍເຣື່ອງລົງພິມໃນໜັງສືວາຣະສານ ທີ່ປະເທສອັງກິດ ທ່ານຜູ້ນີ້ໄດ້ສແດງຄວາມເສັຽໃຈຫລາຍ ເມື່ອໄດ້ເຫັນຄວາມເສື່ອມໂຊມຂອງສຖານທີ່ສຳຄັນ ຂອງພຣະພຸທະສາສນາ ຊຶ່ງບໍ່ໄດ້ຮັບການດູແລຈາກຣັຖະບານເທົ່າທີ່ຄວນ ທ່ານໄດ້ເດີນທາງມາອິນເດັຽແລະໄດ້ຂຽນໜັງສືເຫລັ້ມນຶ່ງຊື່ວ່າ "ປະທີປແຫ່ງອາຊີ" (The Lighf of Asia) ຊຶ່ງເປັນໜັງສືທີ່ມີຄົນນິຍົມອ່ານຫລາຍທີ່ສຸດໃນໂລກເຫລັ້ມນຶ່ງ ເຮັດໃຫ້ຊາວອິນເດັຽແລະຊາວໂລກ ມີຄວາມສົນໃຈໃນພຣະພຸທະສາສນາເພີ່ມຂຶ້ນອີກ

ຕໍ່ມາເມື່ອປີ ໑໘໙໒ (ພ.ສ. ໒໔໓໕) ທ່ານອະນາຄາຣິກະທັມມະປາລະ ພ້ອມດ້ວຍຄນະໄດ້ໄປຕັ້ງສຳນັກໃຫຍ່ທີ່ກັລກັຕຕາ ເພື່ອເປັນສູນກາງເຜີຍແຜ່ສາສນາໃນປະເທສອິນເດັຽ ໃຫ້ຊື່ວ່າ "ສມາຄົມມະຫາໂພທິ" ການຕັ້ງສມາຄົມນີ້ມີວັຕຖຸປະສົງສຳຄັນຄື : ເພື່ອກອບກູ້ສັງເວຊນີຍະສະຖານທັ້ງ ໔ ແຫ່ງຄື ບ່ອນປະສູດຂອງພຣະພຸທະເຈົ້າ (ລຸມພິນີ) ບ່ອນຕັສຮູ້ (ພຸທະຄຍາ) ບ່ອນສແດງທັມມະຈັກ (ສາຣະນາຖ) ບ່ອນສະເດັດປະຣິນິພພານ (ກຸສິນາຣາ) ທີ່ພວກພຣະຮິນດູຖືເປັນກັມມະສິທຢູ່ ໃຫ້ໄດ້ກັບຄືນມາຢູ່ໃນຄວາມອຸປຖາກຮັກສາສັກກາຣະບູຊາຂອງເຮົາ ຊາວ ພຸທດັ່ງເດີມ

ສະມາຄົມມະຫາໂພທິ ເກີດຂຶ້ນດ້ວຍຄວາມປາຖນາ ຫລືຄວາມພະຍາຍາມອັນແຮງກ້າຂອງທ່ານອະນາຄາຣິກະທັມມະປາລະ ສນັ້ນຈຶ່ງຈຳຕ້ອງກ່າວເຖິງຄວາມເປັນມາຂອງສມາຄົມກັບປະວັດຂອງທ່ານທັມມະປາລະພ້ອມໆກັນໄປ ແຕ່ໃນທີ່ນີ້ຈະຂໍເລົ່າປະວັດຂອງທ່ານໂດຍຫຍໍ້ ໃຫ້ທ່ານທັງຫລາຍຊາບເສັຽກ່ອນ ເພື່ອຈະໄດ້ຮູ້ວ່າທ່ານທັມມະປາລະຄືໃຜ ເກີດຢູ່ທີ່ໃສ ເປັນຄົນສຳຄັນຢ່າງໃດ ແລະໄດ້ຟື້ນຟູພຸທະສາສນາໃຫ້ຈເຣີນຢ່າງໃດແດ່ ເຮົາຄວນຮູ້ໄວ້ ສນັ້ນຂ້າພະເຈົ້າຈຶ່ງຈະຂໍເລົ່າປະວັດຂອງທ່ານດັ່ງຕໍ່ໄປນີ້ :

ທ່ານທັມມະປາລະ ເດີມຊື່ວ່າ ເທວະວິຕາຣະເນ ເກີດເມື່ອວັນທີ ໑໗ ເຊຕາມ (ກັນຍາ) ໑໘໖໔ ບິດາຊື່ ໂດນ ຄາໂຣລິສ, ມາຣດາຊື່ນາງມັລລິກາ ເປັນລູກຊາຍຜູ້ຖ້ວນສາມຂອງຕະກູລທີ່ຮັ່ງມີແລະນັບຖືພຣະພຸທະສາສນາຢ່າງເຄັ່ງຄັດຕະກູລນຶ່ງ ນອກເມືອງໂຄລັມໂບ ປະເທສລັງກາ ເມື່ອທ່ານຈເຣີນວັຍໃຫຍ່ຂຶ້ນມາອາຍຸໄດ້ ໗ ປີ ກໍໄດ້ຮັບການສຶກສາ ຈົນເຖິງຊັ້ນມັທຍົມນັ້ນຕົ້ນ (ຄົປໂລມ) ໃນຂນະທີ່ທ່ານສຶກສາຢູ່ນັ້ນ ທ່ານໄດ້ຜ່ານອຸປສັກຂັດຂ້ອງຫລາຍຢ່າງ ກ່ຽວກັບພວກຄຣິສ

ຕຽນ ຕ້ອງການຢາກໃຫ້ທ່ານເຊື່ອຖືໃນສາສນາຄຣິສຕັງນຳເຂົາ ຈົນເຖິງຕ້ອງປ່ຽນແປງສະຖານທີ່ສຶກສາ (ໂຮງຮຽນ) ຢູ່ເລື້ອຍໆແລະຍ້ອນການຂັດແຍ້ງກັນກັບພວກຄຣູ ທີ່ເຄັ່ງຄັດສາສນາຄຣິສຕັງ ແລະບັງຄັບໃຫ້ທ່ານໄປເຂົ້າໂບສຖ໌ ໄຫວ້ພຣະເຍຊູ ແລະສູດມົນຕ໌ອ້ອນວອນຕໍ່ພຣະຜູ້ເປັນເຈົ້າໃຫ້ມາຮັບເອົາບາປກັມ ຕາມຫລັກຂອງສາສນານັ້ນ ຕໍ່ມາທ່ານກໍໄດ້ພົບກັບອາຈາຣຍ໌ທີ່ດີ ຄືຫົວໜ້າຄນະກັມມັດຖານ (The Theosophist) ທີ່ເດີນທາງມາປະກາສພຣະສາສນາໃນປະເທສລັງກາ ຄືທ່ານພັນເອກ ໂອລຄອດ ຊາວອະເມຣິກັນກັບນາງ ບຣາວວາທສກີ ຊາວຣັສຊີ ແລະໄດ້ຕັ້ງສມາຄົມກັມມັດຖານ (The Theosophical Society) ສຳລັບຊາວພຸທຂຶ້ນທີ່ໂຄລັມໂບ ໃນລັງກາ ທ່ານທັມມະປາລະ ກໍໄດ້ເປັນສະມາຊິກປະຈຳຄົນນຶ່ງໃນສມາຄົມນັ້ນ ທ່ານໄດ້ເປັນລູກສິດຫລືເພື່ອນທີ່ກຸ້ນເຄີຍຢ່າງສະນິດກັບນາຍພັນເອກ ໂອລຄອດ ແລະນາງບຣາທສກີ ທ່ານເຄີຍເດີນທາງທ່ຽວໄປທົ່ວເກາະລັງກາ ຮ່ວມກັບທ່ານນາຍພັນເອກ ເພື່ອເປັນນາຍໂຄສະນາສືລທັມແລະຫາທຶນໄປບັບປຸງການສຶກສາໃຫ້ບຸຣະຊົນຊາວພຸທ ໂດຍມີຣົຖເກວັຄັນນຶ່ງເປັນພາຫນະ ໃນການອອກໂຄສະນາຫາທຶນນັ້ນ ທ່ານກໍໄດ້ທຳການເຜີຍແຜ່ພຣະພຸທສາສນາ ປຸກໃຈຄົນລັງກາໃຫ້ຕື່ນຕົວໃນເອກຣາຊແລະສົນໃຈໃນວັທນະທັມທາງພຣະພຸທສາສນາ ອັນເປັນມໍຣະດົກຂອງປູ່ຍ່າຕານາຍ ໃນການຮ່ວມງານກັບທ່ານນາຍພັນເອກ ຜູ້ເສັຽສລະນັ້ນ ເຮັດໃຫ້ກຳລັງອັນມີຕໍ່ພາຣະກິຈ ເພື່ອສັງຄົມມະນຸສກ້າແຂງຂຶ້ນໂດຍລຳດັບ ທ່ານກໍຕັ້ງໂຕເປັນຜູ້ເສັຽສລະຕາມ ຈົນທ່ານໄດ້ລາອອກຈາກໜ້າທີ່ການຣັຖບາລ ແລ້ວກັບມາດຳເນີນງານອັນນັ້ນໂດຍອິສຣະ ໂດຍຖືເພສເປັນອະນາຄາຣິກະ ແປລວ່າຜູ້ບໍ່ມີເຮືອນ ບໍ່ຄອງເຮືອນ ເປັນຄົນຖືສີລແປດ ແຕ່ບໍ່ບວຊເປັນພຣະ ແລະບໍ່ຍົມກິນຊີ້ນແລະປາ ຢູ່ທີ່ຂ້າງຣົຖທ່ານກໍຂຽນປ້າຍຕິດໄວ້ວ່າ ການກິນຊີ້ນປາເປັນຂອງຄວນພຶກເວັ້ນ ຊຶ່ງເປັນຫລັກສຳລັບປະຕິບັດໃນສມາຄົມມະຫາໂພທິເທົ່າທຸກມື້ນີ້ ຕໍ່ມາທ່ານໄດ້ອ່ານບົທຄວາມແລະຂ່າວທັງໃນລັງກາ ອິນເດັຽແລະອັງກິສ ຊຶ່ງຂຽນໂດຍທ່ານ ເຊີຣ໌ ເອດວິນ ອາຣໂນລດ໌ (Sir Adwin Arnold) ຜູ້ຂຽນໜັງສືປະທີປແຫ່ງທວີປອາຊີ ທ່ານໄດ້ອ່ານບົທຄວາມວ່າ ຣັຖບາລອິນເດັຽແລະຊາວພຸທທັງຫລາຍ ຄວນຈະໄດ້ເປັນຜູ້ມີສິທແລະອຸປະຖາກຮັກສາພຸທະຄະຍາ ອັນເປັນບ່ອນກຳເນີດພຣະພຸທສາສນາ ເປັນການເສັຽປຽບແລະໜ້າອົດສູທີ່ສຸດ ທີ່ຈະປ່ອຍໃຫ້ພຣະພຸທະຮູບຕ່າງໆ ໃນສຖານທີ່ນັ້ນຖືກທຳລາຍບ້າງເພປຽບຢ້ຳຊະຊາຍຢູ່ຕາມດິນ ແລະເມື່ອທ່ານໄດ້ຊາບຂ່າວເຊັ່ນນັ້ນກໍເກີຍສັງເວຊສລົດໃຈ ເມື່ອທ່ານເດີນທາງໄປອິນເດັຽ ກໍໄດ້ເຫັນພາບ

ອັນໜ້າສັງເວຊນັ້ນດ້ວຍໂຕທ່ານເອງ ກຳລັງໃຈອັນເປັນມະຫາກຸສົລແລະມຫາບຸຣຸສ ທີ່ມີຢູ່ແຕ່ກ່ອນແລ້ວນັ້ນ ກໍມີກຳລັງຂື້ນຢ່າງແຂງແຮງ ບັນດານໃຫ້ທ່ານຕັດສິນໃຈຢ່າງເດັດຂາດເສັຽສລະມາແຕ່ຄາວນັ້ນ

ເມື່ອປີ ໑໙໒໑ (ພ.ສ. ໒໔໖໔) ທ່ານກໍໄດ້ເດີນທາງໄປເມືອງອັທຍາ ໃນນິວຢອກ ອັນເປັນສຖານທີ່ຕັ້ງສມາຄົມກັມມັດຖານ ທ່ານໄດ້ຮຽນພາສາບາລີນຳນາຍພັນເອກໂອຄອດ ໂດຍຄວາມແນະນຳຂອງນາງບຣາບາທສກີ ເມື່ອຮຽນສຳເຣັຈແລ້ວ ທ່ານກໍຕັ້ງໜ້າຊ່ວຍງານສມາຄົມນັ້ນມີການເຜີຍແຜ່ສີລທັມກັມມັດຖານຕໍ່ໄປ ທ່ານອະນາຄາຣິກະທັມມະປາລະ ເປັນຄົນມີອັທຍາສັຍໃຈຄໍເບືອກເບັນ ລະມຸນລະມ່ອມອ່ອນນ້ອມຖ່ອມໂຕ ເປັນຜູ້ບໍ່ຖືໂຕບໍ່ຖືຕົວ ມັກໃຫຍ່ໃຝ່ສູງ ຖືຍົສຖືສັກ ເປັນຄົນມັກນ້ອຍສັນໂດດການມີການໄດ້ເໝືອນກັບເປັນພຣະອົງໜຶ່ງ ແລະເປັນຄົນດຸໝັ່ນກົງຕໍ່ໜ້າທີ່ເຣັດວຽນປະຈຳມື້ບໍ່ໄດ້ຂາດ ຄືແປທັມມະຝ່າຍພຸທສາສນາເປັນພາສາອັງກິສອອກ ເຜີຍ ແຜ່ກະໂຕງການເຜີຍແຜ່ໃຫ້ກ້າວໜ້າ ແປແລະອະທິບາຍທັມມະແກ່ຜູ້ສົນໃຈ ຂຽນບົທຄວາມກ່ຽວກັບພຸທສາສນາເພື່ອລົງໜັງສືພິມປະຈຳວັນ ທ່ານຄົບຫາສມາຄົມໄດ້ໝົດທຸກຄົນ ບໍ່ເລືອກໜ້າວ່າຜູ້ເຖົ້າຫລືໜຸ່ມ ເດັກຫລືຜູ້ໃຫຍ່ ຄົນມີຫລືທຸກຂ໌ຈນ ທ່ານບໍ່ເລືອກຊາດຊັ້ນວັນນະ ທ່ານຖືວ່າທຸກໆຄົນເປັນເພື່ອນເກີດ ແກ່ ເຈັບ ຕາຍ ດ້ວຍກັນທັງສິ້ນ ຄວນຮັກແພງຊຶ່ງກັນແລະກັນ ບໍ່ຄວນກຽດຊັງດູໝິ່ນຖິ້ມແຄນກັນ ທ່ານທຳງານນີ້ນຶ່ງ ປະມານ ໑໕ ຫລື ໑໖ ຊົ່ວໂມງ ໂດຍບໍ່ເຫັນແກ່ຄວາມເໜັດເໜື່ອຍເມື່ອຍລ້າ ທ່ານເປັນຜູ້ເບີກບານຫ້າວຫານຕລອດເວລາ ການປາຖະກະຖາແລະບົທຄວາມຂອງທ່ານບ່ອນເປັນທີ່ຖືກເພິ່ງເພິງໃຈແກ່ຄົນທຸກຊັ້ນທຸກວັຍ ທ່ານທຳງານຊ່ວຍສມາຄົມກັມມັດຖານນັ້ນເປັນເວລາ ໕ ປີ ບໍ່ແມ່ນແຕ່ເທົ່ານັ້ນທ່ານຍັງໄດ້ຊ່ວຍໃນການສ້າງໂຮງຮຽນ ໂຮງໝໍທັງໃນແລະນອກປະເທສ ມີປະເທສອິນເດັຍເປັນຕົ້ນ

ຫລັງຈາກນັ້ນ ທ່ານກໍກັບມາສູ່ລັງກາອີກ ດຳເນີນການເຜີຍແຜ່ສີລທັມດ້ວຍວິທີຕ່າງໆ ມີປາຖະກະຖາແລະຂຽນບົທຄວາມລົງໃສ່ໜັງສືພິມເປັນຕົ້ນ ທ່ານໄດ້ທ່ອງທ່ຽວໄປເຜີຍແຜ່ສີລທັມຕາມບ້ານນ້ອຍເມືອງໃຫຍ່ໃນລັງກາດ້ວຍກວຽນເປັນພາຫນະ ຈົນປະຊາຊົນຊາວລັງກາຮູ້ຈັກທ່ານເກືອບໝົດທຸກຄົນ ທ່ານໄດ້ຈັດສ້າງໂຮງຮຽນ ໂຮງໝໍ ແລະຕັ້ງໂຮງຮຽນວັນອາທິດ ເພື່ອສອນສີລທັມແກ່ເຍົາວະຊົນຊາວລັງກາໃຫ້ທົ່ວເຖິງໄປທຸກໆບ້ານ ຈົນຕາບເທົ້າທຸກວັນນີ້ ຂ້າພະເຈົ້າໄດ້ໄປເຫັນດ້ວຍໂຕເອງເມື່ອໂດນປີນີ້ ຂ້າພະເຈົ້າໄດ້ໄປທ່ຽວທີ່ປະເທສລັງກາ ແລະພັກຢູ່ທີ່ນັ້ນລາມ

ເດືອນທຸກໆວັນອາທິດ ຄນະນັກຮຽນຕ້ອງເຂົ້າໄປທຸກໆວັດ ເພື່ອຟັງຫລືຮຽນສີລທັມຈາກພຣະ ຊາວລັງກາຊາບຄວາມວ່າທ່ານທັມມະປາລະພາທຳມາເປັນຕົວຢ່າງ ອັນນີ້ເປັນນະໂຍບາຍຂອງ ຊາວພຸທມີທ່ານທັມມະປາລະເປັນຕົ້ນທີ່ບໍ່ຢາກໃຫ້ເຍົາວະຊົນໄປຫລົງໄຫລເຊື່ອຖື ສາສນາອື່ນຄື ສາສຄຣິສຕັງເປັນຕົ້ນ ສະນັ້ນຈຶ່ງໄດ້ອົບຣົມເດັກໃຫ້ເຊື່ອສີລທັມຕັ້ງແຕ່ຍັງນ້ອຍໆ ເມື່ອໃຫຍ່ມາເຂົາ ກໍຈະບໍ່ເຊື່ອງົມງາຍໃນອັນບໍ່ເປັນປະໂຍຊນ໌

– ຕາວນຶ່ງທ່ານທັມມະປາລະ ໄດ້ຖືກເຊີນໄປປະຊຸມກ່ຽວກັບພຣະພຸທະສາສນາສັມພັນທ໌ທົ່ວໂລກ ເມື່ອເສັດການປະຊຸມແລ້ວທ່ານກໍເດີນທາງກັບທາງເຮືອແລະໄດ້ມາແວະຊົມເກາະຮາວາຍ ຂຶ້ນໄປຢ້ຽມຢາມເມືອງໂຮໂນລູລູ ຕາວນັ້ນມີຍິງຄົນນຶ່ງເປັນຜູ້ມີຕະກູລສູງແລະຮັ່ງມີ ເມື່ອໄດ້ຊາບຂ່າວວ່າທັມມະປາລະເຜີຍແຜ່ສີລທັມໄປສູ່ຢູໂຣປແລະອະເມຣິກາ ນາງກໍເຂົ້າໄປຫາທ່ານແລະເລົ່າຄວາມເປັນໄປຂອງນາງໃຫ້ທ່ານທັມມະປາລະຟັງ ຄືນາງເປັນຄົນໃຈຮ້າຍຄຽດງ່າຍ ນາງມີຊື່ວ່າ ນາງມາຣີ ອີ ຟອສເຕີ (Mrs. Mary E Forter) ອາຍຸໃນຣາວ ໕໐ ປີ ນາງຖາມຄວາມຂ້ອງໃຈຂອງນາງວ່າ ເຮັດຢ່າງໃດ ຂ້າພະເຈົ້າຈຶ່ງຈະລະຄວາມໂກທຄຽດນີ້ໄດ້ ທ່ານທັມມະປາລະກໍແນະນຳດ້ວຍການກຳໜົດຮູ້ອາຣົມທີ່ເປັນອະດີດ ອະນາຄົດ ແລະປັດຈຸບັນ ບໍ່ໃຫ້ໄປຖືໝັ້ນໃນອາຣົມນ໌ຕ່າງໆ ໃຫ້ກຳໜົດພິຈາຣະນາລົມຫາຍໃຈເຂົ້າອອກ ແລະເມື່ອນາງປະຕິບັດຕາມກໍໄດ້ຜົລຈິງໆ ເລີຍເຊື່ອເຫລື້ອມໃສໃນພຣະພຸທະສາສນາ ໄດ້ສະແດງຕົນເປັນອຸປາສິກາ ແລະໄດ້ປະວາຣະນາທ່ານທັມມະປາລະໄວ້ວ່າ ຖ້າທ່ານຕ້ອງການເງິນໄປສ້າງສິ່ງທີ່ເປັນປະໂຍຊນ໌ທາງຝ່າຍພຸທະສາສນາແລ້ວ ຂ້ອຍຍິນດີສນັບສນຸນຈົນສຸດຄວາມສາມາດ ແລະມອບເງິນໃຫ້ທ່ານເປັນຈຳນວນຫລາຍລ້ານ

ເມື່ອທ່ານທັມມະປາລະກັບມາເຖິງລັງກາແລ້ວ ກໍໄດ້ເດີນທາງໄປອິນເດັຍ ກະໂຄງການສ້າງສັງເວຊນີຍສຖານທັງສີ່ ທີ່ສຳຄັນທີ່ສຸດຈຸດສູນກາງກໍແມ່ນສາຣະນາດ ສຖານທີ່ພຣະອົງຄ໌ສແດງປະຖົມເທສນາ ທ່ານໄດ້ຊື້ດິນແຖວນັ້ນ ນຳພວກຣິນດູ ແລ້ວຈັດຕັ້ງສູນກາງສມາຄົມມະຫາໂພທິຂຶ້ນທີ່ນັ້ນ ນອກນັ້ນກໍໄດ້ສ້າງໂຮງຮຽນ, ໂຮງໝໍ, ໂຮງສາຍ ແລະທີ່ພັກອາສັຍທົ່ວໄປອື່ນ ໆ ອີກ ຖ້າຕ້ອງການເງິນເທົ່າໃດກໍສັ່ງເອົານຳນາງມາຣີຟອສເຕີ ນາງກໍຈັດສົ່ງໃຫ້ຕາມຄວາມປະສົງ ສນັ້ນເມື່ອທ່ານສ້າງອັນໃດສຳຄັນ ໆ ທ່ານຕ້ອງຂຽນຊື່ທ່ານແລະຊື່ນາງມາຣີໃສ່ດ້ວຍກັນ ເພາະນາງເປັນກຳລັງໃຫຍ່ແລະສຳຄັນທີ່ສຸດໃນການຟື້ນຟູພຸທສາສນາຂຶ້ນໃນອິນເດັຍ ແລະທີ່ອື່ນ ໆ ອີກ.

ນາງມາຣີຟອສເຕີ ເປັນມະຫາອຸປາສິກາສຳຄັນທີ່ສຸດ ແລະເປັນແມ່ ບຸນທັມ ຂອງທ່ານທັມມະປາລະ ເມື່ອນາງໄດ້ໝົດບຸນແລ້ວທ່ານກໍໄດ້ບັນທຶກໃສ່ສມຸດປະຈຳວັນຂອງທ່ານໄວ້ຕອນນຶ່ງວ່າ "ວັນທີ ໑໔ ມົກຣາ ໑໙໓໑ ຕົ້ນຄືສອງ ເປັນເທື່ອອິດທີ່ຂ້າພະເຈົ້າ ຈຳຕ້ອງລືມບໍ່ໄດ້ຊື່ອັນປະທັບໃຈ ຄືແມ່ນາງແມຣີ ຟອສເຕີ ເພາະເພິ່ນໄດ້ໝົດບຸນໄປແລ້ວ ເມື່ອປາຍເດືອນທີ່ແລ້ວ ເພິ່ນເປັນແມ່ບຸນທັມ ເປັນຫລອດຄາຖາທີ່ສັກສິທຂອງຂ້າພະເຈົ້າ ເພິ່ນເປັນຜູ້ບັນດານໂຊຄດີມາໃຫ້ຂ້າພະເຈົ້າ ເພິ່ນເປັນຄົນກ້າເສັຽສລະຢ່າງຍອດໃນປະວັດການ ບັດນີ້ຜູ້ຖືພາຣະແທ່ງການທີ່ເສັຽສລະອັນຫາຜູ້ປຽບບໍ່ໄດ້ນັ້ນໄດ້ສິ້ນສຸດລົງແລ້ວ ສາທາຣະນະປະໂຍຊນ໌ທີ່ນາງໄດ້ພ່ຳເພັງມານັ້ນມີມາກຫລາຍສຸດຈະຄັນຣະນາ" ແມ່ນາງແມຣີ ຟອສເຕີ ນອກຈາກຈະໄດ້ທອດເທເງິນນັບເປັນຈຳນວນຫລາຍລ້ານ ຊ່ອຍເຫລືອວຽກການກັບທ່ານທັມມະປາລະ ຕອນຍັງມີຊີວິດຢູ່ແລ້ວ ວິນາທີທີ່ນາງຈະໝົດລົມຫາຍໃຈ ນາງກໍຍັງບໍ່ລືມພາຣະກິຈອັນສຳຄັນນັ້ນເລີຍນາງໄດ້ເຮັດພິນັຍກັມມອບເງິນຈຳນວນ ໕໐.໐໐໐ ໂດລາ ໄວ້ເປັນມູລນິທີບຳຣຸງໂຮງຮຽນ ໂຮງພຍາບາລຫລາຍບ່ອນທັງໃນລັງກາແລະອິນເດັຍ.

ໃນຕອນນຶ່ງທ່ານທັມມະປາລະໄດ້ບັນທຶກໄວ້ວ່າ "ໂຕຂ້າພະເຈົ້າຄົນດຽວ ມີແຕ່ມືລ້າໆ ໄດ້ອົດທົນບາກບັ່ນພຍາຍາມ ຂໍຄວາມຊ່ວຍເຫລືອຈາກຊາວພຸທພະມ້າ ໄທຍ໌ແລະປະເທສອື່ນໆ ກໍບໍ່ໄດ້ປະມານ ຍ້ອນການເສັຽສລະອັນຫາສິ່ງປານບໍ່ໄດ້ຂອງແມ່ມາຣີ ຟອສເຕີ ບັດນີ້ຊາວພຸທທົ່ວໂລກໄດ້ມີພຣະທາຕເຈດີຍ໌ (ຄືພຸທຄຍາ) ແລະທີ່ສຳຄັນອື່ນອີກ ບໍ່ໄດ້ມີຊາວສີຫົລ (ລັງກາ) ໄທຍ໌ ພະມ້າ ທິເບດ ຈີນ ແລະຍີ່ປຸ່ນ ຍິ່ງມີມາຊ່ອຍເຫລືອພໍປະມານ ແຕ່ວ່າຈາກດິນແດນອັນໄກແສນໄກ ຄືໂຮໂນລູລູ ເກາະຮາວາຍໄດ້ເກີດມີການຊ່ອຍເຫລືອຢ່າງບໍ່ໜ້າເປັນໄປໄດ້ ຈາກແມ່ນາງມາຣີ ເພື່ອຊ່ວຍຟື້ນຟູພຣະພຸທສາສນາໃນປະເທສອິນເດັຍ, ລັງກາ ແລະເພື່ອຈັດຕັ້ງພຣະພຸທສາສນາຂຶ້ນໃໝ່ໃນປະເທສອັງກິດ ໂດຍບໍ່ມີຜູ້ໃດໃນໂລກພຣະພຸທສາສນາ ຈະເປັນເໝືອນນາງໄດ້ ຊາວພຸທທັງໝົດເປັນເໝືອນກັບຕາຍໝົດແລ້ວ ພຣະພິກຂຸຜູ້ເສັຽສລະແທ້ກໍບໍ່ມີຫລືຫາຍາກເຕັມທີ...

ແລະທ່ານຍັງໄດ້ເວົ້າຊ້ຳອີກຍາມໃກ້ຈະຕາຍວ່າ ຂໍໃຫ້ຜູ້ໄດ້ຕາຍໃສ່ແຜ່ນດິນອັນສັກສິດຄືບ່ອນປະທັບຂອງພຣະພຸທອົງທີ່ມູລະຄັນທະກຸດີນີ້ ຂໍໃຫ້ຜູ້ຂ້າໄດ້ຕາຍໄວໆ ເພື່ອຈະໄດ້ມາເກີດອີກເພື່ອຈະໄດ້ອຸທິສຊີວິດສືບຕໍ່ວຽກການອັນນີ້ຕໍ່ໄປອີກຈັກ ໒໕ ຊາດ ອັນນີ້ກໍສແດງໃຫ້ເຫັນວ່າ

ທ່ານຜູ້ເສັຍສລະເພື່ອຄ້ຳຊູພຣະພຸທສາສນາແທ້ໆ ຕາມຄວາມຄິດເຫັນຂອງຂ້າພະເຈົ້າແລ້ວ ທ່ານຜູ້ນີ້ຄົງບໍ່ແມ່ນຄົນທັມມະດາສາມານສັງ ຄົງແມ່ນໜໍ່ໂພທິສັດອົງຈະມາຕັສຂ້າງໜ້າ ອັນນີ້ ນຳຄ້ຳຊູສາສນາຂອງອົງຄ໌ພຣະສາສດາ ທີ່ເສື່ອມໂຊມລົງໄປໃຫ້ຈເຣີນຮຸ່ງເຮືອງຄືນມາສູ່ປະເທສ ອິນເດັຍແລະທົ່ວໂລກອີກ.

ໂອ້ອະນິຈຈາ! ໂລກນີ້ບໍ່ທ່ຽງແທ້ດີຫລີໜໍ! ຕໍ່ມາບໍ່ເທົ່າງນານຫລັງຈາກຍາແມ່ນາງມາຣີ ຟອສເຕີ ລ່ວງລັບໄປແລ້ວ ທ່ານທັມມະປາລະກໍ່ໄດ້ເຖິງແກ່ສັນຍະກັມລ່ວງລັບໄປ ເມື່ອວັນທີ ໒໗ ເມສາ ໑໙໓໓ ຮວມອາຍຸໄດ້ ໖໘ ປີ ເປັນໜ້າເສັຍດາຍທີ່ຄົນດີເຊັ່ນນີ້ ໄດ້ຟ້າວລາໂລກໄປເສັຍ ໂດຍໄວ ເພາະທ່ານທຳປະໂຍຊສຸຂສ່ວນໂຮມຍັງບໍ່ທັນເຕັມບໍຣະບວນ ສະນັ້ນຈຶ່ງປາກໃຫ້ທ່ານຜູ້ນີ້ ຢູ່ໄປດົ້ງຫລາຍຮ້ອຍປີກໍ່ໄປອີກ ແຕ່ກໍຍັງດີໃຈຢູ່ວ່າ ທ່ານຍັງປາຖນາຂໍເກີດໃນດິນແດນຊົມພູ ທວີປດື່ມອີກ ຫວັງວ່າບໍ່ນານທ່ານຄົງຈະພາກັດເກີດຂຶ້ນມາກະທຳກໍ່ຜົລງານອັນດີເດັ່ນ ແລະເປັນ ປະໂຍຊນ໌ອັນກວ້າງຂວາງນີ້ໃຫ້ສຳເຣັຈລຸລ່ວງໄປໂດຍແທ້.

ປີນີ້ ໑໙໖໔ ເປັນວັນຄົບຮ້ອຍປີໃໝ່ຂອງທ່ານອນາຄະຣິກະທັມມະປາລະ ໄດ້ວຽນມາ ຮອດມາໄດ້ວັນທີ ໑໗ ກັນຍານີ້ ຊາວພຸທທົ່ວໂລກທີ່ໄດ້ເຫັນຄຸນຄວາມດີ ແລະອຸປກາຣະອັນປະ ເສີດສຸດ ໂດຍສເພາະຢ່າງຍິ່ງກໍ່ພວກເຮົາຊາວລາວ ທີ່ນັບຖືສາສນາພຸທຣະນຶກເຖິງຄຸນຄວາມ ດີຂອງທ່ານຜູ້ນີ້ແລ້ວ ຈຶ່ງໄດ້ພ້ອມພຽງກັນມີຄນະຣັຖບານແລະຄນະສົງຄ໌ອອກດັນຍາດໂຍມ ອາຈ ຍາເຈົ້ານາຍ ໄດ້ຈັດດັ້ງກອງບຸນສລອງຂຶ້ນທີ່ວັດມະຫາພຸທວົງສາປ່າຫລວງນີ້ ເພື່ອເປັນເຄື່ອງ ສແດງຄວາມກະຕັນຍຸກະຕະເວທີ ແລະອີກປະການນຶ່ງກໍ່ເປັນເຄື່ອງເຕືອນໃຈຂອງພວກເຮົາໃຫ້ ເປັນຄົນເສັຍສລະ ເພື່ອທຳຄວາມດີແກ່ສັງຄົມໂລກ ໃນໂລກສມັຍໃໝ່ ເໝືອນກັບທ່ານຜູ້ນີ້ໄດ້ທຳ ມາແລ້ວເປັນຕົວຢ່າງ.

ໃນອາວະສານແຫ່ງປາຖກຖານີ້ ຂໍໃຫ້ຊາວໂລກທັງຫລາຍຈົ່ງເປັນຜູ້ເສັຍສລະປະໂຍຊນ໌ ສ່ວນຕົວແລ້ວ ພາກັນມາທຳສາທາຣະນະປະໂຍຊນ໌ ເພື່ອຊາດແລະພຣະສາສນາໃຫ້ຈະເຣີນ ຮຸ່ງເຮືອງຂຶ້ນຕໍ່ໄປເທີ້ນ.

໗–໑໐–໖໔

ພຣະມະຫາກ້ວາ ພຸທວົງສ໌

ກາຣກູ້ພຸທຄະຍາ

ໂດຍ ທ່ານອະນາຄາຣິກະທັມມະປາລະ

– ຣວບໂຣມ ໂດຍ ພ.ຕ.ອ. ເລື່ອນ ວິໄລຫົງສ໌ –

ນຳແສດງປາຖະກະຖາ ໃນງານສລອງວັນເກີດຄົບຮ້ອຍປີຂອງທ່ານທັມມະປາລະ

ກ່ອນຈະກ່າວເຖິງເນື້ອເຣື່ອງທີ່ໄດ້ພາດຫົວໄວ້ນີ້ ຂ້າພະເຈົ້າຂໍກ່າວເຖິງເຣື່ອງຄວາມເປັນມາຂອງພຸທຄະຍາ ພໍໃຫ້ເປັນກາຣພື້ນຄວາມນຶກຄິດຂອງທ່ານຜູ້ຟັງໄວ້ຈັກນ້ອຍເສັຽກ່ອນວ່າ ເຫດໃດຈຶ່ງມີກາຣກູ້ເອົາສັງເວຊະນີຍະສຖານແຫ່ງນີ້ຂຶ້ນ

ໃຜໆກໍຮູ້ດີຢູ່ແລ້ວວ່າພຸທສາສນານີ້ເກີດຢູ່ໃນປະເທສອິນເດັຽ ໂດຍແມ່ນເຈົ້າຊາຍສິດທັດຖະຣາຊໂອຣົສຂອງພຣະເຈົ້າສີສຸດໂທທະນະ ແລະພຣະນາງສິຣິມະຫາມາຍາ ພຣະເຈົ້າກຸງກະບິລພັດ ເປັນຜູ້ຄົ້ນພົບຫລັກທັມຂອງພຣະພຸທສາສນານີ້ ແລ້ວໄດ້ອອກມາເຜີຍແຜ່ເປັນພຣະພຸທສາສນາຂຶ້ນ

ກາຣຄົ້ນຫາຫລັກທັມອັນນີ້ ພຣະອົງຄ໌ໄດ້ເຣີ່ມຕົ້ນດ້ວຍກາຣເລົ່າຮຽນປຣັຊຍາຕ່າງໆ ຈົນຄົບຖ້ວນ ເພື່ອສແວງຫາຄວາມພົ້ນທຸກຕາມວິໄສແຫ່ງຄວາມນິຍົມໃນສມັຍນັ້ນ ແຕ່ພຣະອົງຄ໌ເຫັນວ່າ ຍັງບໍ່ແມ່ນຫົນທາງທີ່ຈະນຳໄປໃຫ້ພົ້ນຈາກທຸກໄດ້ ຈຶ່ງໄດ້ປ່ຽນວິທີກາຣຄົ້ນຄວ້າໂດຍກາຣພຳເພັງວິປັສສະນາກັມມັດຖານຢູ່ໂດຍລຳພັງ ເມື່ອວັນຂຶ້ນ ໑໔ ຄ່ຳເດືອນ ປີ ກ່ອນພຸທທະສັກຣາຊ ໔໕ ປີ ຫລັງຈາກໄດ້ສັນເຂົ້າມະທຸປາຍາດຈາກນາງສຸຊາດາແລ້ວ ພຣະອົງຄ໌ໄດ້ເຂົ້າໄປນັ່ງສມາທິຢູ່ໃຕ້ຮົ່ມໂພໃຫຍ່ແຫ່ງນຶ່ງ ໂດຍໄດ້ຕັ້ງປະນິທານວ່າຈະທຳພຽນນັ່ງຄົ້ນຄວ້າຫາໂມຂະທັມອັນນີ້ຢູ່ນະທີ່ນີ້ຈົນໃຫ້ພົບ ຖ້າບໍ່ພົບແລ້ວຈະບໍ່ຍອມລຸກຂຶ້ນເປັນອັນຂາດ ແມ່ນວ່າສັງຂາຣຮ່າງກາຍຈະພຸພັງແຕກສລາຍລົງໃນທີ່ນີ້ເສັຽກໍຕາມ ເມື່ອພຣະອົງຄ໌ໄດ້ເຂົ້າສມາທິຄົ້ນຄິດໄປມາກໍເລີຍໄດ້ດວງປັນຍາອັນແກ່ກ້າ ສຳເຣັດຕຣັສຮູ້ພຣະສັມມາສັມໂພທິຍານ ໃນຄ່ຳວັນເພັງເດືອນ ປີ ນັ້ນ ໝາຍຄວາມວ່າເປັນຜູ້ຮູ້ແຈ້ງເຫັນຈິງ ໃນເຣື່ອງຣາວທຸກຢ່າງຂອງໄຕຣ



ທ່ານ ພ.ຕ.ອ. ເລື່ອນ ວິໄລຫົງສ໌ ເລຂາທິການພຸທວົງສ໌ກຳລັງສະແດງປາຖະກະຖາເລື່ອງງານກອບກູ້ພຸທຄະບາ ເນື່ອງໃນວັນພິທີສລອງວັນເກີດຄົບຮ້ອຍປີຂອງອະນາຄາຣິກະທັມມະປາລະ.

△ ▲ △



ອີກແຈບຶ່ງຂອງບັນດາທ່ານຜູ່ຟັງທັງຫລາຍ ພະຣິຍາພະນະທ່ານນາຍພິລພູມີ ໜໍ່ສວັນ ແລະ ພະຣິຍາພະນະທ່ານ ແກ້ວ ວິພາກອຣ ກໍໄດ້ໄປຮ່ວມທຳບຸນໃຫ້ທານນຳດ້ວຍ.

ພຣະ ເຖ ຣານຸ ເຖຣະ
ແລະ ພິຂຸ ສາມ ເນນ
ທັງຫລາຍ ຜູ່ເຂົ້າ
ຮ່ວມໃນພິທີ ມີພຣະ
ຄຣູຄູນ ມຸນີວົງສ໌
ອະດີດປະທານອົງຄ໌
ການສົງຄ໌ ພຣະທັມ
ມະວໍຣະບາຍົກທັມ
ມະທູດໄທປະຈຳລາວ
ເປັນຕົ້ນ

★

ບຸວະຊົນໂຮງຮຽນສິລທັມວັນອາທິດ ສຳນັກວັດທິວເມືອງ ກຳລັງສະແດງປາ ຖະກະຖາທັມມະ ເນື່ອງໃນພິທີສລອງ ວັນຄົບຮ້ອຍປີ ທັມມະປາລະ.

★

ໂລກ ເປັນຜູ້ຫລຸດພົ້ນໄປຈາກວັດຕະສົງສານ ເປັນຜູ້ມີດວງຈິດອັນບໍຣິສຸດຜຸດຜ່ອງໄດ້ຊື່ວ່າເປັນພຣະພຸທະເຈົ້າຕັ້ງແຕ່ໃນຕອນຂ້ອນຈະແຈ້ງແຫ່ງຣາຕຣີນັ້ນເປັນຕົ້ນມາ

ການຕຣັສຣູ້ຂອງພຣະອົງຄ໌ນັ້ນ ເປັນໄປຢ່າງໃດແລະຕຣັສຣູ້ອັນໃດນັ້ນ ຂໍບໍ່ມາກ່າວນະທີ່ນີ້ ເພາະຈະອອກນອກເຣື່ອງໃຫ້ເປັນການຄຸມເຄືອແກ່ບົດຄວາມອັນນີ້ ແຕ່ຂໍກ່າວເຖິງສຖານທີ່ປະທັບຂອງພຣະອົງຄ໌ເທົ່ານັ້ນ ເພາະວ່າສຖານທີ່ດັ່ງກ່າວນີ້ ເປັນບ່ອນສຳຄັນໃນເຣື່ອງພຸທສາສນາມາກ ໂດຍເຫດວ່າເປັນບ່ອນທີ່ເຈົ້າຊາຍສິດທັດຖະ ໄດ້ມາບັນລຸອະນຸດຣະທັມອັນວິເສສ ຕຣັສຣູ້ພຣະສັມມາສັມໂພທິຍານ ເປັນພຣະພຸທເຈົ້າຢູ່ນະທີ່ນີ້ ກໍເທົ່າກັບວ່າສຖານທີ່ນີ້ເປັນບ່ອນໃຫ້ກຳເນີດແກ່ພຣະພຸທສາສນາ ເໝືອນກັນກັບສວນລຸມພິນີ ເປັນບ່ອນໃຫ້ກຳເນີດແກ່ເຈົ້າຊາຍສິດທັດຖະນັ້ນເອງ ຈຶ່ງນັບວ່າເປັນສັງເວຊະນີຍະສຖານ ອັນສຳຄັນຍິ່ງຂອງບັນດາພຸທທະມາມະກະທັງຫລາຍໂດຍທົ່ວໄປ

ຕົ້ນໂພຕົ້ນນີ້ ໃນຄັ້ງທີ່ພຣະພຸທເຈົ້າເຂົ້າປະທັບບຳເພັນສມາທິດັ່ງກ່າວແລ້ວນັ້ນ ເປັນຕົ້ນໄມ້ຢູ່ໃນກາງປ່າປ່ຽວ ທຳໃຫ້ມີຄວາມສງັດງຽບເຢືອກເຢັນ ສົມໃຫ້ເກີດຄວາມວິເວກແກ່ພຣະອົງຄ໌ຜູ້ປະສົງຕັ້ງສມາທິອັນແນ່ວແນ່ໄດ້ແທ້ ເມື່ອພຣະອົງຄ໌ໄດ້ຕຣັສຣູ້ຢູ່ທີ່ນີ້ແລ້ວ ແລະເມື່ອພຣະພຸທສາສນາ ໄດ້ຕັ້ງຣາກຖານອັນໝັ້ນຄົງຂຶ້ນມາແລ້ວ ກໍເລີຍມີການບູຣະນະສຖານທີ່ນີ້ ໃຫ້ເປັນວັດວາອາຣາມ ເປັນບ້ານເປັນເມືອງຂຶ້ນໂດຍຕັ້ງຊື່ວ່າ "ພຸທຄະຍາ" ຄຳວ່າພຸທຄະຍານີ້ກໍມີເລື່ອງເຫດທີ່ມາໃຫ້ເອົາຊື່ນີ້ມາໃສ່ຢູ່ຫລາຍຢ່າງ ຊຶ່ງຂໍບໍ່ກ່າວໃຫ້ລະອຽດໃນທີ່ນີ້ ຂໍກ່າວແຕ່ພຽງວ່າສະຖານທີ່ນີ້ ຕັ້ງຢູ່ໃນແຄວ້ນ ມະຄະທະ ໃກ້ກັບເມືອງອັນນຶ່ງ ຊຶ່ງແຕ່ກ່ອນນັ້ນມີກະສັດຜູ້ຄອງເມືອງນັ້ນທະຣົງພຣະນາມວ່າ ກະສັດຄະຍາ ອີກເຣື່ອງນຶ່ງກໍໂດຍເຫດວ່າສຖານທີ່ນີ້ຕັ້ງຢູ່ໃນເຂດອີກທີ່ພົລຂອງຄະຍາກະເສຖມາແຕ່ເດີມ ໃນຄະຍາກະເສຖນີ້ສຖານທີ່ສັກສິທຊຶ່ງພວກ ຮິນດູຖວາຍເຂົ້າບິນທ໌ຢູ່ໂຮມ ໑ ປີແຫ່ງແລະ ມີຄະຍາ ຕໍ່ທ້າຍຢູ່ຫລາຍແຫ່ງຄື: ສີວະຄະຍາ ພຣົມມະຄະຍາ ເປຣາດະຄະຍາ – ຣາມມະຄະຍາ ບຸທີສະຖິຣະຄະຍາ ພິມມະຄະຍາ ແລະພຸທທະຄະຍາ ດັ່ງນີ້ເປັນຕົ້ນ ກ່ອນເວລາພຣະພຸທເຈົ້າມາດຣັສຣູ້ຢູ່ທີ່ນັ້ນ ສຖານທີ່ນີ້ມີຊື່ວ່າ ໂພທະຄະຍາ ເມື່ອພຣະພຸທເຈົ້າມາດຣັສຣູ້ໃນທີ່ນີ້ແລ້ວ ຈຶ່ງຮຽກທີ່ນີ້ວ່າ ພຸທຄະຍາ

ເຫດທີ່ມາໃຫ້ມີສັງເວຊະນີຍະສຖານ ໔ ແຫ່ງຂຶ້ນໃນອິນເດັຽນີ້ ນອກຈາກຄວາມຈິງແຫ່ງຄວາມເປັນມາຂອງຊີວະປວັດຂອງພຣະພຸທເຈົ້າແລ້ວ ຍັງມີຄວາມຖຸກເຕືອນຈາກ ພຣະພຸທເຈົ້າ

ເອງ ໃນເວລາກ່ອນຈະເຂົ້າສູ່ປະຣິນິພພານໄວ້ອີກດ້ວຍ ໃນວາຣະນັ້ນພວກສາວົກທັງຫລາຍ ເຫັນວ່າພຣະພຸທອົງຄ໌ຈະດັບຂັນເຂົ້າສູ່ປະຣິນິພພານແລ້ວ ຈະບໍ່ມີຜູ້ໃດເປັນຄູບາອາຈາຣຍ໌ ບໍ່ມີສິ່ງໃດເປັນທີ່ສັກກາຣະບູຊາຕໍ່ໄປອີກແລ້ວ ພຣະອານົນທ໌ຈຶ່ງໄດ້ກາບທູລພຣະພຸທເຈົ້າ ເຖິງເຣື່ອງທີ່ຂ້ອງໃຈຢູ່ນີ້ ພຣະພຸທເຈົ້າຈຶ່ງປະທານໂອວາທໄວ້ວ່າ "ໃຫ້ເຫລົ່າສາວົກທັງຫລາຍ ຖືເອົາສັງເວຊະນີຍະສຖານທັງ ໔ ແຫ່ງ ຄືທີ່ປະສູດ ທີ່ຕຣັສຮູ້ ທີ່ສແດງປະຖົມເທສນາ ແລະທີ່ເຂົ້າສູ່ປະຣິນິພພານ ນີ້ເປັນທີ່ສັກກາຣະ ແລະໃຫ້ເອົາພຣະທັມຄໍາສັ່ງສອນ ທີ່ໄດ້ບັນຍັດໄວ້ແລ້ວນັ້ນ ເປັນຄຣູບາອາຈາຣຍ໌ຂອງທ່ານຕໍ່ໄປເທີ້ນ"

ຕໍ່ເມື່ອພຣະພຸທເຈົ້າ ເຂົ້າສູ່ປະຣິນິພພານແລ້ວ ເຫລົ່າພຸທບໍຣິສັທທັງຫລາຍ ກໍໄດ້ພາກັນທະນຸບໍາຣຸງໝັ້ນຄົງຍິ່ງຂຶ້ນ ພ້ອມກັນນີ້ກໍໄດ້ມີການບູຣະນະປະຕິສັງຂອນ ສັງເວຊະນີຍະສຖານທັງ ໔ ແຫ່ງນັ້ນໄວ້ເປັນທີ່ສັກກາຣະບູຊາສືບມາ ສ່ວນພຸທຄະຍານັ້ນເປັນສະຖານທີ່ຕຣັສຮູ້ຂອງພຣະພຸທອົງນັ້ນ ເມື່ອຍ່າງເຂົ້າມາເຖິງພຸທະສັຕວັສ ປີ ນີ້ກະສັດອົງນຶ່ງ ຄອງເມືອງປາຕະລີບຸດທຣົງພຣະນາມວ່າ "ອະໂສກຣາຊ" ກະສັດອົງນີ້ເປັນນັກຣົບຜູ້ເກັ່ງກ້າສາມາດທໍາການແຜ່ອໍານາຈ ໂດຍການທໍາສົງຄາມໄປທົ່ວສາຣະທິສຄັນມາເຖິງຄັ້ງທີ່ພຣະອົງ ທໍາສົງຄາມກັບພວກກະລິງຄະ ພຣະອົງໄດ້ຂ້າຟັນເຫລົ່າສັຕຣູລົງເປັນຈໍານວນແສນຄົນໃນຄັ້ງດຽວນັ້ນ ຈຶ່ງເປັນເຫຕໃຫ້ພຣະອົງເກີດຄວາມສລົດໃຈຂຶ້ນໃນຄັ້ງນັ້ນເປັນຢ່າງຍິ່ງ ພຣະອົງໄດ້ມອງເຫັນຄວາມໂຫດຮ້າຍຂອງສົງຄາມ ແລະເຫັນວ່າການກະທໍາອັນນີ້ບໍ່ເໝາະສົມແກ່ມະນຸສຍະທັມເສັຍແລ້ວ ຈຶ່ງຫາທາງອອກເພື່ອຈະສ້າງທາງດີໄວ້ໃນຊີວິດ ເມື່ອມອງດູແລ້ວກໍບໍ່ມີສິ່ງໃດຈະດີໄປກວ່າການເອື້ອເຟື້ອເພື່ອແຜ່ຢູ່ກິນຮ່ວມກັນໂດຍສັນຕິ ມີຈິຕໃຈເມດຕາກະຣຸນາຕໍ່ສັພພະສັຕທັງຫລາຍ ຊຶ່ງເປັນເພື່ອນຮ່ວມທຸກເກີດແກ່ເຈັບຕາຍດ້ວຍກັນຕາມຫລັກຂອງພຣະພຸທະສາສນາຢ່າງນີ້ອີກແລ້ວ ເມື່ອນັ້ນພຣະເຈົ້າອະໂຊກຣາຊ ຈຶ່ງວາງອາວຸທຫັນເຂົ້າມາຖືພຣະພຸທະສາສນາຢ່າງເຄັ່ງຄັດ ຕາມຕໍານານວ່າຕັ້ງແຕ່ກ່ອນໃນໂຮງຄົວແຫ່ງຣາຊສໍານັກຂອງພຣະອົງນັ້ນ ທຸກວັນໄດ້ຕ້ອງຂ້າແພະ ໑໐໐ ຕົວຂ້າຄວາຍ ໑໐ ຕົວເປັນສບຽງອາຫານແກ່ເຫລົ່າບໍຣິວານ ຈຶ່ງເປັນການພຽງພໍ ເມື່ອພຣະອົງຫັນເຂົ້າຫາພຣະພຸທະສາສນາແລ້ວ ກໍເລີກການຂ້າສັດນັ້ນເສັຍໂດຍສິ້ນເຊີງ ແລ້ວທໍາບຸນໃຫ້ທານ ສ້າງວັດວາອາຣາມມາກຫລາຍກ່າຍກອງ ເປັນຈໍານວນເຖິງແປດໝື່ນສີ່ພັນ ເທົ່າກັບຈໍານວນພຣະທັມມະຂັນໃນພຣະໄຕຣປິດົກຂອງພຸທທະສາສນາ.

ຕາມຕຳນານກ່າວວ່າ ໃນຄາວທີ່ພຣະເຈົ້າອະໂສກຍັງບໍ່ທັນເຂົ້າມານັບຖືພຣະພຸທທະສາສນານັ້ນພຣະອົງເຄີຍໄດ້ມາທຳລາຍຕົ້ນໂພທີ່ຄັ້ງນຶ່ງ ແຕ່ບໍ່ມີຫລັກຖານໃດຢືນຢັນ ພຽງແຕ່ວິນິສໄສວ່າ ຕໍ່ເມື່ອພຣະອົງກັບໃຈເຂົ້າຫາພຣະພຸທສາສນາແລ້ວ ພຣະອົງສົນພຣະໄທຍ໌ກັບຕົ້ນມະຫາໂພທີນີ້ເປັນຢ່າງຍິ່ງ

ໃນຕອນທີ່ພຣະອົງເຜີຍແຜ່ພຸທສາສນານັ້ນ ຕໍ່ເມື່ອພຣະອົງຄ໌ໄດ້ສົ່ງ ພຣະມະຫິນທະ ໂອຣົສຂອງພຣະອົງໄປທຳການເຜີຍແຜ່ພຸທສາສນາ ຢູ່ທີ່ລັງກາແລ້ວ ພຣະອົງຄ໌ຊ້ຳດຳຣິ ຢາກໃຫ້ນາງ ສັງຄະມິຕຕາ ຣາຊທິດາຂອງພຣະອົງຄ໌ ອອກໄປລັງກາອີກຄົນນຶ່ງ ຈຶ່ງມີການດຳຣັດໃຫ້ນາງເປັນຜູ້ນຳຕົ້ນໂພດຣັສຣູ້ນີ້ໄປ ແຕ່ພຣະອົງເກງວ່າການທີ່ຕັດຕອນກິ່ງໂພນີ້ໄປນັ້ນ ອາດບໍ່ເປັນການສົມຄວນ ຈຶ່ງໄດ້ໃຫ້ພຣະສົງຮວມປະຊຸມກັນໃນເຣື່ອງນີ້ ພຣະໂມຄະລີບຸຕະຕິດສະເຖຣະຜູ້ເປັນໃຫຍ່ໃນຫມູ່ສົງໄດ້ຖວາຍພຣະພອຣວ່າ ພຣະພຸທອົງໄດ້ທຣົງອະທິຖານໄວ້ແລ້ວວ່າ ບໍຣົມມະບໍພິດ ຈະເປັນຜູ້ເຊີນກິ່ງພຣະສີມະຫາໂພທີ ໄປປະດິສຖານໄວ້ລັງກາ ສນັ້ນຈຶ່ງເຫັນວ່າພຣະອົງຄ໌ ຈະເປັນຜູ້ທຳໄດ້ ຈະບໍ່ເປັນບາບເປັນກັມແຕ່ຢ່າງໃດ. ໃນການທີ່ຈະຕັດຕອນກິ່ງໂພນີ້ຕາມພຣະຣາຊປະສົງ. ພຣະເຈົ້າອະໂສກຮູ້ສຶກຍິນດີ ແລ້ວສັ່ງໃຫ້ສ້ອມຖນົນຕັ້ງແຕ່ເມືອງປາຕະລີບຸດມາເຖິງພຸທະຄະຍາໃຫ້ຮຽບຮ້ອຍ ແລ້ວສັ່ງໃຫ້ເອົາຄຳມາຫລໍ່ອ່າງໃຫຍ່ລວງກົມ ໙ ສອກ ເລິກ ໕ ສອກ ແລະກວ້າງ ໓ ສອກ. ເສັດແລ້ວສເດັດພຣະຣາຊດຳເນີນ ມາຍັງຕົ້ນໂພນີ້ພ້ອມກັບພິກຂຸສົງທັງຫລາຍ ເມື່ອເຖິງແລ້ວກໍທຳການນະມັສການ ແລະເພັ່ງພະເນດເບິ່ງພຣະສີມະຫາໂພທີຕາມຕຳນານກ່າວວ່າ ຕົ້ນໂພໄດ້ສແດງປາຕິຫານໃຫ້ພຣະອົງເຫັນສຳຄັນ ກັບກິ່ງໂພທີຫອດໄປທາງທິດຕະວັນອອກ ຍາວປະມານ ໔ ສອກເຫມືອນກັບບອກໃຫ້ຮູ້ວ່າ ກິ່ງຕະວັນອອກນີ້ລະທີ່ຄວນເຊີນໄປລັງກາ ເມື່ອເຫັນດັ່ງນັ້ນແລ້ວກໍເກີດຄວາມປິຕິປຣາໂມທເປັນຢ່າງຍິ່ງພຣະອົງຄ໌ຈຶ່ງທຣົງຕັ້ງອະທິຖານວ່າ "ໂດຍເດຊະຄວາມສັທທາເຊື່ອຫມັ້ນໃນພຣະພຸທສາສນາຂໍໃຫ້ກິ່ງໂພອັນງາມນີ້ ປະຕິຫານຂາດເອງ ລົງມາປະດິສຖານຢູ່ອ່າງຄຳນີ້ເທີນ" ທັນໃດກິ່ງໂພກິ່ງນັ້ນ ກໍສແດງປາຕິຫານ ສເດັຈລົງມາສູ່ອ່າງທອງຄຳນັ້ນເອງ ດັ່ງພຣະຣາຊປຣາຖນາແທ້. ບັນດາພຣະສົງກໍພ້ອມກັນຍໍມືສາທຸການ ເກີດມີແຜ່ນດິນໄຫວຂຶ້ນຢ່າງມະຫັສຈັຣຍ໌ ບັງເກີດສັພພັນທະຣັງສີ ພຸ່ງອອກຈາກຕົ້ນໂພນັ້ນຈົນສວ່າງສໄວ ວັນນັ້ນເປັນວັນຂຶ້ນ ໑໕ ຄ່ຳເດືອນ ໑໑ ພຣະເຈົ້າອະໂສກໄດ້ຈັດໃຫ້ມີການສອງ ເປັນມຫາກັມຣວມ ໑໔ ວັນແລ້ວຈຶ່ງເຊີນກິ່ງໂພນັ້ນໄປສູ່ເມືອງ

ປາຕະລີບຸດ ທຳກາຣບຳຣຸງຮັກສາໄວ້ເປັນເວລາຫນຶ່ງປີເຕັມ ເມື່ອເຫັນວ່າຕົ້ນໂພແຂງແຮງດີ ແລ້ວຈຶ່ງໄດ້ຈັດສົ່ງໄປລັງກາ ດັ່ງທີ່ໄດ້ກ່າວໄວ້ແຕ່ເບື້ອງຕົ້ນ.

ເນື່ອງຈາກພຣະອົງສົນພຣະຫະທັຍນຳຕົ້ນໂພນີ້ເປັນຢ່າງຍິ່ງ ພຣະອົງໄດ້ທ່ຽວມານະມັສກາຣ ບົວຣະບັດຂັດສີຕົ້ນໂພນີ້ເປັນປະຈຳ ຄວາມດູດດື່ມໃນພຸທສາສນານັ້ນຫນັກເຂົ້າທຸກວັນ ຈົນພຣະອົງຄ໌ລືມຄອງຄາຣະວາສ ເຫີນຫ່າງໄປຈາກພຣະອັຄມະເຫສີ ຊຶ່ງຫາກໍເສກສົມຣົສກັບມາໄດ້ສາມປີເທົ່ານັ້ນ ຍ້ອນກາຣເອົາພຣະຫະທັຍ ຝັກໃຝ່ນຳແຕ່ຕົ້ນໂພນີ້ຢ່າງດຽວ ເລີຍເປັນເຫດໃຫ້ ນາງຕິສສະຍະຣັກຂະສິຕະ ອົງອັຄະມະເຫສີເກີດຄວາມອິສສາກັບຕົ້ນໂພ ນາງຈຶ່ງໄດ້ສັ່ງໃຫ້ທຳລາຍຕົ້ນໂພນັ້ນເສັຽ. ຕາມຕຳນານກ່າວວ່າ ກາຣທຳລາຍຕົ້ນໂພນັ້ນ ບາງສະບັບວ່ານາງໄດ້ເອົາໄລປາຝາໄປແທງຕາມລວງຍາວ ຂອງຕົ້ນໂພໃຫ້ຕາຍ ບາງສະບັບກ່າວວ່ານາງໄດ້ສັ່ງໃຫ້ຄົນໄປຕັດ ແຕ່ໃນຕອນທີ່ຕົ້ນໂພລົ້ມລົງນັ້ນ ພຣະເຈົ້າອະໂສກເຫັນກໍເລີຍຕົກພະຫະທັຍລົ້ມສລົບລົງກັບພື້ນດິນ ພວກຂ້າຣາຊບໍຣິພາຣໄດ້ທຳກາຣບີບຄັ້ນ ເບົາຍາ ໃຫ້ກັບຟື້ນພຣະສຕິຄືນມາແລ້ວ ກໍບໍ່ຍອມລຸກຂຶ້ນ. ຫາກຕາບໃດໂພຕົ້ນນີ້ ບໍ່ປົ່ງຫນໍ່ໃຫມ່ໃຫ້ເຫັນກ່ອນ ແລ້ວກໍເລີຍສັ່ງໃຫ້ທນຸຖນອມເຫງົ້າຕົ້ນໂພ ໂດຍເອົານ້ຳນົມມາຫົດຢູ່ເປັນເວລາ ໗ ວັນຫນໍ່ໂພຈຶ່ງປົ່ງຂຶ້ນມາແລ້ວ ພຣະອົງຄ໌ຈຶ່ງໄດ້ສເດັຈກັບສູ່ພະນະຄອຣ ໂດຍກາຣທົງປະຊວນຕໍ່ໆມາຕລອດເວລາ ໔ ເດືອນ ກໍເລີຍສວັຣຄົຕໄປ.

ກ່ຽວກັບຕົ້ນມຫາໂພທີ່ນີ້ ຕາມທີ່ຫລວງຈີນຖັງຊຳຈັງໄດ້ຂຽນໄວ້ວ່າ ຫລັງຈາກພຣະນາງຕິສສະຍະຣັກສິຕະໄດ້ທຳລາຍມາແລ້ວນັ້ນ ຍັງມີກະສັດເບງກອລ ອົງນຶ່ງຊື່ວ່າ ສະສາງກາ ໄດ້ມາຕັດຕົ້ນໂພນີ້ອີກ ເຫດກາຣອັນນີ້ໄດ້ເກີດເມື່ອ ຄ.ສ. ໖໐໐ ກ່ອນຫນ້າຫລວງຈີນຖັງຊຳຈັງມາເຖິງພຸທະຄະຍາ ພຽງປະມານ ໑໐ ກວ່າປີເທົ່ານັ້ນ ສະສາງກາເປັນກະສັດ ຊາວຮິນດູ ບໍ່ພໍໃຈໃຫ້ພຸທສາສນາມາແຂ່ງຂັນກັບສາສນາຮິນດູຢູ່ທີ່ນີ້ ຈຶ່ງໄດ້ສັ່ງໃຫ້ທຳລາຍວັດວາອາຣາມແລະຕົ້ນໂພວຣັສຣູ້ໃຫ້ສິ້ນເຊີງ ກະສັດສະສາງກາເກງວ່າຕົ້ນໂພຈະແຕກຫນໍ່ຂຶ້ນໄດ້ອີກ ເມື່ອຕັດຕົ້ນແລ້ວ ຈຶ່ງສັ່ງໃຫ້ຂຸດຮາກອອກໃຫ້ຫມົດ ເອົານ້ຳອ້ອຍມາຮວດ ແລ້ວເອົາໄຟເຜົາ ຫວັງຈະໃຫ້ໄຟລາມໄຫມ້ໄປສຸດທຸກໆຮາກ ແຕ່ບັງເອີນປາຍຮາກແກ້ວຂຸດຖົມບໍ່ຫມົດ ຍັງເຫລືອຕິດດິນຢູ່ຕໍ່ຈາກນັ້ນມີກະສັດອົງນຶ່ງທຮົງພຣະນາມວ່າ ປຣະນະວາຣະມາເປັນກະສັດອົງສຸດທ້າຍ ໃນຣາຊວົງຂອງພຣະເຈົ້າອະໂສກມຫາຣາຊ ໄດ້ຊາບເຫດກາຣໃນເຣື່ອງນີ້ ກໍຮູ້ສຶກເສົ້າສລົດໃຈເປັນອັນມາກ ແລ້ວຈຶ່ງໄດ້

ເຂົ້າມາທນຸບຳຣຸງເຫງົ້າຕົ້ນໂພ ໂດຍໄດ້ເອົານ້ຳນົມງົວ ໑໐໐໐ ແມ່ມາຫົດໃນບໍ່ຊ້ຳຮາກແກ້ວທີ່ເຫລືອຢູ່ໃນດິນນັ້ນ ກໍເລີຍແຕກໜໍ່ຂຶ້ນມາອີກແລ້ວ ພຣະອົງຈຶ່ງທນຸຖນອມສ້າງກຳແພງແກ້ວກັ້ນໄວ້ ເພື່ອບໍ່ໃຫ້ຄົນລອບເຂົ້າມາທຳລາຍອີກ.

ຕໍ່ຈາກນັ້ນກໍເລີຍບໍ່ປາກົດເຫັນຫລັກຖານຢືນຢັນວ່າຕົ້ນໂພນີ້ຖືກທຳລາຍອີກ ແຕ່ປາກົດວ່າໃນສໄມທີ່ຣັຖບາລອັງກິສ ຈຶ່ງປົກຄອງອິນເດັຽຢູ່ນັ້ນ ໄດ້ມອບທຸຣະໃຫ້ທ່ານ ເຊີອະເລກຊານເດີ ຄັນນິງແຮມ ມາທຳການບູຣະນະສຖານທີ່ນີ້ ເມື່ອ ຄ.ສ. ໑໘໘໐ (ພ.ສ. ໒໔໒໓) ປາກົດໃນປະວັດການວ່າຕົ້ນໂພນີ້ ໄດ້ລົ້ມລົງອີກຄັ້ງນຶ່ງທ່ານເຊີອະເລັກຊານເດີ ຄັນນິງແຮມ ໄດ້ຈັດການປູກຂຶ້ນໃຫມ່ໃນທີ່ເດີມ ແລ້ວແຍກໜໍ່ໂພອີກໜໍ່ໜຶ່ງໄປປູກໄວ້ທາງດ້ານເຫນືອ ຫ່າງຈາກທີ່ເດີມໄປປະມານ ໑໐໐ ແມດ ເພື່ອໃຫ້ຊາວຮິນດູ ໄດ້ນະມັສການພຣະວິສນຸຢູ່ທີ່ຕົ້ນນັ້ນ ສ່ວນຊາວພຸທໃຫ້ນະມັສການຢູ່ທີ່ຕົ້ນເດີມ.

ກ່ຽວເຣື່ອງຕົ້ນສີມະຫາໂພທີນັ້ນຂໍຍຸດໄວ້ແຕ່ພຽງເທົ່ານີ້ເສັຽ ຕໍ່ໄປນີ້ຂໍກ່າວເຖິງວິຫານແລະອາຄານຕ່າງ ໆ ທີ່ໄດ້ປະດິສຖານຢູ່ໃນບໍຣິເວນຕົ້ນສີມະຫາໂພທີນີ້ຕໍ່ໄປ.

ຕັ້ງຢູ່ໜ້າຕົ້ນສີມະຫາໂພທີນັ້ນ ມີວິຫານອົງນຶ່ງຊື່ວ່າ "ວິຫານມະຫາໂພທິ" ວິຫານອົງນີ້ ເຣື່ອງຊື່ລືນາມເປັນແບບສະບັບຂອງສິລປະສະຖານ ໃນສາສນາຂອງອິນເດັຽ ມີຜູ້ຈຳແບບໄປສ້າງກັນທົ່ວໄປ ຢູ່ໃນປະເທສ ເນປານ ກໍມີວິຫານແບບດຽວກັນນີ້ຊື່ວ່າ "ວິຫານມະຫາພຸທທະ" ຢູ່ທີ່ສາຣະນາດ – ຢູ່ທີ່ ເດລີ ບອມເບຍ໌ ກໍໄດ້ສ້າງວິຫານແບບດຽວກັນນີ້ໄວ້ເໝືອນກັນ ນອກນັ້ນຍັງມີຢູ່ທີ່ພະມ້າ ແລະຊຽງໃໝ່ (ປະເທສໄທຍ໌) ຈຶ່ງໄດ້ສ້າງວິຫານແບບນີ້ໄວ້ເປັນທີ່ສັກການະບູຊາເໝືອນກັນ.

ໃນຊັ້ນຕົ້ນຕັ້ງແຕ່ຄັ້ງພະເຈົ້າອະໂສກມະຫາຣາຊໄດ້ທ່ຽວສ້າງສັງເວຊະນີຍະສະຖານ ດັ່ງກ່າວແລ້ວເບື້ອງຕົ້ນນັ້ນ ພຣະອົງກໍໄດ້ສ້າງວິຫານແບບນີ້ຂຶ້ນກ່ອນ ຢູ່ດ້ານໜ້າຕົ້ນສີມຫາໂພທີນີ້ ແຕ່ເປັນວິຫານນ້ອຍກວ່າອົງດປັຈຈຸບັນ ແລ້ວໃຫ້ຊື່ວ່າ ວິຫານມຫາໂພທິ ເພາະຕັ້ງຢູ່ໜ້າຕົ້ນສີມຫາໂພທິ ພຣະອົງຄໄດ້ສ້າງ ວັຊຣະອາສນ໌ (ແທ່ນເພຊ) ຂຶ້ນໄວ້ກ້ອງຕົ້ນໂພນີ້ ຈຶ່ງຄາດວ່າ ເປັນບ່ອນທີ່ພຣະພຸທອົງຄ໌ທະຣົງປະທັບ ເຂົ້າສມາທິທຳການຕັສຣູ້ຢູ່ທີ່ນັ້ນ.

ຫລັງຈາກແຜ່ນດິນຂອງພຣະເຈົ້າອະໂສກໄດ້ລ່ວງພົ້ນໄປປະມານ ໔ ສັຕະວັສ ຫລວງຈີນຟາຫຽນ ໄດ້ເດີນທາງຈາກປະເທສຈີນ ເຂົ້າມາເຖິງສະຖານທີ່ນີ້ ໄດ້ບັນທຶກໄວ້ວ່າ ມີສັງຄາຣາມຢູ່ສາມຫລັງດ້ວຍກັນ ແຕ່ຄາດຄະເນວ່າ ຫລັງນຶ່ງຄົງແມ່ນກະສັດລັງກາສ້າງໃຫ້ ເພາະມີຊາວ

ລັງກາໄດ້ຫຼັ່ງມານະມັສການສຖານທີ່ນີ້ມາກ ໃນສັງຄາຣາມສາມຫລັງນີ້ ມີພຣະພິກຂຸສົງຢູ່ເປັນຈຳນວນມາກ ພຣະພິກຂຸເຫລົ່ານັ້ນ ຖືລັດທິມຫາຍານ ຢູ່ໃນຣະບຽບວິນັຍເຄັ່ງຄັດມາກ ມີການທະນຸບຳຣຸງຈາກປະຊາຊົນຢ່າງເຫລືອເຟືອ ໄດ້ ໖ ສັຕວັຕເຖິງຕໍ່ມາ ຈຶ່ງມີຫລວງຈີນອີກຄົນນຶ່ງຊື່ຖັງຊຳຈັງມາເຖິງກໍໄດ້ບັນທຶກໄວ້ວ່າ ມີວິຫານຢູ່ສາມຫລັງ ຫລັງນຶ່ງໃຫຍ່ສູງປະມານ ໗໐ – ໘໐ ແມດ ຕັ້ງຢູ່ວໍ່ໜ້າຕົ້ນສີມຫາໂພທິ ບ່ອນເດີມຂອງວິຫານທີ່ພຣະເຈົ້າອະໂສກໄດ້ສ້າງໄວ້ ຊຶ່ງເປັນພຣະວິຫານອົງຄ໌ປັຈຈຸບັນນີ້ເອງ ພຣະວິຫານອົງນີ້ປາກົດວ່າແມ່ນພຣາມຜູ້ນຶ່ງໄດ້ສ້າງຂຶ້ນ ແຕ່ບໍ່ປາກົດຊື່ສຽງວ່າແມ່ນຜູ້ໃດແທ້ ຫາກຊາບແຕ່ວ່າເປັນຜູ້ນັບຖືພຣະສີວະ ພຣາມຜູ້ນີ້ມີນ້ອງຊາຍອີກຜູ້ນຶ່ງຊຶ່ງເປັນຄົນຮັ່ງມີ ນັບຖືພຣະສີວະເໝືອນກັນ ທັງສອງອ້າຍນ້ອງໄດ້ພ້ອມກັນໄຫວ້ວອນ ຂໍພອຣຈາກພຣະຜູ້ເປັນເຈົ້າຂອງຕົນ ເລີຍເກີດນິມິຕວ່າ ຜູ້ທີ່ຈະໄດ້ພອຣຄວາມສຳເຣັຈໂຊກລາບຈາກພຣະຜູ້ເປັນເຈົ້ານັ້ນ ຕ້ອງທຳບຸນເສັຽກ່ອນ ໂດຍໃຫ້ສ້າງວິຫານໃຫຍ່ຂຶ້ນທີ່ໜ້າຕົ້ນໂພທິສຣູ້ຂອງພຣະພຸທເຈົ້າ ແລະໃຫ້ຂຸດສະໃຫຍ່ໄວ້ເປັນທີ່ປະກອບພິທີທາງສາສນາຂອງປະຊາຊົນ ພຣາມສອງອ້າຍນ້ອງ ຈຶ່ງໄດ້ມາສ້າງສຖານທີ່ນີ້ຂຶ້ນ ຜູ້ອ້າຍໄດ້ສ້າງພຣະວິຫານໃຫຍ່ອົງຄ໌ນີ້ຂຶ້ນແທນທີ່ວິຫານຂອງພຣະເຈົ້າອະໂສກ ຜູ້ນ້ອງໄດ້ສ້າງສະນ້ຳໃຫຍ່ໄວ້ທາງຕອນໃຕ້ຂອງພຣະວິຫານນັ້ນ ເມື່ອສ້າງເສັຈແລ້ວກໍເລີຍພາກັນສລອງບວງສວງພຣະຜູ້ເປັນເຈົ້າຂອງຕົນ ແລ້ວທັງສອງອ້າຍນ້ອງກໍເລີຍໄດ້ໂຊກລາບສົມປະສົງ ໄດ້ເປັນຂ້າຣາຊການຊັ້ນຜູ້ໃຫຍ່ ໃນຣາຊສຳນັກຂອງພຣະມຫາກະສັດ.

ນອກຈາກນີ້ຍັງມີວິຫານອີກນຶ່ງສູງໃຫຍ່ບັນຈຸພະສົງໄດ້ເຖິງ ໑໐໐໐ ຮູປ ຊື່ວິຫານນີ້ວ່າມຫາໂພທິສັງຄາຣາມ ເປັນອາຄານສາມຊັ້ນມີ ໙ ຫ້ອງ ຊຶ່ງເວລານີ້ ຍັງເຫລືອເປັນໂພນສູງໆ ຢູ່ທາງດ້ານເໜືອຂອງວິຫານມຫາໂພທິ ຕໍ່ມາເຖິງສັຕວັຕທີ ໑໑ ມຫາໂພທິສັງຄາຣາມ ເລີຍກາຍເປັນປ້ອມທະຫານ ເພາະເຫຕມີກຳແພງສູງໃຫຍ່ ຜູ້ບັງຄັບການປ້ອມນີ້ຊື່ ອະມໍຣະສິງຫ໌ ສນັ້ນມະຫາໂພທິສັງຄາຣາມ ຈຶ່ງປ່ຽນຊື່ເປັນປ້ອມ ອະມໍຣະສິງຫ໌ ຈົນຕາບເທົ່າທຸກວັນນີ້.

ຕອນທີ່ທ່ານ ເຊີຣ໌ອະເລັກຊານເດີຣ໌ ຄັນນິງແຮມ ມາບູຣະນະສຖານທີ່ນີ້ ໄດ້ພົບຊາກອາຄານໃຫຍ່ຫລາຍຫລັງ ຢູ່ທາງຕະວັນຕົກສຽງເໜືອຂອງ ມຫາໂພທິສັງຄາຣາມ ອາຄານເຫລົ່ານັ້ນມີຊື່ວ່າ ຣາຊສະຖານ ແລະຣານີວາສ ຣາຊສະຖານ ຄົງເປັນອາຄານທີ່ພຣະເຈົ້າ ອິນທຣາຄະນີມິດ ສ້າງເປັນກຸຕິຖວາຍແດ່ພຣະສົງ ຈຶ່ງໃຫ້ຊື່ວ່າຣາຊສະຖານ ສ່ວນຣານີວາສນັ້ນຄົງເປັນ

ຂອງອົງຄ໌ອັຄະມະເຫສີ ຫລັງສ້າງຂຶ້ນເປັນທີ່ປະທັບໃນເວລາທີ່ພຣະອົງຄ໌ ເຂົ້າທຣົງຜນວດເປັນຊີ.

ໃນຣະວ່າງ ພ.ສ. ໘໗ປີ ພຣະເຈົ້າສມຸທຣຄຸປຕະ ກະສັດແຫ່ງແຄວັນນີ້ໄດ້ຊົງພຣະບໍຣົມຣາຊານຸຍາດໃຫ້ກະສັດລັງກາອົງຄ໌ນຶ່ງ ມາສ້າງສັງຄາຣາມໄວ້ໃຫ້ຊາວລັງກາ ທີ່ມານະມັສການສຖານທີ່ນີ້ອີກ ກະສັດລັງກາອົງຄ໌ນີ້ມີຊື່ວ່າ ເມຄະວາຣະນາ ຫລືເມຄະວັນນາ ໄດ້ສ້າງສັງຄາຣາມອົງຄ໌ດັ່ງກ່າວນີ້ຂຶ້ນໄວ້ ທາງຕາວັນຕົກສ່ຽງໃຕ້ຂອງວິຫາຣມຫາໂພທິ ດຽວນີ້ກໍຍັງເຫລືອແຕ່ຊາກໃຫ້ເຫັນຢູ່ເໝືອນກັນ.

ໃນຕອນທີ່ກະສັດ ສະສາງກາ ມາທຳລາຍຕົ້ນໂພດັ່ງກ່າວແລ້ວເບື້ອງຕົ້ນນັ້ນ ກະສັດສະສາງກາ ບໍ່ໄດ້ທຳລາຍສັງຄາຣາມແຕ່ປະການໃດ ພຽງແຕ່ຂັບໄລ່ພວກພຣະສົງຄ໌ໃນພຸທສາສນາໜີໄປໃຫ້ໝົດ ໃນຄັ້ງນັ້ນ ສະສາງກາ ໄດ້ເຂົ້າໄປໃນວິຫາຣມຫາໂພທິ ພົບພຣະພຸທປະຕິມາກອຣຕັ້ງໄວ້ບູຊາອົງຄ໌ນຶ່ງ ທຳອິດຄິດຈະທຳລາຍດ້ວຍພຣະຫັຖຂອງພຣະອົງຄ໌ເອງ ແຕ່ເມື່ອໄດ້ເຫັນພຣະພັກຕ໌ຂອງພຣະພຸທຣູປອົງຄ໌ນັ້ນເຕັມໄປດ້ວຍຄວາມເມຕຕາປານີ ກະສັດສະສາງກາເລີຍບໍ່ກ້າທຳເອງໄດ້ ຈຶ່ງສເດັຈກັບພຣະນະຄອຣ ຄັນໄປຮອດກາງທາງເລີຍຄິດວ່າ ຖ້າໃຫ້ພຣະພຸທຣູປອົງຄ໌ນີ້ ຍັງປະດິສຖານໄວ້ໃນພຣະວິຫາຣນັ້ນ ຈະຕ້ອງເປັນຊະນວນໃຫ້ຊາວພຸທກັບມາແຂ່ງອິດທິພົລຢູ່ໃນທີ່ນັ້ນອີກ ຈຶ່ງສັ່ງໃຫ້ນາຍທະຫາຣຜູ້ນຶ່ງກັບໄປທຳລາຍເສັຽ ຄັນນາຍທະຫາຣຜູ້ນັ້ນໄດ້ຮັບສັ່ງແລ້ວ ກໍກັບມາຍັງວິຫາຣມຫາໂພທິອີກ ເມື່ອມາມອງເຫັນພຣະພຸທຣູປແລ້ວ ກໍເລີຍຄວາມສລົດໃຈເຊັ່ນດຽວກັນຈຶ່ງບໍ່ກ້າທຳລາຍ ແຕ່ເມື່ອຮູ້ສຶກເຊັ່ນນັ້ນແລ້ວບໍ່ຮູ້ຈັກຈະເຮັດແນວໃດ ຖ້າຈະບໍ່ທຳລາຍກໍຢ້ານຖືກໂທສທັນທີ ຖ້າຈະທຳລາຍກໍກົວຈະເປັນບາບອັນໜັກ ຈຶ່ງໄດ້ໄປຕິດຕໍ່ກັບຊາວພຸທຜູ້ມີສັທທາຜູ້ນຶ່ງ ມາປຶກສາຕົກລົງກັນແລ້ວລົງມືສ້າງກຳແພງກັ້ນພຣະພຸທຣູປນັ້ນໄວ້ ໃຫ້ພົ້ນຈາກສາຍຕາຂອງປະຊາຊົນໄປເສັຽ ແລ້ວນາຍທະຫາຣຜູ້ນັ້ນຈຶ່ງກັບໄປກາບທູລ ກະສັດສະສາງກາ ວ່າໄດ້ປະຕິບັດຕາມຄຳສັ່ງແລ້ວ ກະສັດສະສາງກາ ແທນທີ່ຈະພໍພະໄທຍ໌ ເລີຍເກີດສະດຸ້ງຫວາດກົວ ເກງວ່າຈະໄດ້ຮັບໄພຍ໌ອັນຕຣາຍແກ່ຕົນ ນັບແຕ່ນັ້ນມາກໍເລີຍລົ້ມປະຊວນມີອາການປວດໄປທົ່ວພຣະອົງຄ໌ຣະກາຍ ບໍ່ນານມີອາການເນື້ອຫລຸດອອກເປັນຕ່ອນໆ ແລ້ວກໍເລີຍສິ້ນພຣະຊົນ ເມື່ອກະສັດສະສາງກາສິ້ນພຣະຊົນແລ້ວ ນາຍທະຫາຣຜູ້ນັ້ນຮີບກັບມາທຳລາຍກຳ

ແພງທີ່ກັ້ນພຣະພຸທຮູປນັ້ນອອກ ປະກົດວ່າຕະກຽງນ້ຳມັນທີ່ໄດ້ບູຊາໄວ້ຕັ້ງແຕ່ຄັ້ງນັ້ນ ຍັງລຸກເປັນແສງຢູ່ຕາມເດີມ.

ສາສນາພຣາມໄດ້ຕົກເຂົ້າມາເຖິງພຸທຄະຍານີ້ ໃນຣະຫວ່າງຄຣິສຕະສັຕວັດທີ່ ໕ ຫລື ທີ່ ໖ ໂດຍການສນັບສນູນຂອງເຈົ້າຜູ້ຄອງອິນເດັຽເໜືອ ເຊັ່ນສະສາງກາເປັນຕົ້ນ ແລ້ວກໍມີການໃຊ້ກຳລັງບັງຄັບ ເພື່ອປ່ຽນດິນແດນຂອງພຸທນີ້ ໃຫ້ເປັນດິນແດນຂອງພຣາມຜູ້ນັບຖືພຣະສີວະ ແຕ່ກໍບໍ່ສຳເຣັດ ເພາະພຸທຄະຍາຍັງເປັນທີ່ສັກການະຂອງຊາວພຸທໃນຕ່າງປະເທສ ເຂົ້າມານະມັສການຢູ່ຕລອດເວລາ ໝັກເຂົ້າມາພຸທກັບພຣາມກໍເລີຍເຂົ້າຢູ່ຮ່ວມກັນໄດ້ໂດຍສງົບ ທັງນີ້ກໍເພາະວ່າຝ່າຍພຸທບໍ່ໄດ້ຄິດອິດສານັງບຽດຝ່າຍໃດ ມີແຕ່ຝ່າຍພຣາມເທົ່ານັ້ນທີ່ຄິດປາກກຳຈັດຝ່າຍພຸທອອກໄປ ໃນຄຣິສັຕວັດທີ່ ໑໐ ເມື່ອຝ່າຍພຸທກັບພຣາມຢູ່ຮ່ວມກັນໄດ້ ແລ້ວກໍໄດ້ຮ່ວມກັນທຳນຸບຳຣຸງມຫາພຸທສັງຄາຣາມໂດຍທຳການປະຕິສັງຂອນຂຶ້ນໃໝ່ອີກ ຄັ້ງນີ້ເປັນ ຄ.ສ. ໙໔໘ (ພ.ສ. ໑໔໙໓) ມີພຣາມຄົນນຶ່ງ ຊື່ ອະມໍຣະເທວະ ເປັນປຸໂຣຫິຕຂອງພຣະເຈົ້າວິກຣມາທິຕແຫ່ງເມືອງ ມັລວາ ມີຈິຕສັທທາໃນສຖານທີ່ນີ້ ຈຶ່ງອອກແບບສ້າງວິຫານມະຫາໂພທີ່ຂຶ້ນໃໝ່ ໂດຍເອົາເຄົ້າ ເທວາໄລ ຂອງສາສນາພຣາມຜສົມກັບເຈດີຂອງພຸທສາສນາ ຄືນອດເປັນສະຖູບ ຕອນກາງເປັນປາງຄ໌ ຕອນລ່າງເປັນວິຫານ ຄວາມມຸ່ງໝາຍ ກໍເພື່ອສແດງໃຫ້ເປັນອນຸສອນ໌ໄວ້ວ່າ ພຸທກັບພຣາມເປັນວັທນະທັມອິນເດັຽດ້ວຍກັນນັ້ນເອງ ຄວາມສງົບສັນຕິສຸຂ ຣະວ່າງພຸທກັບພຣາມ ດຳຣົງຢູ່ຊົ່ວຣະຍະເວລານຶ່ງ ຄັນມາໃນຂັ້ນຫລັງ ພຣາມຊ້ຳເປັນຝ່າຍແຍ່ງກະດ້າງເອົາກັບພຸທກ່ອນ ປາກົດຫລັກຖານຢູ່ໃນຄຳພີ ຄະຍານທາຕະມະຍາ ທີ່ແຕ່ງໃນຣາວຄຣິສຕະວັດທີ່ ໑໓ ຫລື ໑໔ ນັ້ນ ໄດ້ສາບໄວ້ວ່າ ພຣາມທີ່ຄະຍາຜູ້ໃດໄປປະກອບພິທີສາສນາຕໍ່ໜ້າພຣະພຸທຮູປທີ່ພຸທຄະຍາ ຈະຖືເປັນບາປຢ່າງຮ້າຍແຮງ

ຢ່າງໃດກໍຕາມ ມາເຖິງຄັ້ງນີ້ນັບວ່າ ພຸທຄະຍາຍັງຢູ່ໃນຄວາມຄອບຄອງຂອງພຸທຢູ່ກໍວ່າໄດ້ ເມື່ອ ຄ.ສ. ໑໐໗໙ (ພ.ສ. ໑໖໒໒) ຊາວພຸທພະມ້າມີພິກຂຸ ທັມມະຣັກຂິຕະ ເປັນຫົວໜ້າ ໄດ້ດຳເນີນການສ້ອມແຊມ ບູຣະນະວິຫານພຸທຄະຍາ ແລະກຳແພງແກ້ວທີ່ລ້ອມຮອບນັ້ນ ອີກຄັ້ງນຶ່ງ ໃນການສ້ອມແຊມຄັ້ງນັ້ນ ມີກະສັດອິນເດັຽສອງອົງຄ໌ ເຫລື້ອມໃນພຣະພຸທສາສນາຝ່າຍມຫາຍານອົງຄ໌ນຶ່ງ ທະຣົງພຣະນາມວ່າ ອະໂສກະວັລລ໌ ຄອງນະຄອນ ສະປາທລັກສ໌ ອີກອົງຄ໌ນຶ່ງ ທະຣົງພຣະນາມວ່າ ປຸຣຸໂສຕະມະສິງຫ໌ ຄອງນະຄອນເຊນາ ມີຈິຕສັທທາໃຫ້ນຸບແກ່ພິກຂຸທັມ

ພະຣັກຂິຕະນີ້ ບອກນັ້ນກະສັດອົງຄ໌ຊື່ວ່າ ປຸຣຸໄສຕວະນະສິງຫ໌ ບັງສ້າງກຸຕິສົງຄ໌ຫລັງນຶ່ງຕ່າງຫາກອີກຮຽກວ່າ ຄັນທະກຸຕິ ອຸທິສໃຫ້ແກ່ຣາຊທິດາຜູ້ລ່ວງລັບໄປແລ້ວນັ້ນດ້ວຍ ຫລັງຈາກການສ້ອມໃຫມ່ຄັ້ງນັ້ນແລ້ວ ພຸທຄະຍາກໍ່ຖືກທຳລາຍລຽບລົງດ້ວຍຝີມືຂອງນັກຣົບມຸສລິມຜູ້ເຂົ້າມາໃໝ່ ສາສນະສະຖານຂອງພຸທຫລືພຣາມ ທີ່ມີຢູ່ໃນອິນເດັຽເໜືອຖືກເຜົາຜານລົງເປັນພັສທຸລີ ພຸທຄະຍາຈຶ່ງຮ້າງໄປ ຈົນກະທັ່ງກົນກຸບເລືອດມະນຸສຈາງລົງໃນແດນດິນນີ້ແລ້ວ ຊາວພຸທຜູ້ມີສັທທາກໍມາບູຣະນະສຖານທີ່ນີ້ຂຶ້ນອີກ ແລະກຽດຕິຍົສອັນນີ້ຕົກແກ່ຊາວພຸທພະມ້າ ກະສັດພະມ້າທະຣົງພຣະນາມວ່າ ເຕນະປຸນວະຂິ້ນດາຣາມິງກະຍີ ໄດ້ໂປດໃຫ້ພຣະສັງຄະຣາຊພະມ້າຊື່ ສີທັມມະຣາຊຄຸນ ເປັນປະທານໃນການບູຣະນະພຸທຄະຍາໃຫ້ຄົງຄືນສະພາບເດີມ ການບູຣະນະຄັ້ງນັ້ນຕົກເປັນ ຄ.ສ.໑໓໔໐ (ພ.ສ. ໑໘໘໓) ຫລັງຈາກນັ້ນມາກໍເລີຍບໍ່ປາກົດຫລັກຖານການບູຣະນະພຸທຄະຍາອີກ ພຽງແຕ່ຝ່າຍພຣາມຜູ້ນັບຖື ພຣະສີວະໄດ້ຂຽນໄວ້ວ່າ ໃນກາລະຕໍ່ມາແລ້ວ ພຸທຄະຍາໄດ້ຖືກທອດຖິ້ມເປັນປ່າດົງວົງກົດໄປ ໂດຍເຫດວ່າພວກມຸສລິມຣົບກວນ ຫລືໂດຍການຣົບກວນຂອງພວກພຣາມນັ້ນເອງກໍບໍ່ຮູ້ ຢ່າງດຽວກັນກັບ ນາລັນທາ ເມື່ອຖືກພວກມຸສລິມທຳລາຍແລ້ວ ຊາວພຸທພຍາຍາມໄປຊ່ອມບູຣະນະອີກກໍບໍ່ເປັນຜົລສຳເຣັຈ ເພຣາະຖືກພວກພຣາມກີດກັນຕ່າງໆ ນານາ ຈົນຕ້ອງລ່າຖອຍໄປໝົດ ພຸທສາສນາຈຶ່ງສ້ຽງສູນໄປໃນແຄວ້ນມະຄະທະແລະອິນເດັຽເໜືອ ຕັ້ງແຕ່ຄັ້ງນັ້ນເປັນຕົ້ນມາ ພວກພຣາມໄດ້ເຂົ້າຄອງສະຖານທີ່ເຫນ ບາງແຫ່ງກໍຖືກທຳລາຍໃຫ້ຈົມດິນຈົມຊາຍຫາຍໄປເລີຍ ພຸທຄະຍາຫລຸດມືຊາວພຸທໄປຢ່າງເດັດຂາດ ຕັ້ງແຕ່ເມື່ອຣາວ ຄ.ສ. ໑໕໙໐ (ພ.ສ. ໒໑໓໓) ແລະຕົກຢູ່ໃນຄວາມຄອບຄອງຂອງນັກບວຊໃນລັດທິບູຊາພຣະສີວະ. ຮຽກຊື່ວ່າ ມະຫັນຕ໌ ຕລອດມາ

ການກອບກູ້ພຸທຄະຍາ

ຄືນມາເປັນຂອງຊາວພຸທ

ເທົ່າການທີ່ໄດ້ເລົ່າມາພໍເປັນສັງເຂບແລ້ວນີ້ ສໍ້ໃຫ້ເຫັນແລ້ວວ່າ ພຸທຄະຍາ (ບ່ອນຕຣັສຮູ້ຂອງພຣະພຸທເຈົ້າ) ນັ້ນ ໄດ້ພົ້ນຈາກມືຂອງຊາວພຸທໄປແລ້ວໂດຍສິ້ນເຊີງ ແຕ່ວ່າຄວາມຈິງຍ່ອມບໍ່ໜີຄວາມຈິງ ບັນດານັກປາຊຍ໌ແລະນັກບວຊຊິນທີ່ມີຈິຕໃຈເປັນທັມຍັງຮູ້ສຶກຢູ່ສເມີວ່າ ສະຖານທີ່ນີ້ຄວນເປັນຂອງຊາວພຸທຈຶ່ງຈະເປັນການຖືກຕ້ອງແລະເໝາະສົມ

ຕໍ່ມາໃນຣະຫວ່າງ ຄ.ສ. ໑໘໗໖ ເຖິງ ໑໘໘໔ ໄດ້ມີການບູຣະນະຂຶ້ນອີກ ຣັຖບາລອິນເດັຍຂອງອັງກິສຍັງຕະໜັກໃຈໃນຄວາມສຳຄັນຂອງສັງເວຊະນີຍະສຖານແຫ່ງນີ້ວ່າ ມີຄວາມສຳຄັນຕໍ່ຊາວພຸທທົ່ວໂລກຢູ່ເປັນຢ່າງດີ ແຕ່ມີຄວາມເກງໃຈພວກມະຫັນຫລາຍ ທ່ານເຊີຣ໌ ເຄລັງສັນ ເຈົ້າເມືອງຄະຍາ ຈຶ່ງໄດ້ຂໍອະນຸຍາດນຳພວກມະຫັນວ່າ ປາກຈະເອົາເຈົ້າໜ້າທີ່ທາງຣາຊການມາຊ່ວຍດູແລສະຖານທີ່ອັນສັກສິທທີ່ໄດ້ບູຣະນະຂຶ້ນແລ້ວນີ້ ເພາະວ່າການດູແລຂອງພວກມະຫັນນັ້ນຍັງບົກພ່ອງຢູ່ບາງປະການ ພາໃຫ້ມັກມີຊາວບ້ານ ຫລືຜູ້ທີ່ມານະມັສການສະຖານທີ່ນີ້ ຍົບເອົາສິ່ງຂອງໜີໄປຢູ່ເລື້ອຍໆ ທາງຝ່າຍມະຫັນກໍ່ເຫັນດີນຳ ທ່ານ ເຊີຣ໌ເຄລັງສັນ ເຈົ້າເມືອງຄະຍາ ຈຶ່ງໄດ້ສົ່ງ ມິສເຕີຣ໌ ແມຄດ໋ອກຊ໌ ມາເປັນຜູ້ດູແລເປັນຄົນແຣກ ຢູ່ມາໄດ້ນຶ່ງປີ ກົມໂບຮານເທສ-ບາລ ກໍເຂົ້າຮັບມອບໝາຍຈາກ ມິສເຕີຣ໌ ແມຄດ໋ອກຊ໌ ເຊິ່ງເປັນຜູ້ຮັກສາສະຖານທີ່ນີ້ ສືບມານັບແຕ່ຄ. ສ. ໑໘໙໐.

ໃນຣະຫວ່າງນັ້ນມີສຽງຮຽກຮ້ອງຂອງຊາວພຸທວ່າ “ຊາວພຸທ ຄວນຈະເຂົ້າຄອງສະຖານທີ່ນີ້” ໄດ້ດັງຂຶ້ນເນື່ອງຈາກມີຊາວອັງກິສຜູ້ນຶ່ງ ຊື່ ເຊີຣ໌ເອດວິນ ອາຣໂນລ ມີຄວາມເຫລື້ອມໃສພຸທທະສາສນາໄດ້ມາເຫັນສະຖານທີ່ນີ້ ໃນເວລາທຳການບູຣະນະຢູ່ນັ້ນ ໄດ້ຂຽນຄຳຮຽກຮ້ອງສິທອັນນີ້ໄປຮຽນຕໍ່ຣັຖບາລອັງກິສແລະຣັຖບາລອິນເດັຍ ກັບຍັງສົ່ງຄຳຊີ້ແຈງໄປຍັງປະເທສຕ່າງໆ ທີ່ຖືພຸທສາສນາແຕ່ກໍ່ບໍ່ປາກົດໄດ້ຮັບຄວາມສົນໃຈເອົາຈິງເອົາຈັງຢ່າງໃດຂຶ້ນມາ.

ຕໍ່ມາເຖິງ ຄ. ສ. ໑໘໙໑ (ພ. ສ. ໒໔໓໔) ຈຶ່ງມີມະນຸສໃຈເດັດຜູ້ນຶ່ງ ເປັນຊາວລັງກາໄດ້ເດີນທາງມາໄຫວ້ພຣະທີ່ນີ້ ການຕໍ່ສູ້ເພື່ອກອບກູ້ເອົາພຸທຄະຍາຄືນໃຫ້ເປັນຂອງຊາວພຸທ

ຕາມສິທທິອັນຊອບທັມ ຈຶ່ງໄດ້ເຣີ່ມຕົ້ນຂຶ້ນ ບຸຣຸສຜູ້ນີ້ກໍຄື ທ່ານອະນາຄາຣິກະທັມະປາລະ ຜູ້ທີ່ເຮົາກຳລັງທຳການສເລີມສລອງຄຸງຄຸນຢູ່ນີ້ເອງ.

ການຕໍ່ສູ້ຂອງທ່ານ ອະນາຄາຣິກະທັມມະປາລະນີ້ ເຕັມໄປດ້ວຍເຣື່ອງທີ່ໜ້າຕື່ນເຕັ້ນຢູ່ບໍ່ນ້ອຍ ໃນວັນທີ່ທ່ານມາເຖິງທີ່ນີ້ເປັນຄັ້ງແຣກນັ້ນ ເມື່ອເດືອນ ມົກຣາຄົມ ໑໘໙໑ ທ່ານໄດ້ເຫັນພຣະພຸທທຣູປແຕກຫັກຕົກຢູ່ເກື່ອນກາດຕາມສອງຂ້າງທາງ ເປັນໄລຍະປະມານກິໂລແມຕເຄິ່ງ ເມື່ອມາເຖິງທາງເຂົ້າສູ່ພຣະວິຫາຣກໍໄດ້ເຫັນພຣະພຸທທຣູປປາງສມາທິ ແລະປາງປະຖົມເທສນາ ຕັ້ງຢູ່ຫລາຍອົງຄ໌ ຫົວໃຈຂອງທ່ານເຕັມໄປດ້ວຍຄວາມປີຕິເບີກບານເປັນຢ່າງຍິ່ງ ທ່ານໄປເຖິງຕົ້ນໂພຕັສຣູ້ ຊົບໜ້າລົງກັບວັຊຣະອາສນ໌ດ້ວຍຄວາມເຄົາຣົພຢ່າງສູງສຸດ ທັນໃດນັ້ນເອງ ທ່ານກໍເກີດຄວາມຮູ້ສຶກຂຶ້ນມາໃນຂນະຈິດວ່າ ສະຖານທີ່ນີ້ເປັນທີ່ສຳຄັນທີ່ສຸດຂອງຊາວພຸທ ທ່ານຄວນຈະຢູ່ທີ່ນີ້ແລະດູແລສະຖານທີ່ນີ້ດີກວ່າ ເມື່ອເກີດຄວາມຮູ້ສຶກຂຶ້ນເຊັ່ນນັ້ນແລ້ວ ທ່ານຈຶ່ງຊວນພິກຂຸທີ່ມານຳກັນນັ້ນຮູບນຶ່ງ ໃຫ້ຢູ່ທີ່ນີ້ເສັຽເລີຍ ເພື່ອນພິກຂຸກໍຕົກລົງແລະຕັ້ງໃຈກັນໄວ້ວ່າ ຈະຍັງບໍ່ໄປໃສ ຈົນກວ່າຈະໄດ້ມີພິກຂຸໃນພຸທສາສນາອົງຄ໌ໃດອົງຄ໌ນຶ່ງ ຊຶ່ງມີຄວາມຕັ້ງໃຈອັນດຽວກັນນີ້ມາຜັດປ່ຽນກັບທ່ານ.

ເມື່ອທ່ານຕັດສິນໃຈເຊັ່ນນີ້ແລ້ວ ທ່ານຍັງບໍ່ທັນໄດ້ຄຳນຶ່ງ ເຖິງເຣື່ອງທີ່ວ່າໃຜເປັນຜູ້ມີສິທໃນສະຖານທີ່ນີ້ ທ່ານຄິດພຽງແຕ່ວ່າ ຕົ້ນໄມ້ສຳຄັນທີ່ສຸດໃນປະວັດສາດພຸທທະສາສນາ ແລະສຖານທີ່ອັນສັກສິທຂອງເຮົານີ້ ຖືກທອດຖິ້ມເໝືອນຄົນບໍ່ມີຍາດພີ່ນ້ອງເຊັ່ນນີ້ ເປັນໜ້າລະອາຍໃຈເປັນຢ່າງຍິ່ງ ສະນັ້ນໃນຖານະທີ່ທ່ານເປັນຊາວພຸທ ບໍ່ພຽງແຕ່ວ່າຈະມີໜ້າທີ່ພິທັກຮັກສາສະຖານທີ່ນີ້ເທົ່ານັ້ນ ແຕ່ຍັງເປັນສິທໂດຍຊອບທັມຂອງຊາວພຸທ ທີ່ຈະປົກປັກປ້ອງກັນເອົາໄວ້ດ້ວຍ.

ເມື່ອທ່ານຄິດເຊັ່ນນີ້ແລ້ວ ທ່ານຈຶ່ງໄດ້ເຂົ້າໄປພົບກັບເຈົ້າໜ້າທີ່ຂອງຣັຖບານຜູ້ເບິ່ງແຍງສະຖານທີ່ນີ້ເພື່ອຂໍພັກພາອາໄສຢູ່ນະກຸຕິພະມ້າທີ່ພຣະເຈົ້າມິນດົງມິນ ໂປດໃຫ້ສ້າງຂຶ້ນໄວ້ແຕ່ປາງນັ້ນ ເຈົ້າໜ້າທີ່ຂອງຣັຖບານຜູ້ນັ້ນກໍບໍ່ຂັດຂ້ອງແຕ່ປະການໃດ ຈຶ່ງໄດ້ເອົາກຸນແຈກຸຕິຫລັງນັ້ນມອບໃຫ້ແກ່ທ່ານທັມມະປາລະແຕ່ໂດຍດີ ພໍທ່ານໄດ້ເຂົ້າໄປພັກນັກຢູ່ໃນກຸຕິນັ້ນຮຽບຮ້ອຍແລ້ວ ທ່ານບໍ່ໄດ້ປ່ອຍເວລາໃຫ້ລ່ວງໄປໂດຍບໍ່ເປັນປະໂຍຊ ທ່ານເຣີ່ມຂຽນຈົດໝາຍນັບຕັ້ງພັນໆ ສະບັບສົ່ງໄປຍັງບຸກຄົລທີ່ທ່ານເຫັນສົມຄວນ ທັງໃນພະມ້າແລະລັງກາ ຊີ້ແຈງໃຫ້ຊາບເຖິງສະພາບຄວາມເປັນຢູ່ຂອງພຸທທະຄະຍາໃນເວລານັ້ນ ແລະຂໍຮ້ອງໃຫ້ຮ່ວມມືກັນບູຣະນະຟື້ນຟູ ແລະຕັ້ງ

ສຳນັກສົງ ຂຶ້ນນະທີ່ນີ້ເອົາປຶ້ມຢ່າງທີ່ພຣະເຈົ້າອະໂສກໄດ້ທຣົງປະຕິບັດມາໃນກາລະດຶກດຳ ບັນນັ້ນດ້ວຍ ນອກຈາກນັ້ນທ່ານຍັງໄດ້ຂຽນບົທຄວາມໄປລົງໜັງສືພິມອີກຫລາຍສະບັບ ເພື່ອກໍ່ໃຫ້ເກີດມະຕິມະຫາຊົນຂຶ້ນ ແຕ່ຄວາມພະຍາຍາມຂອງທ່ານໃນຂັ້ນຕົ້ນນີ້ ຍັງບໍ່ໄດ້ຜົລແຕ່ປະກາຣໃດເລີຍ ເພາະບໍ່ມີໃຜສົນໃຈເອົາຈິງເອົາຈັງ ບໍ່ມີຜູ້ໃດຕອບຈົດໝາຍຂອງທ່ານເສັຽອີກດ້ວຍ ເງິນທອງກໍຫລ້ອຍຫລໍລົງໄປທຸກທີ ເພາະທ່ານບໍ່ໄດ້ກະກຽມມາເພື່ອຢູ່ທີ່ນີ້ເປັນເວລານານ ແຕ່ທ່ານບໍ່ໄດ້ເກີດຄວາມທໍ້ຖອຍໃຈເລີຍ ກັບຕັດສິນໃຈວ່າທ່ານຍອມຕາຍດີກວ່າຈະລະຖິ້ມພຸທຄະຍາໄປ

ຄືນນຶ່ງໃນເດືອນກຸມພາ ເປັນຄືນເດືອນຫງາຍແຈ່ມໃສດີຍິ່ງ ທ່ານໄດ້ໄປນັ່ງສມາທິທີ່ໃກ້ຕົ້ນໂພ ເວລາປະມານບ່າຍສອງໂມງຂອງຄືນນັ້ນ ໃນຖ້າມກາງຄວາມງຽບສງັດຂອງທັມມະຊາດຮອບພຸທຄະຍານີ້ ທ່ານປະສົບກັບຄວາມສງົບສັນຕິສຸກ ຢ່າງບໍ່ເຄີຍໄດ້ຮູ້ສຶກມາແຕ່ເກົ່າກ່ອນ ທ່ານເກີດຄວາມປີຕິໃນອະຣິຍະສັຈສີ່ແລະມັຄແປດ ວ່າເປັນທາງແຫ່ງຄວາມສຸຂອັນແທ້ຈິງຂອງມະນຸສເຮົາທຳໃຫ້ເກີດກຳລັງໃຈທີ່ຈະຕໍ່ສູ້ເພື່ອໃຫ້ສຳເຣັດຕາມຄວາມປະສົງຂອງທ່ານ ໃນໂອກາສນັ້ນກໍພໍດີເປັນໂອກາສທີ່ທ່ານໄດ້ຮັບຈົດໝາຍຕອບຈາກພຸທສາສະນິກະບາງທ່ານ ແລະໄດ້ເງິນມາຊ່ວຍເຫລືອໃນການຈັບຈ່າຍໃຊ້ສອຍແດ່ເລັກນ້ອຍ ຄວາມຫວັງຊຶ່ງຫລີບລີ້ລົງເປັນຢ່າງມາກແລ້ວນັ້ນ ຈຶ່ງກັບລຸກແຈ້ງຂຶ້ນອີກ ທ່ານຮູ້ສຶກວ່າທ່ານຍັງບໍ່ທັນຖືກທອດຖິ້ມໃຫ້ຢູ່ອີກໂລກນຶ່ງແຕ່ຜູ້ດຽວຢ່າງແຕ່ກ່ອນແລ້ວ ເວລານັ້ນທ່ານເຂົ້າໃຈວ່າ ພຸທຄະຍາເປັນສົມບັດຂອງຣັຖບານອັງກິສ ທ່ານຈຶ່ງໄປພົບກັບເຊີຣ໌ ເຄລັງສັນ ເຈົ້າເມືອງຄະຍາສະແດງຄວາມປະສົງ ຂໍຮັບເອົາສຖານທີ່ນີ້ມາດູແລເສັຽເອງ ເຊີຣ໌ ເຄລັງສັນ ຈຶ່ງໄດ້ຊີ້ແຈງໃຫ້ຊາບວ່າ ບໍ່ແມ່ນຣັຖບານເປັນເຈົ້າຂອງມີກັມສິທໃນພຸທຄະຍານີ້ແຕ່ປະກາຣໃດ ແມ່ນພວກມະຫັນພຸ້ນຕ່າງຫາກ ບັນດາພາສີອາກອນທີ່ເກັບໄດ້ໃນບໍຣິເວນນີ້ ກໍຕົກເປັນຂອງມະຫັນທັງນັ້ນ ຣັຖບານເປັນແຕ່ຜູ້ດູແລຊ່ວຍເຫລືອ ໃນການຮັກສາສະຖານທີ່ນີ້ເທົ່ານັ້ນ ສະນັ້ນຣັຖບານຈຶ່ງບໍ່ອາດສາມາດຍົກສຖານທີ່ນີ້ໃຫ້ເປັນສົມບັດຂອງຊາວພຸທໄດ້ແກ່ທ່ານ ເຄລັງສັນ ແນະນຳວ່າ ຖ້າຫາກຊາວພຸທປະສົງຈະເຂົ້າຄອບຄອງສຖານທີ່ນີ້ແທ້ໆແລ້ວ ກໍຈະຕ້ອງຊື້ຈາກມະຫັນ ຣັຖບານຈະຊ່ວຍເຫລືອຕິດຕໍ່ກັບມະຫັນ ໃຫ້ທ່ານທັມມະປາລະໄດ້ມາຄິດພິຈາຣະນາຢູ່ເປັນເວລາ ໓ ອາທິດ ເລີຍຕັດສິນໃຈເດີນທາງໄປເມືອງກັລກັດຕາ (Calcutta) ເພື່ອຈະຫາວິທີເລັ່ຽລາຍເງິນຈາກປະເທສພະມ້າ ມາຊື້ເອົາພຸທຄະຍາຄືນຈາກມະຫັນ ເພາະເຫັນວ່າປະເທສພະມ້າ ຍັງມີສັທທາໃນພຸທສາສນາຢ່າງແຮງກ້າ ເຖິງກັບມີການທຳວິປັສສະນາກັມ

ນັ້ວຖານກັນຢູ່ທົ່ວໄປ ເມື່ອໄປເຖິງກັລລະກະຕາ ທ່ານໄດ້ໄປພັກຢູ່ເຮືອນຂອງ ບາບູນິລໂກມັລ ມຸກເກີຈີ ຜູ້ເປັນນັກເທວະວິທຍາຊາວເບງກອລ ນາຍມຸກເກີຈີ ເຫັນຊອບນຳຄວາມຄິດຂອງທ່ານທັມມະປາລະແລະໄດ້ສນັບສນຸນງານຂອງທ່ານຈົນຕລອດຊີວິດ ທ່ານທັມມະປາລະກັບນາຍມຸກເກີຈີ ໄດ້ໄປຕິດຕໍ່ຕາມສຖານທີ່ສຳຄັນຫລາຍແຫ່ງໃນກັລລະກະຕາ ໂຮມທັງຫໍສມຸດແລະຣາຊສມາຄົມ ເອເຊັຍຕິກແຫ່ງເບງກອລ ໄປທຳໃຫ້ໄດ້ເພື່ອນມາຮ່ວມງານອີກຫລາຍຄົນຂຶ້ນ ເຊັ່ນນາຍຈັນທຣທາສ ແລະນາຍນາເຣນທຣນາຖເສນເປັນຕົ້ນ ຫລັງຈາກນັ້ນທ່ານທັມມະປາລະ ໄດ້ລົງເຮືອໄປເມືອງຢ້າງກຸ້ງພັກຢູ່ກັບໝ່ອງໂປມຍິນ ນັກເທວະວິທຍາ ຊຶ່ງເປັນພຸທສາສນິກະດ້ວຍ ໝ່ອງໂປມຍິງ ໄດ້ໃຫ້ຄວາມຊ່ວຍເຫລືອແກ່ທ່ານທັມມະປາລະ ເປັນອັນດີຕລອດທັງເຈີນຊາວພະມ້າອື່ນກໍສົນໃຈໃນກໍຣະນີທີ່ຈະເອົາພຸທຄະຍາຄືນມາເປັນຂອງຊາວພຸທນີ້ເໝືອນກັນ ຍັງແຕ່ບໍ່ມີສັທທາເຖິງກັບສລະເງິນຈຳນວນມາກເພື່ອດຳເນີນງານນີ້ ທ່ານທັມມະປາລະຈຶ່ງປະສົບຄວາມຫລົ້ມແຫລວໃນການໄປພະມ້າຄັ້ງນັ້ນ ຕ້ອງເດີນທາງໄປຍັງ ໂກລົມໂບ ປະເທສລັງກາອັນເປັນບ້ານເກີດເມືອງນອນຂອງທ່ານ ເມື່ອພິຈາຣະນາເຫັນວ່າຖ້າຫາກດຳເນີນງານໂດຍຕົວຄົນດຽວ ຫລືບຸຄຄົລຈຳນວນນ້ອຍຄົງຈະສຳເຣັດໄດ້ຍາກ ຄວນຈະຕັ້ງເປັນສມາຄົມຂຶ້ນດຳເນີນການໃຫ້ເປັນຫລັກຖານດີກວ່າ ທ່ານທັມມະປາລຈຶ່ງໄດ້ຣິເຣີ່ມຈັດຕັ້ງສມາຄົມຕໍ່ໄປ ຈົນກະທັ່ງໃນເດືອນພຶສພາ ຄ. ສ. ໑໘໙໑ (ພ.ສ. ໒໔໓໔) ຈຶ່ງສາມາຖເປີດສມາຄົມຂຶ້ນໄດ້ ສມາຄົມນັ້ນທ່ານໃຫ້ຊື່ວ່າ "ພຸທທະຄະຍາມຫາໂພທິສມາຄົມ" ເປັນການສແດງເຈຕນາຢ່າງຊັດເຈນ ທີ່ຈະໃຫ້ໄດ້ພຸທທະຄະຍາຄືນມາເປັນຂອງຊາວພຸທດັ່ງເດີມ ວັດຖຸປະສົງຂອງສມາຄົມນີ້ໄດ້ບົ່ງໄວ້ວ່າ ສມາຄົມນີ້

– ຈະຈັດຕັ້ງວັດແລະວິທຍາໄລພຸທທະສາສນາຈັດໃຫ້ມີພຣະສົງຄ໌ໄປຢູ່ພຸທທະຄະຍາ ເພື່ອເປັນຕົວແທນຂອງພຸທະສາສະນິກະ ໃນປະເທສຈີນ – ຍີ່ປຸ່ນ – ໄທຍ໌–ກັມພູຊາ – ພະມ້າລັງກາ ຈິດຕະກອງ–ເນປາລ–ທິເບດ ແລະອາຣະການເປັນຕົ້ນ.

– ຈະໄດ້ພິມໜັງສືພຸທສາສນາເປັນພາສາອັງກິສ ແລະເປັນພາສາອິນເດັຽດ້ວຍ.

ໃນການນີ້ຈະໄດ້ຈັດໃຫ້ມີການ ແຜ່ເງິນຈຳນວນໜຶ່ງແສນຣູປີ ເພື່ອດຳເນີນງານໃຫ້ບັນລຸຜົລສົມປະສົງຄ໌. ທ່ານສຸມັງຄະລະນາຍກມຫາເຖຣະ ແຫ່ງລັງກາ ເປັນຜູ້ທຳພິທີເປີດສມາຄົມນີ້ ແລ້ວໄດ້ມີການທຳພິທີເລືອກຕັ້ງກັມມະການທ່ານສຸມັງຄະລະນາຍົກມຫາເຖຣະ ໄດ້ຮັບເລືອກເປັນປະທານ ທ່ານທັມມະປາລະ ໄດ້ຮັບເລືອກເປັນເລຂານຸການ ພັນເອກໂອລຄອດ

ເປັນຜູ້ອຳນວຍການ ທ່ານຜູ້ນີ້ເປັນຊາວອັງກິສ ຜູ້ເຫລື້ອມໃສໃນພຸທະສາສນາ ເຄີຍໄປຍີ່ປຸ່ນກັບ ທ່ານທັມມະປາລະ ແລະໄດ້ສແດງປາຖະກະຖາທ່ານ ໃນທີ່ຫລາຍແຫ່ງ ເປັນຜົລໃຫ້ສາມາດຍັບຍັ້ງ ການລຸກລາມຂອງສາສນາອື່ນໄດ້ເປັນຢ່າງມາກ ໂອລຄອດ ໄດ້ຮັບໃຊ້ກິຈການຂອງມຫາໂພທິສະ ມາຄົມຢູ່ເປັນເວລາ ໕ ປີ, ການເປີດມຫາໂພທິສມາຄົມ ໃນລັງກາຄັ້ງນັ້ນຍັງບໍ່ທັນເປັນທີ່ສົນໃຈ ຂອງປະຊາຊົນໃຫ້ທົ່ວເຖິງ ພັນເອກ ໂອລຄອດ ແລະທ່ານທັມະປາລະ ໄດ້ມີຫນັງສືວິງວອນໄປ ໄປຍັງຄນະສົງ ໃນປະເທສໄທຍ໌ ຍີ່ປຸ່ນ ອັກບັບ ແລະພະມ້າ ກ່ອນອື່ນແກ່ປະເທສຕ່າງໆເລົ່ານັ້ນ ກໍຍັງບໍ່ມີຄວາມສົນໃຈໃຫ້ພຽງພໍໃນວາຣະເຣີ່ມຕົ້ນຂອງງານນີ້ ຈະເພາະເຫດບາງປະການຢ່າງໃດ ກໍເປັນໄດ້ຄວາມຍາກລຳບາກຂອງການດຳເນີນງານນີ້ຢູ່ມາກ ແຕ່ດ້ວຍຄວາມຕັ້ງໃຈຂອງບຸຄຄົລ ພຽງ ໑–໒ ຄົນ ເທົ່ານັ້ນຈຶ່ງສາມາດຟັນຝ່າອຸປະສັກໄປໄດ້ເປັນລຳດັບ ໃນເດືອນກໍຣະກະດານັ້ນ ເອງ ຫລັງຈາກເປີດສມາຄົມໄດ້ພຽງເດືອນກວ່າໆ ທ່ານທັມະປາລະຫາພັກຂຸຣ່ວມໃຈໄດ້ ໔ ອົງ ທີ່ຈະໄປພຳນັກຢູ່ທີ່ພຸທຄະຍາຈຶ່ງພາກັນເດີນທາງມານະທີ່ນັ້ນ ແລ້ວເຂົ້າພັກອາໃສຢູ່ທີ່ກຸຕິພະ ມ້າດາມເດີມ ທ່ານທັມມະປາລຮູ້ສຶກດີໃຈມາກ ທີ່ໄດ້ເຫັນຜົລງານຂອງທ່ານພາຍ ໆ ເດືອນນີ້ໄດ້ ບັນລຸຂຶ້ນມາໃຫ້ເປັນປະຈັກໂດຍມີພຣະເຖິງ ໔ ຮູບມາຢູ່ເຝົ້າໂພພຸທທະຄະຍາ. ຕໍ່ຈາກນັ້ນທ່ານ ກໍເຣີ່ມເປີດການເຈຣະຈາກັບມະຫັນເປັນທາງການ ເພື່ອຂໍຊື້ທີ່ດິນພຸທທະຄະຍາ ຈັກສ່ວນຫນຶ່ງ ເພື່ອໃຊ້ໃນການພົ່ງເພັງສາສນະກິຈເປັນສ່ວນຂອງຊາວພຸທເທົ່ງ. ຕອນຕົ້ນມະຫັນຕ໌ຍອມຂາຍທີ່ ດິນໃຫ້ທ່ານທັມມະປາລະຕາມຄວາມຕ້ອງການ ພໍຈະເອົາຈິງເອົາຈັງເຂົ້າ ກັບວ່າບໍ່ຂາຍເພາະເກງ ຜົລປະໂຍດລາຍໄດ້ຂອງຕົນຈາກວິຫານພຸທທະຄະຍາ ຈະລົດນ້ອຍລົງໄປ. ແຕ່ໃນຕອນ ຫລັງຕົກລົງຂາຍໃຫ້ນິດຫນ່ອຍພໍເປັນພິທີ ຍັງບໍ່ທັນໄດ້ວາງເງີນແລະທຳການແບ່ງສໂນດທີ່ ດິນທາງຣາຊການອັງກິສ ຊຶ່ງຈະຕ້ອງການເອົາອົກເອົາໃຈມະຫັນຕ໌ ກໍບັງມີເຂົ້າແຊກແຊງ ທ່ານເຄຣັງສັນໄດ້ສັ່ງໃຫ້ເລື່ອນເວລາ ການແບ່ງສໂນດທີ່ດິນອອກໄປອີກ ແລະແນະນຳໃຫ້ທ່ານ ທັມມະປາລະໄປຫາຊື້ທີ່ດິນແຫ່ງອື່ນທີ່ຢູ່ຫ່າງອອກໄປ ອ້າງວ່າເພື່ອບໍ່ໃຫ້ເກີດເຣື່ອງຫຍຸ້ງຍາກ ໃນພາຍຂ້າງຫນ້າ. ເມື່ອເປັນເຊັ່ນນັ້ນລະມະຫັນຕ໌ກໍເລີຍພັກເຣື່ອງເອົາໄວ້ພິຈາຣະນາກັນໃນ ພາຍຫລັງອີກໃຫມ່ ທ່ານທັມມະປາລະໄດ້ມາຄົ້ນຄິດຢູ່ອີກວ່າງນຶ່ງເມື່ອບໍ່ມີທາງໃດອີກແລ້ວກໍເລີຍ ຕົກລົງໃຈຫາຊື້ດິນບ່ອນໃດບ່ອນນຶ່ງຕາມຄຳແນະນຳຂອງທ່ານເຄຣັງສັນ ແຕ່ພໍເອົາຈິງເອົາຈັງເຂົ້າ ມີສເຕີເຄຣັງສັນ ກັບຫລຸດຂນາດທີ່ດິນທີ່ຈະຂາຍນັ້ນລົງເຄິ່ງນຶ່ງ ທ່ານທັມະປາລະຕ້ອງແລ່ນຕິດຕໍ່

ກັບຜູ້ມີສັທທາທີ່ຈະອອກເງິນຊື້ທີ່ດິນບໍ່ອຸ້ນວາຍໄປຫມົດ ພໍດີໃນວາຣະນັ້ນໄດ້ກ່າວວ່າ ຜູ້ວ່າຣາຊການ ແຄວ້ນເບງກອລ ຈະເດີນທາງມາຢ້ຽມພຸທທະຄະຍາ ໃນຕົ້ນເດືອນພຶສຈິກາ ທ່ານທັມມະປາລະ ໄດ້ຄວາມຄິດຂຶ້ນມາວ່າ ຈະຕ້ອງທຳການຢ່າງໃດຢ່າງນຶ່ງຂຶ້ນໃນໂອກາສນັ້ນ ເພື່ອຮຽກຮ້ອງຂໍຄວາມ ເຫັນໃຈຈາກຣັຖບາລອັງກິສ ທ່ານຈຶ່ງຕົກລົງເປີດປະຊຸມ ພຸທສາສນິກະສາກົລ ນະພຸທທະຄະ ຍາ ໃນວັນທີ ໓໑ ຕຸລາຄົມ ຄ.ສ. ໑໘໙໑ ມີຜູ້ແທນຈາກລັງກາ ຈີນ ຍີ່ປຸ່ນ ແລະຈິຕະກອງ ມາ ຮ່ວມປະຊຸມນຳຜູ້ແທນຍີ່ປຸ່ນ ໄດ້ເຫັນສພາບຂອງພຸທທະຄະຍາແລ້ວ ໄດ້ປະກາສໃນທີ່ປະຊຸມວ່າ ຍີ່ປຸ່ນ ຈະພຍາຍາມຫາເງິນຈັດຊື້ວິຫານມຫາໂພຈາກມະຫັນຕ໌ໃຫ້ຈົນໄດ້ ຄຳປະກາສຂອງຜູ້ ແທນຍີ່ປຸ່ນທຳໃຫ້ທ່ານທັມມະປາລະດີໃຈຂຶ້ນມາເປັນອັນມາກ ເຖິງກັບຍົກທຸງຊາຕຍີ່ປຸ່ນ ຂຶ້ນຄູ່ກັບ ທຸງພຸທສາສນາທີ່ໃຕ້ຕົ້ນໂພຕຣັສຮູ້ ຄນະຜູ້ແທນ ພຸທສາສນາປະເທສຕ່າງໆທີ່ມາປະຊຸມທີ່ພຸທ ທະຄະຍາໃນຄັ້ງນັ້ນ ຕັ້ງໃຈວ່າຈະໄດ້ພົບກັບຮອງຜູ້ວ່າຣາຊການແຄວ້ນເບງກອລ ແຕ່ປາກົດວ່າ ຜິດຫວັງ ຮອງຜູ້ວ່າຣາຊການແຄວ້ນເບງກອລ ບໍ່ຍອມໃຫ້ຜູ້ແທນເຫລົ່ານັ້ນໄດ້ເຂົ້າພົບເລີຍ ສັນນິດ ຖານວ່າເວລານັ້ນ ອັງກິສອາຈະຣະແວງຍີ່ປຸ່ນຢູ່ວ່າຈະແຜ່ອຳນາຈເຂົ້າມາໃນອິນເດັຽ ແລະທົ່ວ ທັງເອເຊັຽດ້ວຍ ຄຳປະກາສຂອງຜູ້ແທນຍີ່ປຸ່ນ ແທນທີ່ຈະເປັນຜົລດີກັບກາຍເປັນຜົລຮ້າຍແກ່ ທ່ານທັມມະປາລະເປັນຢ່າງມາກ ເພາະຮອງຜູ້ວ່າຣາຊການແຄວ້ນເບງກອນ ໄດ້ມີໜັງສືເຖິງທ່ານ ທັມມະປາລະ ໂດຍຜ່ານມາທາງມິສເຕີ້ຣ໌ ເຄລັ່ຽສັນວ່າ ວິຫານມຫາໂພທີ່ເປັນສົມບັດຂອງມະຫັນ ຣັຖບາລອິນເດັຽຂອງອັງກິສບໍ່ອາຈທີ່ຈະຍອມໃຫ້ຊາວພຸທຊື້ໄປໄດ້ ແລະການທີ່ຊາວພຸທຈະເຂົ້າ ຄວບຄຸມພຸທທະຄະຍານັ້ນ ຣັຖບາລກໍ່ຈຳເປັນຕ້ອງເຂົ້າແຊກແຊງ.

ເຖິງຢ່າງໃດກໍດີ ທ່ານທັມມະປາລກໍຍັງຍືນຍັດຢູ່ໃນຄວາມຕັ້ງໃຈທີ່ຈະຕໍ່ສູ້ກູ້ເອົາພຸທທະຄະ ຍາຄືນມາເປັນຂອງຊາວພຸທໃຫ້ໄດ້ ໃນຕົ້ນປີ ໑໘໙໒ ທ່ານໄດ້ຍ້າຍທີ່ທຳການຂອງມຫາໂພທິ ສມາຄົມຈາກລັງກາມາຍັງ ກັລກັດຕາ ເພື່ອການຕໍ່ສູ້ຈະໄດ້ຮັບຄວາມສະດວກຍິ່ງຂຶ້ນ ໃນເດືອນ ພຶສພາ ປີນັ້ນເອງ ທ່ານໄດ້ອອກໜັງສືພິມ ນິຕຍະສານ "ມຫາໂພທິ" ຂຶ້ນເປັນສື່ສັມພັນ ຣະຫວ່າງຊາວພຸທໃນປະເທສຕ່າງໆ ເຣີ່ມແຣກໄດ້ພິມ ພຸທທະວາຈາ ທີ່ດຳຣັສນະສາຣະນາດ ຕອນທີ່ສົ່ງສາວົກ ໖໐ ຮູບ ອອກປະກາສສັຈຈະທັມວ່າ "ພິກສຸທັງຫລາຍ ພວກທ່ານຈົ່ງ ທ່ຽວຈາຣິກໄປເພື່ອປະໂຍຊສຸກແກ່ມະຫາຊົນ ເພື່ອຄວາມເອັນດູແກ່ໂລກ ເພື່ອປະໂຍຊເພື່ອ

ຄວາມເກື້ອກູນເພື່ອຄວາມສຸກແກ່ເທວະດາແລະມະນຸສທັງຫລາຍ ແລ້ວທ່ານທັມມະປາລະກໍໄດ້ຂຽນບົດຄວາມຕ່າງໆ ລົງໃນໜັງສືພິມ ນິດຍະສາຣ ສະບັບນີ້ມາກທີ່ສຸດ ບົທຄວາມເຫລົ່ານັ້ນຊ່ວຍໃຫ້ປະຊາຊົນເກີດຄວາມສົນໃຈກັບສາສນາພຸທມາກຂຶ້ນເປັນລຳດັບ ແຜ່ຫລາຍໄປຈົນເຖິງຢຸໂຣປແລະອະເມຣິກາ ແຕ່ຄ່າໃຊ້ຈ່າຍໃນການສົ່ງໜັງສືກໍເພີ່ມຂຶ້ນມາກດັ່ງເງົາທຽມຕົວ ຈົນບາງຄັ້ງຕ້ອງນອນອົດມື້ກິນມື້ ເພື່ອປະຢັດເງິນໄວ້ເປັນຄ່າສົ່ງໜັງສືໄປເຜີຍແຜ່.

ໃນການຈັດທຳໜັງສືມຫາໂພທິ ທີ່ກັລກັດຕານັ້ນ ເວລາກາງຄືນທ່ານມັກໄປສົນທະນາກັບນາຍມຸກເກີຣ໌ຈີ ທີ່ບ້ານສເມີ ແລ້ວຕື່ນນອນແຕ່ ໒ ໂມງ ຫລື ໓ ໂມງເຊົ້າທຸກຄືນ ແລ້ວເຂົ້າສະມາທິຫລັງຈາກເຂົ້າສະມາທິຈຶ່ງອ່ານຄັມພີພຸທສາສນາກັບສຶກສາເອກສາຣຂອງນັກປາຊທາງພຸທສາສນາອີກ ເວລາກາງວັນທ່ານກໍທຳງານເປັນປະຈຳຢູ່ທີ່ສມາຄົມມຫາໂພທິ ນັ້ນຕລອດວັນທຳການໂຕ້ຕອບຈົດໝາຍກັບຜູ້ທີ່ສົນໃຈໃນງານຂອງທ່ານ ແລະຈັດໃຫ້ມີການປະຊຸມທຸກສັປດາ ນອກຈາກນັ້ນຍັງຫາໂອກາສເດີນທາງໄປປາຖະກະຖາຊັກຊວນປະຊາຊົນໃນທີ່ຕ່າງ ໆ ໃຫ້ສົນໃຈຕໍ່ການສຖາປະນາພຸທທະຄະຍາ ໃຫ້ເປັນສົມບັດຂອງພຸທທະສາສນິກະຊົນທົ່ວໂລກ ທ່ານໄດ້ເດີນທາງໄປ "ອັກຍັບ" ກັບພັນເອກ ໂອລຄອດຕ໌ ແລະໄດ້ຊີ້ແຈງໃຫ້ຊາວພຸທ ອັກຍັບ ຊາບເຖິງເຈຕະນາໃນການຕັ້ງມຫາໂພທິສມາຄົມ ແລະຂໍໃຫ້ພີ່ນ້ອງຊາວພຸທໄດ້ຮ່ວມມືກັບກັບທ່ານໃນການດຳເນີນງານສຳຄັນນີ້ ຊາວພຸທໃນ ອັກຍັບ ພໍໃຈໃນເຈຕະນາຣົມຂອງທ່ານ ຈຶ່ງເຣ່ຍຣາຍເງິນກັນໄດ້ ໔.໐໐໐ ຣູປີ ມອບໃຫ້ທ່ານໄວ້ໃຊ້ຈ່າຍ ແລະໄດ້ຈັດຕັ້ງສາຂາມຫາໂພທິສມາຄົມຂຶ້ນທີ່ອັກຍັບ ກ່ອນເປັນສາຂາແຣກ ໂດຍມີ ໜ່ອງຫລາປຸ ເປັນເລຂາທິການ ຫລັງຈາກນັ້ນທ່ານທັມມະປາລະກັບພັນເອກ ໂອລຄອດຕ໌ ກໍເດີນທາງໄປຢ່າງກຸ້ງ ເພື່ອຄວາມມຸ່ງໝາຍອັນດຽວກັນສາຂາມຫາໂພທິສມາຄົມແຫ່ງທີ່ສອງ ກໍອຸບັດຂຶ້ນອີກ ໂດຍມີ "ໜ່ອງໂປມບິ່ນ" ສຫາຍເກົ່າຂອງທ່ານທັມມະປາລະເປັນເລຂາທິການໃນປາຖະກະຖາຂອງທ່ານທັມມະປາລະກ່າວທີ່ພຣະເຈດີສຸເລ ກາງເມືອງຢ່າງກຸ້ງນັ້ນ ທ່ານໄດ້ຊີ້ໃຫ້ເຫັນວ່າ ມະຫັນ ບໍ່ໄດ້ດູແລເອົາໃຈໃສ່ຕໍ່ສຖານທີ່ສັກສິທຂອງພຸທທະສາສນາແຕ່ຢ່າງໃດ ບໍ່ໜຳຊ້ຳຍັງເອົາຮົ້ວຫີນສລັກລວດລາຍຢ່າງງົດງາມໄປທຳເຕົາຫຸງເຂົ້າອີກດ້ວຍ ທ່ານໄດ້ສແດງຄວາມມຸ່ງໝາຍຂອງທ່ານວ່າປາກຈະຕັ້ງມຫາວິທຍາໄລ ພຸທທະສາສນາຂຶ້ນທີ່ນັ້ນ ໃຫ້ເປັນສູນກາງການສຶກສາພຸທທະສາສນາທີ່ຈະຊ່ວຍໃຫ້ນັກສຶກສາ ໃນຈີນພະມ້າ ກັມພູຊາ ລັງກາ ໄທຍ໌ ແລະທິເບດ ໄດ້ມາສຶກສາເຫລົ່າຮຽນ ແລະໃຫ້ມີການສອນພາ

ສາຂອງຊາວຕ່າງ ໆ ທີ່ນັບຖືພຸທພຸທທະສາສນາ ໃນມຫາວິທຍາໄລນີ້ດ້ວຍຄຸດຈາກຢ່າງກຸ້ງທ່ານທັມມະປາລະໄດ້ເດີນທາງໄປ ດາຣ໌ຈີລິງ ໃນເຂດຊຶ່ງພຸທທະສາສນາຝ່າຍມະຫາຍານຮຸ່ງເຮືອງຢູ່ ໄດ້ພົບກັບທ່ານ ເຊດ້າ ເອກອັຄຣາຊທູດທິເບດປະຈຳອິນເດັຽນະທີ່ນັ້ນ ທ່ານທັມມະປາລະໄດ້ຊີ້ແຈງຈຸດມຸ່ງໝາຍຂອງມຫາໂພທິສມາຄົມ ໃຫ້ທ່ານ ເຊດ້າ ຊາບແລ້ວກໍເປັນທີ່ປິຕິຍິນດີມາກ ທ່ານເຊດ້າ ໄດ້ກ່າວແກ່ທ່ານທັມມະປາລະວ່າ "ແມ່ນ້ຳທັງຫລາຍໃນອິນເດັຽ ເກີດຈາກທິວເຂົາຫິມາໄລສັນໃດ ພຸທທະສາສນາກໍໄດ້ໄຫລໄປທົ່ວໂລກ ຈາກພຸທທະຄະຍາສັນນັ້ນ " ຕົວທ່ານທູດແລະຄນະສົງຄ໌ລາມະໄດ້ພິຈາຣະນາກັນເຖິງເຣື່ອງນີ້ມາກ່ອນແລ້ວເໝືອນກັນ ເພາະປາກຈະໃຫ້ເຫັນພຸທທະຄະຍາຕົກຢູ່ໃນມືຂອງຊາວພຸທ ຄວາມສຳເຣັຈທີ່ທ່ານທັມມະປາລະໄດ້ປະສົບທີ່ເມືອງ ດາຣ໌ຈີລິງກໍຄື ໄດ້ມີການເປີດສາຂາມຫາໂພທິສມາຄົມຂຶ້ນເປັນສາຂາທີ່ສາມ ເມື່ອຕົ້ນປີ ຄ.ສ. ໑໘໙໓ (ພ.ສ. ໒໔໓໖) ທ່ານທັມມະປາລະໄດ້ກັບມາຢ່ຽມພຸທທະຄາຍາອີກຄັ້ງນຶ່ງພ້ອມກັບພັນເອກ ໂອລຄອຕຕ໌ ແລະນາງ ເອດຊ໌ ນັກເທວະວິທະຍາຝຣັ່ງ ຈາກດາຣ໌ຈີລິງ ພໍມາເຖິງພຸທທະຄະຍາກໍປະສົບກັບເຫດການອັນຮ້າຍແຮງທີ່ບໍ່ໄດ້ຄາດຝັນມາກ່ອນ ນັ້ນຄືພິກສຸ ໔ ອົງຄ໌ ທີ່ເຝົ້າຢູ່ນະກຸຕິພະມ້າ ໄດ້ຖືກລູກສິດຂອງມະຫັນທຸບຕີເກືອບຕາຍເຫດການໄດ້ເກີດກ່ອນໜ້າທີ່ທ່ານທັມມະປາລະມາເຖິງພຽງເລັກນ້ອຍ ພິກສຸ ຈັນທອະໂຊຕິ ທີ່ຢູ່ນະທີ່ນັ້ນເລົ່າວ່າ ຄ່ຳວັນນັ້ນຂນະທີ່ນັ່ງດາພຣະສົງຄ໌ກຳລັງອ່ານພຣະວິໃນ ແລະວິສັຊນາທັມກັນຢູ່ນັ້ນ ລູກສິສຂອງມະຫັນທ໌ ໄດ້ບຸກຣຸກເຂົ້າມາໃນກຸຕິ ແລະໃຊ້ໄມ້ຄ້ອນຕີພິກສຸສອງອົງຄ໌ ໂດຍບໍ່ມີສາຍເຫດອັນໃດເລີຍພິກສຸທີ່ຖືກຕີໄດ້ຮັບຄວາມບອບຊ້ຳມາກ ພິກສຸ ສຸມັງຄົລ ຊຶ່ງຖືກຕີຫົວແຕກໄດ້ສົ່ງຕົວໄປໄວ້ໂຮງພະຍາບານ ທ່ານທັມມະປາລະກັບຄນະໄດ້ເຂົ້າໄປໃນກຸຕິພະມ້າ ແລະເຫັນເລືອດໂປດຕິດຢູ່ກັບພື້ນທຸກຄົນພາກັນເສົ້າສລົດໃນເຫດການຮ້າຍທີ່ເກີດຂຶ້ນນີ້ເປັນອັນມາກ ພັນເອກ ໂອລຄອດ໌ ໄດ້ຮີບໄປຫາມະຫັນຕ໌ ເພື່ອສອບສວນເຣື່ອງຣາວ ທ່ານທັມມະປາລະກໍຮຽກຮ້ອງໃຫ້ເອົາຕົວຜູ້ຮ້າຍມາລົງໂທສຕາມກົດໝາຍ ແຕ່ມະຫັນກໍປະຕິເສດບໍ່ຮັບຮູ້ແຕ່ຢ່າງໃດເລີຍ ຍັງປະຕິເສທບໍ່ຍອມຂາຍຫລືໃຫ້ເຊົ່າທີ່ດິນໃດໆ ໃນເຂດພຸທທະຄະຍາທັງສິ້ນ ແມ່ນແຕ່ຈະຂໍພຽງແຕ່ສ້າງທີ່ພັກສຳຣັບພວກທັມມະຍາດາ ມະຫັນກໍບໍ່ອະນຸຍາດທັງນັ້ນ ເຫດການພັນແປໄປໃນທາງຮ້າຍແຮງຍິ່ງຂຶ້ນເປັນອັນມາກ ທ່ານທັມມະປາລະໄດ້ສົ່ງຂ່າວນີ້ໄປທົ່ວໂລກ ໜັງສືພິມໃນແຄວ້ນພິຫາຣແລະເບງກອນໄດ້ລົງຂ່າວກັນອຶກກະທຶກ ແລະປະນາມການລອບທຳຮ້າຍນີ້ຮຸນແຮງ ແຕ່ສຽງເຫລົ່ານັ້ນກໍບໍ່ບັງເກີດຢ່າງໃດຂຶ້ນ ທາງຣາຊການອັງ

ກິສຕ້ອງກາຣເອົາອົກເອົາໃຈມະຫັນມາກກວ່າກຸ່ມພຸທທະສາສນິກະຊົນ ດັ່ງນັ້ນຜູ້ຮ້າຍກໍຈັບບໍ່ໄດ້ ແລະພຣະພິກສຸເລົ່ານັ້ນກໍເຈັບໄປລ້າ ໆ.

ເຖິງປານນັ້ນ ຄນະມຫາໂພທິ ກໍບໍ່ໄດ້ຍໍ້ທໍ້ຕໍ່ອຳນາຈຂອງມະຫັນເລີຍ ແລະບໍ່ຫວາດຫວັ່ນຕໍ່ກາຣວາງເສີຍຂອງຣັຖບາລແຕ່ຢ່າງໃດ ທຸກຄົນກັບເກີດກຳລັງໃຈໃນກາຣຕໍ່ສູ້ໃຫ້ພຸທທະຄະຍາກັບຄືນມາເປັນຂອງຊາວພຸທດັ່ງເດີມ ສະນັ້ນກາຣດຳເນີນງານໃນຂັ້ນຕໍ່ໄປ ຈຶ່ງຢູ່ທີ່ຕ້ອງຫາເງິນມາໃຊ້ຈ່າຍໃຫ້ພຽງພໍໃຫ້ຈົນໄດ້ ພິກສຸ ຈັນຣ໌ໂຊຕິ ຖືກສົ່ງໄປ ອັກບັບ ພັນເອກ ໂອລຄອຕຕ໌ ໄປຢ່າງກຸ້ງ ເພື່ອຊີ້ແຈງເຣື່ອງຣາວຕ່າງ ໆ ໃຫ້ຊາວພຸທຊາບ ແຕ່ເປັນເວລາທີ່ສະຖານະກາຣ ກາຣເງິນຂອງພະມ້າຕ່ຳ ພັນເອກ ໂອລຄອຕຕ໌ຈຶ່ງຄວ້ານ້ຳເຫລວຄືນມາອີກ ທ່ານທັມະປາລອອກເດີນທາງໄປພະມ້າເອງ ກໍຄວ້ານ້ຳເຫລວມາເໝືອນກັນອີກຢ່າງໃດກໍຕາມໃນປີນັ້ນເອງ ມຫາໂພທິສມາຄົມສາມາດນຳຊາວພຸທຜູ້ມັ່ງມີຈາກຢ່າງກຸ້ງ ມັນທະເລ ແລະມະລະແມ່ງ ມາໄຫວ້ພຣະໃນອິນເດັຽເຖິງພຸທທະຄະຍາ ທຳໃຫ້ສຽງເລົ່າລືເຖິງພຸທທະຄະຍາ ໂດ່ງດັງໃນພະມ້າມາກຂຶ້ນເປັນລຳດັບ ຣະຫວ່າງນັ້ນມີຊາວອິນເດັຽຜູ້ເຫລື້ອມໃສໃນງານຂອງທ່ານທັມມະປາລະຄົນນຶ່ງ ຊື່ "ນັນທະກິໂສຣ໌" ຄົ້ນຄວ້າຫາຫລັກຖານວ່າວິຫາຣມຫາໂພທິຢູ່ໃນເຂດໝູ່ບ້ານ "ມຫາໂພທິ" ບໍ່ແມ່ນຢູ່ໃນເຂດໝູ່ບ້ານ "ດາຣາທີທ໌" ອັນເປັນສິທຂອງມະຫັນ ຫລັກຖານນີ້ທຳໃຫ້ທ່ານທັມມະປາລະເກີດກຳລັງໃຈຂຶ້ນເປັນອັນມາກ ຄນະມຫາໂພທິຈຶ່ງນຳຫລັກຖານນັ້ນຂຶ້ນໄປສແດງຕໍ່ທ່ານ ແມກເຟີຣ໌ສັນ ເຈົ້າເມືອງຄະຍາຄົນໃໝ່ ເພື່ອຮຽກຮ້ອງສິທປົກຄອງວິຫາຣມຫາໂພທິ ທ່ານແມກເຟີຣ໌ສັນ ເກງໃຈມະຫັນເປັນອັນມາກ ກໍໄດ້ຂໍຮ້ອງຄນະມຫາໂພທິໃຫ້ດຳເນີນງານທັງປວງໃນເຣື່ອງນີ້ຢ່າງງຽບ ໆ ຢ່າເອະອະມະເຫີງເກີນໄປເພາະຈະເສັຽກາຣປົກຄອງ ແລະເກີດຄວາມບໍ່ສງົບຂຶ້ນ ພໍດີທ່ານທັມມະປາລະໄດ້ຮັບເຊີນໃຫ້ໄປເຂົ້າປະຊຸມສະພາສາກົລ [1]ກາຣພຸທສາສນາທີ່ເມືອງ ຊີກາໂກສະຫະຣັຖອະເມຣິກາ ທ່ານແມກເຟີຣ໌ສັນຈຶ່ງຖືໂອກາສແນະນຳວ່າ ໃຫ້ທ່ານທັມມະປາລະກັບຈາກອະເມຣິກາເສັຽກ່ອນ ຈຶ່ງຄ່ອຍເຈຣະຈາເຣື່ອງນີ້ກັນໃໝ່ດີກວ່າ.

---

[1] ສ/ກາຣສາສນາສາກົລ

ຄວາມສຳເຣັຈໃນການກູ້ພຸທະຄະຍາ

ການປະຊຸມສະພາສາກົລ ການພຣະສາສນາທີ່ເມືອງຊິກາໂກນັ້ນ ເປັນການປະຊຸມຜູ້ແທນ
ຂອງສາສນາຕ່າງໆໃນໂລກ ເນື່ອງຈາກທ່ານທັມມາປາລະມີຊື່ສຽງໂດ່ງດັງໃນການອອກໜັງສືມະ
ຫາໂພທິ ທ່ານຈຶ່ງໄດ້ຮັບເຊີນໃຫ້ເຂົ້າປະຊຸມ ໃນການຖານະຜູ້ແທນພຸທບໍຣິສັທຝ່າຍຫີນະຍານ
ທັງໝົດ ຄົນທີ່ຄັດຄ້ານບໍ່ຢາກໃຫ້ທ່ານທັມມະປາລະໄປປະຊຸມ ຄືພັນເອກ ໂອລຄອດ໌ ອ້າງວ່າ
ເສັຽເວລາເປົ່າໆ ບໍ່ເຫັນຈະມີປະໂຍຊນ໌ອັນໃດ ແຕ່ທ່ານທັມມະປາລະເຫັນວ່າ ປະໂຍຊນ໌ນັ້ນມີແນ່
ຢ່າງນ້ອຍຂາກັບໄດ້ແວະອີປຸ່ນແລະຈີນ ຄົງຈະສ້າງຄວາມເປັນປຶກແຜ່ນ ໃຫ້ແກ່ມະໂພທິສມາຄົມ
ຍິ່ງຂຶ້ນຢ່າງບໍ່ຕ້ອງສົງໃສ ທ່ານທັມມະປາລະເດີນທາງໂດຍກຳປັ່ນຈາກເກາະລັງກາ ພ້ອມດ້ວຍ
ພຣະບໍຣົມສາຣີກະທາດ ແລະພຣະພຸທຮູປດົດຕົວໄປບູຊາ ກັບຍັງພິມສີລຫ້າເປັນພາສາອັງກິສ
໑໐,໐໐໐ ສະບັບ ສຳລັບແຈກເປັນທານແກ່ປະຊາຊົນ ເມື່ອໄປເຖິງອັງກິສ ທ່ານທັມມະປາລະໄດ້
ໄດ້ຮັບການຕ້ອນຮັບຈາກທ່ານ ເຊີຣ໌ເອດວິນອາໂນລເປັນຢ່າງດີ ແລະຍັງໄດ້ພົບກັບບຸຄຄົລສຳຄັນໃນ
ວົງການພຸທສາສນາຫລາຍທ່ານ ອາທິ ດ.ຣ. ຣີສເດວິລສ໌ ນາຍບີແຊນຕ໌ເປັນຕົ້ນ ທ່ານທັມມະ
ປາລະໄດ້ຂໍຄວາມສນັບສນູນຈາກບຸຄຄົລເຫລົ່ານີ້ ໃນການກູ້ພຸທຄະຍາຄືນມາໃຫ້ແກ່ຊາວພຸທດັ້ງ
ເດີມ ຕໍ່ຈາກອັງກິສທ່ານທັມມະປາລະຂ້າມມະຫາສມຸດອັດລັງຕິກ ໄປຍັງສຫະຣັຖອະເມຣິກາ
ແລ້ວໄດ້ເຂົ້າປະຊຸມທີ່ຊິກາໂກຕາມກຳໜົດ ມີຜູ້ເຂົ້າປະຊຸມຄັ້ງນັ້ນ ໔ ໐໐໐ ຄົນ ທ່ານທັມມະປາລະ
ໄດ້ທຳຊື່ສຽງໃນທີ່ປະຊຸມນັ້ນຢ່າງງົດງາມ ໜັງສືພິມຕ່າງໆ ໄດ້ລົງຂ່າວຊົມເຊີຍກັນມາກ ເປັນ
ຜົລໃຫ້ມິສເຕີ໌ ເດຣາສສ໌ ຊຶ່ງເປັນນັກສຶກສາປຣັຊຍາຢູ່ທີ່ນະຄອນນິວຍອຣຄ໌ ເກີດຄວາມເຫລື້ອມ
ໃສສັທທາໃນພຣະພຸທສາສນາ ແລະເຂົ້າມາທຳພິທີຮັບສີລ ໕ ທີ່ສມາຄົມເທວະວິທຍາ ຊິກາໂກ
ມິສເຕີ໌ ເດຣາສສ໌ ຈຶ່ງເປັນຊາວອະເມຣິກັນ ຄົນແຣກທີ່ຮັບນັບຖືພຸທສາສນາໃນດິນແດນອະເມ
ກາເອງ ຕໍ່ມາກໍເລີຍໄດ້ເປັນລະຫາຍທີ່ດີຂອງທ່ານທັມມະປາລະ ແລະໄດ້ຊ່ວຍເຫລືອກິຈການງານ
ຂອງມະຫາໂພທິສມາຄົມເປັນອັນມາກ ເມື່ອການປະຊຸມສິ້ນສຸດລົງແລ້ວ ທ່ານທັມມະປາລະໄດ້
ຮັບເຊີນໃຫ້ໄປປາຖະກະຖາພຸທສາສນາທີ່ ໂອດແລນດ໌ ແລະຊັ້ງຟຣັງຊິສໂກ ທຳໃຫ້ຊື່ສຽງກຽດຕິ
ຄຸນຂອງທ່ານທັມມະປາລະ ເຟື່ອງຟູຍິ່ງຂຶ້ນ ເມື່ອສິ້ນພາຣະກິຈໃນສຫະຣັຖອະເມຣິກາແລ້ວທ່ານ
ທັມມະປາລະລົງເຮືອກັບລັງກາ ຜ່ານມາທາງມະຫາສມຸດປາຊິຟິກ ແລະທີ່ເກາະ ໂຮໂນລຸລູ ນະ

ທີ່ເກາະໂຮໂນລູລູນີ້ເອງ ທ່ານທັມມະປາລະໄດ້ພົບກັບນັກເທວະວິທຍາອີກຫລາຍຄົນ ແລະໄດ້ພົບກັບຍິງຊະຣາຄົນນຶ່ງ ອາຍຸປະມານ ໕໐ ປີ ຊື່ວ່າ ນາງມາຣີ. ອີ. ຟອສເຕີ໌ ນາງຟອສເຕີ໌ສາຣະພາບກັບທ່ານທັມມະປາລະວ່າ ເຂົາເປັນຄົນທີ່ມີອາຣົມສຸນສຽວໂກດງ່າຍ ໃຈນ້ອຍຢູ່ຕລອດເວລາ ທຳຢ່າງໃດຈຶ່ງຈະແກ້ນິສໄສສັນນີ້ເສັຍໄດ້ ທ່ານທັມມະປາລະຈຶ່ງໃຫ້ຄຳແນະນຳຕາມຫລັກຂອງພຣະພຸທທະສາສນາ ປາກົດວ່າພາຍຫລັງ ນາງຟອສເຕີ໌ ສາມາດນຳເອົາໄປປະຕິບັດໄດ້ຜົລດີ ມີຄວາມພາສຸກຣົ່ມເຢັນຂຶ້ນໃນຊີວິດ ນາງຟອສເຕີ໌ ເປັນເຊື້ອສາຍຂອງເຈົ້າຜູ້ຄອງນະຄອຣ ເກາະຮາວາຍແລະເປັນເສຖຖີທີ່ມີກຳລັງຊັບມາກນາງຈຶ່ງກາຍເປັນພຸທທະສາສນິກ ແລະໃຫ້ການອຸປຖັມແກ່ກິຈການຂອງມະຫາໂພທິສມາຄົມຢ່າງລົ້ນພົ້ນ ນາງໄດ້ບໍຣິຈາກເງິນເກືອບ ໑ ລ້ານຣູປີ ເພື່ອສ້າງວັດວາອາຣາມ ໂຮງຮຽນ ໂຮງພຍາບານ ແລະສຖາບັນການສຶກສາອື່ນໆ ທັງໃນອິນເດັຽແລະລັງກາ ຍັງປາກົດເປັນຄຸນປະໂຍຊນ໌ຢູ່ຈົນຕາບເທົ່າທຸກວັນນີ້

ອອກຈາກໂຮໂນລູລູ ທ່ານທັມມະປາລະເດີນທາງມາແວະຍີ່ປຸ່ນໄດ້ຮັບການຕ້ອນຮັບຈາກບັນດາພຣະພິກສຸຍີ່ປຸ່ນທີ່ໂຕກຽວດ້ວຍໄມຕຣີຈິຕເປັນຢ່າງດີ ທ່ານມີໂອກາສປາໄສປະຊາຊົນຊາວຍີ່ປຸ່ນຊີ້ແຈງເຣື່ອງການກູ້ພຸທທະຄະຍາຄືນມາ ໃນການປະຊຸມຂອງສົງຄ໌ຍີ່ປຸ່ນທີ່ວັດ ເຊໂຊຈິ ທີ່ປະຊຸມລົງມະຕິວ່າ ຈະພະຍາຍາມເຮັ່ງຮາຍເງິນໃຫ້ໄດ້ ໒໐.໐໐໐ ເຢັນພາຍໃນສອງປີ ເພື່ອຊ່ວຽໃນການຊື້ພຸທທະຄະຍາຄືນ ທ່ານທັມມະປາລະຟັງແລ້ວຮູ້ສຶກຜິດຫວັງ ຢູ່ມາກເພາະຍີ່ປຸ່ນເປັນປະເທສໃຫຍ່ໂຕ ຫາເງິນຢ່າງມາພຽງ ໒໐.໐໐໐ ເຢັນເທົ່ານັ້ນພາຍໃນ ໒ ປີຍ່ອມບໍ່ພຽງພໍທີ່ຈະດຳເນີນການອັນເປັນລຳເປັນສັນໄດ້ດັ່ງຄາດຄິດໄວ້ ທ່ານທັມມະປາລະຢູ່ໃນຍີ່ປຸ່ນເດືອນເຄິ່ງ ພໍດີພວກພຣະໃນຍີ່ປຸ່ນເກີດວິວາທກັນໃນເຣື່ອງຍາດກັນທຳພຣະພຸທທະຮູປ ແບບສາຣນາດຈຳໜ່ວຽ ຕ່າງຝ່າຍຕ່າງຕ້ອງການຜູກຂາດແຕ່ຜູ້ດຽວ ທ່ານທັມມະປາລະຈຶ່ງອອກຈາກຍີ່ປຸ່ນເດີນທາງມາຂຶ້ນທີ່ ຊຽງໄຮ້ ໃນປະເທສຈີນ ໄດ້ມີໂອກາສປາໄສເລົ່າຄວາມເປັນໄປຂອງພຸທທະຄະຍາໃຫ້ບັນດາຫລວງຈີນຟັງທີ່ວັດບົນເຂົາ ໂອເມ ພ້ອມທັງໄດ້ທຳພິທີມອບໃບໂພທິກຣັສຣູ້ ແລະພຣະບໍຣົມສາຣີຣິກະທາດໃຫ້ດ້ວຍ ແຕ່ການຄິດວ່າຈະໄດ້ເງິນເປັນກອບເປັນກຳໃນການກູ້ພຸທທະຄະຍາກໍຄົງຫລົ້ມເຫລວຕາມເຄີຍ ຕໍ່ຈາກປະເທສຈີນທ່ານທັມມະປາລະ ໄດ້ແວະປະເທສໄທຍ໌ ເພື່ອຖແລງພາຣະກິສອັນນີ້ແກ່ຊາວພຸທທັງຫລາຍ ທ່ານທັມມະປາລະຢູ່ໃນບາງກອກສາມສັປດາ ພຍາຍາມຊີ້ແຈງໂດຍທຸກວິຖີທາງທີ່ຈະຂໍຄວາມເຫັນອົກເຫັນໃຈ ຈາກພຸທທະສາສະນິກະຊາວໄທຍ໌

ແຕ່ທ່ານກໍຄົງຜິດຫວັງອີກຄັ້ງນຶ່ງ ທຳໃຫ້ທ່ານໝົດກຳລັງໃຈໄປມາກ. ຈຶ່ງເດີນທາງກັບລັງກາ ຜ່ານສິງຄະໂປ ຕອນທີ່ໄປເຖິງລັງກາ ໄດ້ຮັບການຕ້ອນຮັບຈາກທາງຣາຊການ ແລະປະຊາຊົນ ຢ່າງໜ້າຊື່ນຊົມ ເພາະຊື່ສຽງທີ່ທ່ານໄປບຳເພັນໄປໃນຣະຫວ່າງການເດີນທາງຄັ້ງນີ້ ເປັນທີ່ແຜ່ຫລາຍໃນລັງກາຕລອດເວລາ. ທ່ານທັມມະປາລະຢູ່ທີ່ລັງກາເປັນເວລາອັນສັ້ນ ແລ້ວກໍຣີບເດີນທາງມາອິນເດັຽ ແລະຕັ້ງໃຈຈະທຳການອັນສຳຄັນຢ່າງໜຶ່ງຂຶ້ນທີ່ພຸທທະຄະຍາ ນັ້ນຄືການນຳພຣະພຸທທະຣູປ ອາຍຸ ໗໐໐ ປີ ຊຶ່ງສິງປີປຸ່ນມອບໃຫ້ທ່ານມາໃນຣະຫວ່າງແວະໂຕກຽວ ໄປປະດິສຖານໄວ້ທີ່ວິຫານມະຫາໂພທິ ທ່ານທັມມະປາລະຮູ້ດີວ່າ ການກະທຳນີ້ຈະຕ້ອງສ່ຽງໄພຍ໌ມາກ ຈຶ່ງໄດ້ເຂົ້າພົບກັບມິສເຕີຣ໌ ແມຄເຟີຣ໌ສັນ ເຈົ້າເມືອງຄະຍາ ເພື່ອປຶກສາຫາລືກ່ອນ ທ່ານແມຄເຟີຣ໌ສັນ ໃຫ້ຄຳແນະນຳວ່າຄວນຈະຜູກມິດກັບພວກຮິນດູ ທັງຫລາຍແລະເອົາສຽງຂອງພວກຮິນດູມາຊ່ວຍ ດ້ວຍງານຈຶ່ງຈະສຳເຣັຈລຸລ່ວງໄປດ້ວຍດີ ທ່ານທັມມະປາລະຈຶ່ງເດີນທາງໄປເມືອງ ພາຣານະສີ ເຂົ້າພົບຜູ້ຊົງ ອິທທິພົລ ໃນ ລາສນາ ຮິນດູ ທີ່ນັ້ນ ເພື່ອ ຂໍຄວາມເຫັນອົກເຫັນໃຈ ແຕ່ກັບປາກົດວ່າ ພວກຫົວໜ້າສາສນາທີ່ນັ້ນ ບໍ່ເຫັນດີດ້ວຍ ໃນການທີ່ຈະໃຫ້ເອົາພຣະພຸທຮູປເຂົ້າໄປຕັ້ງໄວ້ໃນວິຫານມະຫາໂພທິ ອ້າງວ່າພຣະພຸທທະເປັນແຕ່ນາຣາຍອາວະຕານປາງທີ່ ໙ ແລະວິຫານນັ້ນເປັນສົມບັດຂອງຮິນດູ ຊາວພຸທບໍ່ຄວນຈະຖືສີຫມາກເກີນໄປ ເມື່ອໝົດຫວັງໃນພາຣານະສີແລ້ວ ທ່ານທັມມະປາລະກັບມາຫາມະຫັນຕ໌ທີ່ພຸທຄະຍາອີກຄັ້ງນຶ່ງ ຂໍຄວາມເຫັນອົກເຫັນໃຈ ທີ່ຈະປະດິສຖານພຣະພຸທຮູປປີປຸ່ນໄວ້ໃນວິຫານມະຫາໂພທິ ມະຫັນຕ໌ສແດງຄວາມ ຊິງຊັງຢ່າງຮຸນແຮງ ບອກວ່າຖ້າທ່ານທັມມະປາລະ ຂືນຈະເອົາພຣະພຸທຮູປເຂົ້າໄປຕັ້ງໄວ້ໃນວິຫານມະຫັນຕ໌ ຈະເອົາເງິນແສນຣູປີຈ້າງຄົນ ໕.໐໐໐ ຄົນມາຄອຍຂ້າທ່ານທັມມະປາລະເສັຍໃຫ້ຕາຍ ທ່ານທັມມະປາລະເຫັນທ່າທາງຂອງມະຫັນຕ໌ແລ້ວ ຮູ້ສຶກວ່າຈັງຫວະບໍ່ເໝາະ ຈຶ່ງລໍເຣື່ອງໄວ້ເປັນເວລານຶ່ງປີ ຈົນກະທັ້ງເດືອນກຸມພາ ຄ.ສ. ໑໘໙໕ (ພ.ສ. ໒໔໓໘) ທ່ານທັມມະປາລະກໍຕັດສິນທຳການໃຫຍ່ນັ້ນຢ່າງເດັດດ່ຽວ ທ່ານນຳພຣະພຸທຮູປມາໄວ້ເມືອງຄະຍາກ່ອນ ແລ້ວທ່ານກໍມາພັກກັບພິກຂຸທີ່ພັກຢູ່ໃນກຸດິພະມ້າ ນະພຸທຄະຍາຄືນນຶ່ງ ທ່ານຕື່ນຂຶ້ນເວລາ ໖ ໂມງເຊົ້າ ເຂົ້າສມາທິໃຕ້ຕົ້ນສີມະຫາໂພທິ ທ່ານເກີດຄວາມຮູ້ສຶກໃນຣະວ່າງເຂົ້າສມາທິນັ້ນເອງວ່າ ໃຫ້ນຳພຣະພຸທຮູປປີປຸ່ນ ມາປະດິສຖານໄວ້ໃນວິຫານມະຫາໂພທິ ທ່ານຈຶ່ງໄປປຸກໃຫ້ພຣະພິກຂຸໃຫ້ລຸກຂຶ້ນທຸກອົງຄ໌ ແລະຊວນໃຫ້ເຂົ້າສມາທິພ້ອມ

ກັນອີກຄັ້ງນຶ່ງ ພຣະສົງຄ໌ທຸກອົງຄ໌ຮູ້ສຶກເໝືອນໆກັນວ່າ ຈະຕ້ອງອັນເຊີນພຣະພຸທຣູປນີ້ປຸ່ນມາປະດິສຖານກົງໃຫ້ຈົງໄດ້ ທ່ານທັມມະປາລະຈຶ່ງຕັ້ງສັຈຈາທິຖານເຖິງ ໗ ຄັ້ງ ທີ່ຈະອຸທິສຊີວິດເພື່ອພຣະສາສນາ ພໍເວລາສວ່າງ ທ່ານທັມມະປາລະກັບພຣະ ພິກຂຸຮອນດ້ວຍກັນທັງໝົດ ໗ ຮູປ ພາກັນນຳພຣະພຸທຣູປຈາກເມືອງຄະຍາ ເດີນທາງມາສູ່ພຸທຄະຍາ ເມື່ອມາເຖິງວິຫານມະຫາໂພທິແລ້ວ ກໍນຳເອົາພຣະພຸທຣູປເຂົ້າປະດິສຖານໄວ້ຊັ້ນບົນ ເສັດການປະດິສຖານແລ້ວ ທ່ານທັມມະປາລະພ້ອມດ້ວຍພິກຂຸ ພາກັນຈຸດທູບທຽນບູຊາພຣະຣັດນະໄຕຣ ທັນໃດນັ້ນເອງມີລູກສິດຂອງມຫັນຕ໌ປ່າງເຂົ້າມາພົບ ຈຶ່ງບັງຄັບໃຫ້ເອົາພະພຸທທະຮູປອອກຈາກວິຫານໄປເສັຽໂດຍດີ ທ່ານທັມມະປາລະກັບພິກຂຸສົງນັ້ນໄດ້ຊີ້ແຈງວ່າ ທີ່ນີ້ເປັນວິຫານຂອງພຸທທະສາສນາ ພຽງແຕ່ເອົາພະພຸທຣູປມາຕັ້ງໄວ້ບູຊາ ກໍຈະເປັນທີ່ຮັງກຽດບໍ່ ລູກສິສມະຫັນຕ໌ກໍຮີບໄປຣາຍງານໃຫ້ມະຫັນຕ໌ຊາບໂດຍດ່ວນ ມຫັນຕ໌ໂກທມາກ ຮີບເດີນທາງໄປຫາທ່ານ ແມຄເຟີສັນ ເຈົ້າເມືອງຄະຍາ ຊີ້ແຈງໃຫ້ຊາບວ່າ ທ່ານທັມມະປາລະກັບພິກຂຸສົງ ບຸກຣຸກເຂົ້າໄປວິຫານອັນເປັນສົມບັດຂອງມຫັນຕ໌ ພ້ອມກັນນັ້ນລູກສິດຂອງມຫັນຕ໌ປະມານ ໕໐ ຄົນ ຫລູບເຂົ້າໃສ່ທ່ານທັມມະປາລະກັບພິກຂຸສົງທັງຫລາຍ ພ້ອມດ້ວຍໄມ້ພລອງຕະບອງສັ້ນຄົນນີ້ ທຸກຄົນດ່າທ່ານທັມມະປາລະຢ່າງບໍ່ມີຊິ້ນດີ ແລະຈັບພະພຸທຣູປໂຍນລົງມາຈາກທີ່ຕັ້ງ ພຣະພັກຕ໌ຂວ້ຳລົງກັບດິນ ບ່າຍວັນນັ້ນທ່ານ ແມຄເຟີສັນ ອອກມາສອບສວນເຣື່ອງຣາວ ຈຶ່ງໃຫ້ຕຳຣວຈອາຣັກຂາຄນະຂອງທ່ານທັມມະປາລະໄວ້ໃນກຸດີພະມ້າ ແລະປ້ອງກັນບໍ່ໃຫ້ມີການກະທົບກະທັ່ງເກີດຂຶ້ນໄດ້ ຂ່າວການໂຍນພະພຸທທະຮູປລົງມາຈາກວິຫານມຫາໂພທິແຜ່ໄປໃນກຸ່ມພຸທທະສາສນິກະຊົນທົ່ວໂລກ ບັນດາຜູ້ທີ່ມີຄວາມສັມພັນຢູ່ກັບມຫາໂພທິສມາຄົມກໍໄດ້ເກີດຄວາມຮູ້ສຶກເສັຽໃຈກັນທົ່ວໄປ ທ່ານທັມມະປາລະໄດ້ຍື່ນຟ້ອງຂຶ້ນສານ ໃນຂໍ້ຫາທີ່ຖືກສົບປະໝາດແລະຖືກຂູ່ເຂັນຢ່າງຮ້າຍແຮງ ສານຊັ້ນຕົ້ນຕັດສິນລົງໂທສຈຳຄຸກຈຳເລີຍຜູ້ເປັນລູກສິສຂອງມະຫັນຕ໌ສາມຄົນ ໃຫ້ຈຳຄຸກຄົນລະນຶ່ງເດືອນ ແລະຖືກປັບໃໝຄົນລະ ໑໐໐ ຣູປີ– ສານແຖລງວ່າວິຫານມຫາໂພທິນີ້ ຊາວພຸທໄດ້ໃຊ້ປະໂຍຊນ໌ໃນການບຳເພັນສາສນະກິຈມາເປັນເວລາຊ້ານານ ມຫັນຕ໌ແລະລູກສິສກໍບໍ່ໄດ້ທຳສາສນາກິຈໃດ ໆ ໃນວິຫານນີ້ເລີຍ ສະນັ້ນຈຶ່ງບໍ່ມີເຫດຜົລອັນໃດທີ່ຈະອ້າງວ່າວິຫານນີ້ເປັນຂອງມະຫັນຕ໌ ປາກົດວ່າສານສູງລົງຄຳພິພາກສາກັບຄຳພິພາກສາຂອງສານຊັ້ນຕົ້ນ ໃຫ້ປ່ອຍຕົວຈຳເລີຍໄປ ແລະຍິ່ງກວ່ານັ້ນຍັງພິພາກສາໃຫ້ທ່ານທັມມະປາລະ

ນຳພຣະພຸທທະຮູປຍີ່ປຸ່ນອອກໄປເສັຽໃຫ້ພົ້ນພຸທຄະຍາດ້ວຍ ເວລານັ້ນພຣະພຸທຮູປຍີ່ປຸ່ນຕັ້ງຢູ່ໃນກຸຕິພະມ້າ ຄຳພິພາກສາຂອງສານສູງທຳໃຫ້ເກີດຄວາມບໍ່ພໍໃຈຂຶ້ນໃນຫມູ່ປະຊາຊົນພະມ້າແລະລັງກາ ແລະມີການຍື່ນຄຳຮ້ອງຄັດຄ້ານຢ່າງແຂງແຮງ ຈົນສານສູງຕ້ອງຖອນຄຳສັ່ງໃຫ້ຍ້າຍພຣະພຸທຮູປຍີ່ປຸ່ນທີ່ຕັ້ງຢູ່ໃນກຸຕິພະມ້ານັ້ນເສັຽ ຂໍ້ສເນີພ້ອງຮ້ອງກັນຄັ້ງນັ້ນ ຂ້ອນຂ້າງເປັນເຣື່ອງເອີກເຣີກ ແລະເຣີຍກຮ້ອງຄວາມສົນໃຈຂອງບັນດາຜູ້ມີປັຊາບານທັ້ງຫລາຍເປັນອັນມາກ ໃນວັນວິສາຂະປີ ຄ.ສ. ໑໙໒໓ (ພ.ສ. ໒໔໖໒) ມຫາໂພທິສມາຄົມແຫ່ງເມືອງກັລກັດຕາ ສາຣະນາດຈັດທຳພິທີບູຊາໄດ້ເປັນຄັ້ງແຮກ ໂດຍມີທ່ານ ນະເຣນທອຣນາຖເສນ ເປັນປະທານ ອິນເດັຽຊຶ່ງວ່າງພຸທທະສາສນາມາຫລາຍສັຕວັດເພິ່ງຈະໄດ້ເຫັນພິທີສລອງວັນປະສູດ ຕຣັສຮູ້ ແລະນິພພານ ຂອງສົມເດັດພຣະສັມມາສັມພຸທທະເຈົ້າອີກໃນຄັ້ງນັ້ນເອງ ຫລັງຈາກມີການສລອງວິສາຂະແລ້ວ ບໍ່ເທົ່າໃດສັປະດາ ທ່ານທັມມະປາລະໄດ້ເດີນທາງໄປສຫະຣັຖອະເມຣິກາເປັນຄັ້ງທີສອງຕາມຄຳເຊື້ອເຊີນຂອງທ່ານ ດ.ຣ. ໂປລ ກາຣຸສ ຜູ້ກໍ່ຕັ້ງສາຂາມະຫາໂພທິສະມາຄົມໃນສະຫະຣັຖອະເມຣິກາ ຣະວ່າງທາງໄດ້ຢ້ຽມລອນດອນເຊັ່ນເຄີຍ ໄດ້ແລກປ່ຽນຄວາມຄິດເຫັນກັບເຊີຣ໌ເອດວິນອາຣ໌ໂນລດ໌ ດຣ. ຣີສເດວິດ ແລະສາສຕາຈານ ແມຄສມິລເລີຣ໌ ແລະໄດ້ໄປສແດງປາຖະກະຖາ ທີ່ສະມາຄົມເທວະວິທຍາ ກັບທີ່ໂຣດ໌ປ້າຣ໌ຄດ້ວຍ ຕໍ່ຈາກນັ້ນໄດ້ເດີນທາງໄປສະຫະຣັຖອະເມຣິກາ ແລະສະແດງປາຖະກະຖາ ພຸທທະທັມຕາມຊຸມຊົນຕ່າງໆ ໃນນິວຍອກ ຊິຄາໂກຊັງພຣັງສິສໂກ ຕລອດຂຶ້ນໄປເຖິງການາດາ ທຳໃຫ້ທ່ານເປັນທີ່ຮູ້ຈັກ ຂອງປະຊາຊົນມາກຂຶ້ນເປັນລຳດັບຈົນກະທັ້ງສາມາດ ເປີການກະທຳພິທີ ວິສາຂະບູຊາ ໃນສະຫະຣັຖອະເມຣິກາ ໄດ້ໃນປີຄ.ສ. ໑໙໒໗ ມີຜູ້ມາຮ່ວມພິທີ ໔໐໐ ຄົນຈັດວ່າເປັນພິທີວິສາຂະບູຊາຄັ້ງແຮກທີ່ທຳໃນສະຫະຣັຖອະເມຣິກາ ຫລັງຈາກນັ້ນທ່ານໄດ້ເດີນທາງກັບອິນເດັຽ ຣະວ່າງທາງໄດ້ແວະປາຣີສເຂົ້າຮ່ວມປະຊຸມ ຄອງເກຣສ ແຫ່ງຜູ້ສົນໃຈຕະວັນອອກແລ້ວຂ້າມໄປອັງກິສ ກັບໄປຊູຣິກຈາກຊູຣິກໄປຟຣໍຣັງຊ໌ຈົນເຖິງກຣຸງໂຣມ ສູນກາງຂອງ ຄຣິສຕະຈັກຣ໌ ທ່ານທັມມະປາລະ ພະຍາຍາເຂົ້າເຝົ້າໂປປ ເພື່ອເຈຣະຈາໃນເຣື່ອງການສອນສາສນາໂຣມັນຄາໂຕລິກ ໃນລັງກາ ຊຶ່ງພຸທກັບຄຣິສຕ໌ ມີເຫຕວິວາທກັນຢູ່ສເມີ ປາກຈະໃຫ້ມີທາງວິກລິງປອງດອງໃຈກັນເສັຽແດ່ໂດຍດີ ທ່ານໂປປບໍ່ຍອມໃຫ້ທ່ານທັມມະປາລະເຂົ້າເຝົ້າ ທ່ານຈຶ່ງເດີນທາງຈາກລັງກາ ຕອນນີ້ຊື່ສຽງຂອງທ່ານທັມມະປາລະເປັນ

ທີ່ຮູ້ຈັກກັນໄປທົ່ວລັງກາ ແລະອິນເດັຽແລ້ວ ທ່ານໄດ້ເຣີ່ມການຕັ້ງສຳນັກນາງຊີຂຶ້ນທີ່ລັງກາແລະ ເປີດໂຮງລ້ຽງເດັກກຳພ້າ ກັບໂຮງຮຽນຊັ້ນປະຖົມແກ່ເດັກອະນາຖາ ຕາມແບບພວກຝຣັ່ງມິຊຊັນນາຣີ (Missionnary) ຫລັງຈາກນັ້ນທ່ານໄດ້ເຂົ້າມາຍັງອິນເດັຽ ຈາຣິກໄປຍັງເມືອງຕ່າງໆ ໃນພາກເໜືອຢ່າງບັກທັນຍາດຣາ ບໍ່ໃຍດີກັບຄວາມຜາສຸກຂອງສັງຂາຣຮ່າງກາຍ ຖ່ຳໃສນອນຫັ້ນ ມີຫຍັງກິນກໍກິນຢ່າງນັ້ນເລື້ອຍໄປ. ງານຂອງທ່ານໃນຣະວ່າງນີ້ຄືການເຜີຍແຜ່ພຸທທະສາສນາໃນອິນເດັຽໃຫ້ຊາວອິນເດັຽຣະລຶກເຖິງຄວາມສຳຄັນຂອງພຸທທະສາສນາ ຊຶ່ງເກີດຂຶ້ນໃນປະເທສນີ້ ແລະກິນໃຈກັບປະຊາຊົນຫລາຍຮ້ອຍລ້ານທົ່ວໂລກ. ເມື່ອເສັດສິ້ນການຈາຣິກໃນອິນເດັຽເໜືອແລ້ວທ່ານຊ້ຳຈາຣິກໄປອິນເດັຽໃຕ້ ເມື່ອປີ ຄ.ສ. ໑໙໐໐ (ພ.ສ. ໒໔໔໓) ທ່ານທັມມະປາລະສາມາດເປີດສາຂາ ມະຫາໂພທິສະມາຄົມຂຶ້ນໄດ້ອີກ ມີ ຄື ມັທຣາສ ກຸສິນາຣາ ແລະອະນຸຣາທປຸຣະໃນລັງກາ ສາຂາມັທຣາຊນັ້ນເມື່ອເປີດແລ້ວ ຍັງບໍ່ສູ່ຈະກ້າວໜ້າຈົນກະທັ່ງໄດ້ພິກສຸລັງກາ ຊື່ ນັນທະຣາມ ມາດຳເນີນກິຈການໃຫ້ ຈຶ່ງເປັນທີ່ນິຍົມຂອງປະຊາຊົນ ເພາະພິກສຸ ນັນທະຣາມ ມີຄວາມຮູ້ແຕກສານໃນພຣະໄຕປີດົກ ສາມາດອະທິບາຍພຸທທະທັມເປັນພາສາ ທະມິລ ໄດ້ຢ່າງຄ່ອງແຄ້ວສາຂາກຸສິນາຣານັ້ນ ເຣີ່ມແຣກຢູ່ໃນຄວາມດູແລຂອງພິກສຸ ສໍຣະນັນທ໌ ຕໍ່ມາທ່ານທັມມະປາລະຈຶ່ງມອບໃຫ້ພິກສຸ ຈັນທຣມະນີ ຊາວອາຣະກັນ (ບະຂ່າບ) ຊຶ່ງທ່ານທັມມະປາລະນຳມາອິນເດັຽເປັນຜູ້ດູແລ ທ່ານຜູ້ນີ້ຍັງມີຊີວິດຢູ່ຈົນທຸກວັນນີ້ ສ່ວນສາຂາ ອະນຸຣາທປຸຣະນັ້ນທ່ານທັມມະປາລະມອບໃຫ້ ພຣິມມະຈະຣິວາລີສິງຫະທຣິສຈັນ ເປັນຜູ້ດູແລ.

ເພື່ອທີ່ຈະເຜີຍແຜ່ພຸທທັມໃຫ້ກວ້າງຂວາງຍິ່ງໆ ຂຶ້ນໃນສຫະຣັຖອະເມຣິກາ ໃນປີ ຄ.ສ. ໑໙໐໒ (ພ.ສ. ໒໔໔໕) ທ່ານທັມມະປາລະໄດ້ເດີນທາງໄປຍັງປະເທສນັ້ນເປັນຄັ້ງທີ່ສາມ ຄາວນີ້ທ່ານຕັ້ງໃຈຫວັງຈະໃຫ້ການສຶກສາແກ່ນຸວະຊົນອະເມຣິກັນເປັນສຳຄັນ ຈຶ່ງພຳນັກຢູ່ເກືອບ ໒ ປີ ແລະເລືອກເອົາເມືອງ ບິສຕົງ ເປັນສູນກາງປະຕິບັດການ ຜົລງານຂອງທ່ານໃນຕ່າງປະເທສທຳໃຫ້ມີຜູ້ສົນໃຈໃນພຸທສາສນາມາກຂຶ້ນ ແລະຫລາຍຄົນໄດ້ເຂົ້າອຸປະສົມບົທ ທຳໃຫ້ກຳລັງໃນການເຜີຍແຜ່ພຸທສາສນາເພີ່ມມາກຂຶ້ນອີກ ຢ່າງໃດກໍຕາມ ປັນຫາເຣື່ອງການກອບກູ້ພຸທຄະຍາຍັງບໍ່ທັນປຸລົງໄດ້ ເພາະມະຫັນຕ໌ຍິ່ງວັນຍິ່ງເພີ່ມຄວາມລັງກຽດຊາວພຸທມາກຂຶ້ນ ແຕ່ພຣະພຸທຮູປຍີ່ປຸ່ນ ຊຶ່ງເປັນມູລເຫດແຫ່ງການວິວາທ ຈະຕັ້ງຢູ່ໃນກຸດີພະມ້າແລ້ວ ມະຫັນຕ໌ກໍຍັງພະຍາຍາມຈະໃຫ້ເອົາອອກໄປເສັຽໃຫ້ພົ້ນ ຣວມທັງພິກສຸທີ່ຢູ່ໃນກຸດີນັ້ນດ້ວຍ ໂດຍອ້າງວ່າກຸດີພະມ້າເປັນ

ສົມບັດຂອງມະຫັນຕ໌ແຕ່ຜູ້ດຽວ ຊັ້ນຕົ້ນຣັຖບານ ເບງກອລພະຍາຍາມໂກ່ເກັ່ງໃຫ້ມະຫັນຕ໌ ເບົາມືລົງ ແຕ່ມະຫັນຕ໌ບໍ່ຍອມກັບນຳຄະດີຂຶ້ນຟ້ອງສານ ທ່ານທັມະປາລະຕ້ອງຈ້າງທະນາຍຄວາມຕໍ່ສູ້ຄະດີ ຜົນທີ່ສຸດກໍເລີຍໄດ້ຮັບໄຊຊນະປູ່ທັງສອງສານ ພິກສຸແລະພຣະພຸທຮູປຍີ່ປຸ່ນຈຶ່ງຢູ່ໃນກຸດີພະມ້າໄດ້ຕໍ່ໄປ ໄຊຊນະຂອງທ່ານທັມະປາລະຄັ້ງນັ້ນ ຕ້ອງໃຊ້ຈ່າຍເງິນທອງໄປເປັນອັນມາກແທບສິ້ນເນື້ອປະດາຕົວ ແຕ່ຜົນດີກໍມີມາກຂຶ້ນທຸກທີເພາະບັນດາປັນຍາຊົນຂອງອິນເດັຽຜູ້ເຫັນການໄກ ຕ່າງໃຫ້ຄວາມສນັບສນຸນ ຄວາມພະຍາຍາມອັນຊອບທັມຂອງທ່ານທັມມະປາລະມາກຂຶ້ນ ຈົນກະທັ່ງໃນການປະຊຸມໃຫຍ່ຂອງພັກອິນເດັຽເນຊັນແນລຄອງເກສ໌ ຊຶ່ງເປີດຂຶ້ນທີ່ເມືອງເບນກອນ ໃນປີ ຄ.ສ. ໑໙໒໔ (ພ.ສ. ໒໔໖໗) ກໍໄດ້ນຳເຣື່ອງນີ້ເຂົ້າສູ່ການພິຈາຣະນາດ້ວຍ ເນື່ອງຈາກຊາວພຸທໃນພະມ້າ ລັງກາແລະເນປາລ ໄດ້ຮວມຫົວເຂົ້າກັນຂໍຮ້ອງໃຫ້ພັກສົນໃຈຕໍ່ເຣື່ອງນີ້ເປັນພິເສດ ພັກອິນເດັຽເນຊັນແນລຄອງເກສ໌ ຈຶ່ງຕັ້ງກັມມະການຂຶ້ນສອບສວນ ໂດຍມີ ດຣ ຣາເຊນທຣ ປະສາທ ປະທານາທິບໍດີອິນເດັຽທີ່ທ່ານກໍເຖິງອະສັນຍະກັມໄປໃນຕົ້ນປີນີ້ນັ້ນ ຊຶ່ງເປັນຊາວແຄວ້ນພິຫານ ເປັນປະທານກັມມາທິການ ດຣ. ຣາເຊນທຣປະສາທ ສອບສວນເຣື່ອງຣາວຄວາມເປັນມາທັງໝົດໂດຍລະອຽດແລ້ວ ທຳບັນທຶກສເນີພັກແລະໃຫ້ຄຳແນະນຳວ່າ ທາງປອງດອງທີ່ດີທີ່ສຸດນັ້ນຄວນຕັ້ງກັມມະການຝ່າຍຊາວພຸທ ໕ ຄົນ ຝ່າຍຮິນດູ ໕ ຄົນ ເປັນຜູ້ດູແລພຸທຄະຍາການນີ້ຈະທຳໃຫ້ກໍໂດຍຕຣາເປັນກົດໝາຍບັງຄັບ ເວລານັ້ນທ່ານມະຫາຕມະຄານທີໄດ້ເຂົ້າຊ່ວຍຊາວພຸທດ້ວຍ ໂດຍຂຽນຄວາມເຫັນລົງໃນໜັງສືພິມວ່າ ວິຫານພຸທຄະຍານີ້ຄວນເປັນສົມບັດຂອງຊາວພຸທໂດຍຊອບທັມ ບໍ່ມີອັນໃດຈະຕ້ອງສົງໄສອີກແລ້ວ ຂໍ້ຍຸ້ງຍາກໃນບັນຫາກົດໝາຍຄວນຍຸດກັນເສັຽ ທ່ານມຫະຕມະຄານທີຍັງກ່າວຕໍ່ໄປອີກວ່າ ທ່ານໄດ້ຊາບຂ່າວວ່າມີການຂ້າສັດທຳພິທີກັນໃນວິຫານມຫາໂພທິ ຖ້າຂ່າວນີ້ເປັນຈິງຍ່ອມເປັນການລ່ວງລະເມີດຕໍ່ສະຖານທີ່ອັນສັກສິທຂອງພຸທສາສນາໂດຍກົງ ແລະຍ່ອມເປັນການປະທຸສຮ້າຍຕໍ່ຈິດໃຈຂອງຊາວພຸທທົ່ວໄປຢ່າງແນ່ນອນ ທ່ານມຫະຕມະຄານທີ ຍັງມີຈົດໝາຍເຖິງທ່ານທັມມະປາລະດ້ວຍວ່າ ທ່ານຍິນດີຈະໃຫ້ຄວາມຊ່ວຍເຫລືອຢ່າງເຕັມທີ່ ແຕ່ໃນຣະວ່າງທີ່ອິນເດັຽຍັງບໍ່ທັນໄດ້ເປັນເອກຣາຊນັ້ນທ່ານຍັງບໍ່ສາມາຖຈະຊ່ວຍເຫລືອໂດຍກົງໄດ້ ຕ້ອງຂໍໃຫ້ຄອຍໄປຈົນກວ່າອິນເດັຽຈະເປັນຕົວຂອງຕົວເອງເສັຽກ່ອນ ນອກຈາກທ່ານມຫາຕມະຄານທີ ທ່ານຣະພິນທຣນາຖະກູຣ໌ກໍເປັນອີກຜູ້ນຶ່ງຊຶ່ງໄດ້ໃຫ້ຄວາມເຫັນເປັນລາຍລັກອັກສອຣມາວ່າ ບັນດາຮິນດູຊຶ່ງມີສັຈຈະຕໍ່ຕົວເອງຈະຕ້ອງຮັບວ່າ

ສະຖານທີ່ຊຶ່ງພຣະພຸທເຈົ້າຕັສຣູ້ ອະນຸຕຣະສັມມາສັມໂພທິຍານນີ້ ຈະຕົກຢູ່ໃນຄວາມຄວບຄຸມດູແລຂອງສາສນາອື່ນບໍ່ໄດ້ ເພາະຕົນເອງບໍ່ມີເຫດຜົນທີ່ຈະກ່ຽວຂ້ອງ ແລະບໍ່ມີເຊື່ອໃນຢ່າງໃດກັບສາສນາພຸທ ທັງການປະກອບພິທີກັມກໍບໍ່ຄືກັນອີກດ້ວຍ ສະນັ້ນຜູ້ທີ່ເຊື່ອໃນເສຣີພາບແລະຄວາມຍຸຕິທັມແລ້ວ ຄວນຈະຊ່ວຍກັນໃຫ້ສະຖານທີ່ອັນສຳຄັນໃນປະວັດສາດນີ້ຕົກເປັນຂອງຜູ້ທີ່ເຂົາຍັງຄົງນັບຖືສາສນາພຸທຢູ່ນັ້ນເຖີດ ບັນດາບຸຄຄົລສຳຄັນ ໆ ຂອງອິນເດັຽຕ່າງສແດງຄວາມເຫັນໃນທຳນອງດຽວກັນນີ້ທັງນັ້ນ ທຳໃຫ້ນະຫັນຕົກໃຈມາກ ເຖິງກັບຕ້ອງໄປວ່າຈ້າງສາສດາຈາຣຄົນນຶ່ງໃນມຫາວິທຍາໄລ ປັດນາ ໃຫ້ອອກຮັບແລະໂຄສນາຕໍ່ຕ້ານຄວາມເຫັນຂອງບຸຄຄົລສຳຄັນ ໆ ເຫລົ່ານັ້ນ ຕໍ່ມາໃນປີ ຄ.ສ. ໑໙໓໓ (ພ.ສ. ໒໔໗໓) ທ່ານທັມມະປາລະກໍມາມໍຣະນະພາບດ້ວຍຄວາມຊະຣາກ່ອນທີ່ທ່ານຈະໄດ້ເຫັນພຸທຄະຍາກັບຄືນມາຢູ່ໃນມືຂອງຊາວພຸທ ແຕ່ຊື່ສຽງຂອງທ່ານຍັງກ້ອງວານຈັບໃຈຊົນຊັ້ນປົກຄອງຂອງອິນເດັຽຢູ່ຢ່າງລຶກຊຶ້ງ ບຸຄຄົລທີ່ຮັບຊ່ວງຊີວິດຈິດໃຈຂອງທ່ານທັມມະປາລະຕໍ່ມາ ກໍຄືທ່ານເທວະປະຣິຍາວາລີສິງຫະ ເລຂາທິການມຫາໂພທິສມາຄົມເປັນຜູ້ດຳເນີນການຢ່າງເຂັ້ມແຂງຕໍ່ໄປ ເພື່ອໃຫ້ພຸທຄະຍາກັບຄືນມາເປັນຂອງຊາວພຸທໃຫ້ຈົນໄດ້ ໃນປີ ຄ.ສ. ໑໙໓໙ ທ່ານເນຣູ ນາຍົກຣັຖມົນຕຣີອິນເດັຽ ໄດ້ໄປຢ້ຽມລັງກາມຫາໂພທິສມາຄົມແຫ່ງລັງກາ ໄດ້ຂໍຄວາມເຫັນໃຈຈາກທ່ານ ເນຣູ ໃນເຣື່ອງນີ້ ເວລານັ້ນອິນເດັຽຍັງບໍ່ທັນໄດ້ເປັນເອກຣາຊ ທ່ານເນຣູ ຈຶ່ງພຽງແຕ່ສແດງຄວາມຄິດເຫັນໄວ້ວ່າ ທ່ານໄດ້ໄປຢ້ຽມພຸທຄະຍາມາແລ້ວ ແລະມີຄວາມເຫັນວ່າ ພຸທຄະຍາຄວນທີ່ຈະຢູ່ໃນຄວາມດູແລຂອງຜູ້ທີ່ເຄົາຣົພນັບຖືສະຖານທີ່ນີ້ຢ່າງແທ້ຈິງເໝືອນກັນ ໃນປີ ຄ.ສ. ໑໙໔໗ ອິນເດັຽໄດ້ເປັນເອກຣາຊໂດຍສົມບູນ ມຫາໂພທິສມາຄົມພະຍາຍາມລົບເລົ້າໃນເຣື່ອງສິທທິປົກຄອງພຸທຄະຍາຕໍ່ຣັຖບານອິນເດັຽຢູ່ຕລອດມາ ໃນເດືອນຕຸລາ ໑໙໔໗ (ພ.ສ. ໒໔໙໑) ດຣ. ສີກິສນະສິງຫ໌ ນາຍົກຣັຖມົນຕຣີແຄວ້ນພິຫາຣ ໄດ້ສເນີຮ່າງຣັຖບັນຍັດວິຫາຣພຸທຄະຍາເຂົ້າສູ່ການພິຈາຣະນາ ຂອງສະພາຜູ້ແທນຣາສດອນແຫ່ງແຄວ້ນພິຫາຣ ຮ່າງຣັຖບັນຍັດນັ້ນຖືກຊາວພຸທວິພາກວິຈານຢ່າງເຜັດຮ້ອນ ໒ ປະການ ປະການແຣກຄື ຄນະກັມມະການດູແລປະກອບດ້ວຍບຸຄຄົລທີ່ເປັນຮິນດູມາກກວ່າຊາວພຸທ ແລະປະການທີ່ສອງ ຄນະກັມມະການດູແລຈະຕ້ອງເປັນຊາວອິນເດັຽເທົ່ານັ້ນ ມຫາໂພທິສມາຄົມຈຶ່ງເປີດການປະຊຸມວິສັຊຊນາຮ່າງກົດໝາຍສະບັບນີ້ ທີ່ກັລກັດຕາໃນເດືອນພຶສຈິການັ້ນເອງ ແລ້ວໄດ້ສົ່ງຄວາມຄິດເຫັນໄປຍັງ ດຣ. ສີກິສນະສິງຫ໌ ຣັຖບານແຄວ້ນພິຫາຣໄດ້ຮັບຟັງຄວາມຄິດເຫັນ

ຂອງຄນະຊາວພຸທເປັນຢ່າງດີ ໃນທີ່ສຸດຮ່າງຣັຖບັນຍັຕວິຫາຣພຸທຄະຍາ ໄດ້ຜ່ານສະພາທັງສອງຂອງແຄວັ້ນພິຫາຣໃນເດືອນພຶສພາ ໑໙໔໙ ຊຶ່ງຕາມກົດໝາຍນີ້ໃຫ້ມີການຈັດຕັ້ງຄນະກັມມະການຈັດການດູແລພຸທຄະຍາ ໙ ຄົນ ໂດຍມີຜູ້ວ່າຣາຊການຈັງຫວັດຄະຍາເປັນປະທານ ມີກັມມະການ ໘ ນາຍ ເປັນຊາວພຸທ ໔ ນາຍ ຊາວຮິນດູ ໔ ນາຍ ເທົ່າໆ ກັນ ສຳຣັບຜູ້ວ່າຣາຊການຈັງຫວັດຄະຍາຜູ້ເປັນປະທານນັ້ນ ຖ້າຫາກບໍ່ແມ່ນຊາວຮິນດູ ກໍໃຫ້ເລືອກຜູ້ອື່ນທີ່ເປັນຮິນດູ ສະນັ້ນສຽງຂອງຮິນດູໃນຄນະກັມມະການຈຶ່ງເປັນ ៥ ສຽງມາກກວ່າຊາວພຸທ ໑ ສຽງສເມີໄປ ເຖິງຢ່າງນັ້ນກໍນັບວ່າຝ່າຍຮິນດູຍັງໄດ້ປຽບຢູ່ແດ່ ແຕ່ວ່າໃນພາກປັຕິບັຕແລ້ວປາກົດວ່າ ຄນະກັມມະການຝ່າຍຮິນດູ ສົນໃຈແລະສນັບສນຸນຄນະກັມມະການຝ່າຍພຸທຢູ່ເປັນເນືອງນິຈ ບໍ່ມີອັນໃດຈະຂັດແຍ່ງກັນອີກແລ້ວ.

ສ່ວນມະຫັນນັ້ນກໍໄດ້ເຂົ້າຮວມເປັນຄນະກັມມະການຄົນນຶ່ງໃນກຸ່ມກັມມະການຮິນດູ ແຕ່ກໍຮູ້ສຶກວ່າເຂົ້າໃຈເຖິງຄຸນຄ່າຂອງຣັຖບັນຍັຕສະບັບນີ້ດີ ຊຶ່ງບໍ່ແມ່ນເປັນຜົລດີໃຫ້ແກ່ຊາວພຸທໃນອິນເດັຽແຕ່ເປັນຜົລດີໃຫ້ແກ່ຊາວພຸທທົ່ວໂລກດ້ວຍ ທ່ານ ອູນຸ ນາຍົກຣັຖມົນຕຣີພະມ້າ ເຄີຍມາໄຫວ້ພຣະເຈົ້າພຸທຄະຍານີ້ຄັ້ງນຶ່ງ ແລະໄດ້ຊ່ວຍເວົ້ານຳ ມະຫັນຕ໌ ຂໍໃຫ້ຄືນພຸທຄະຍາໃຫ້ແກ່ຊາວພຸທ ທຳໃຫ້ສຽງຂອງມະຫັນຕ໌ອ່ອນລົງໄປມາກ ແລະໃນຕອນທີ່ທຳພິທີມອບພຸທຄະຍາໃຫ້ແກ່ຄນະກັມມະການໃໝ່ ຕາມກົດໝາຍເມື່ອເດືອນພຶສພາ ໑໙໕໓ ນັ້ນ ມະຫັນຕ໌ໄດ້ເວົ້າກັບທູຕພະມ້າທີ່ມາຮ່ວມພິທີດ້ວຍສີໜ້າອັນຍິ້ມແຍ້ມແຈ່ມໃສວ່າ ຊ່ວຍບອກທ່ານອູນຸດ້ວຍວ່າມະຫັນຕ໌ໄດ້ຍົກພຸທຄະຍາໃຫ້ແກ່ຊາວພຸທແລ້ວ ໝາຍຄວາມວ່າພຸທຄະຍາໄດ້ຕົກມາຂອງຊາວພຸທຕັ້ງແຕ່ບັດນັ້ນເປັນຕົ້ນມາ ທັງນີ້ກໍດ້ວຍຜົລແຫ່ງຄວາມພະຍາຍາມຂອງຊາວພຸທໃນປະເທສຕ່າງໆ ດົນຮົ່ນກັນເກືອບໜຶ່ງສັຕະວັສໂດຍມີທ່ານທັມມະປາລະເປັນຕົ້ນເຫດ ແລະຊັກນຳຈຶ່ງເປັນຜົລສຳເຣັດລົງໄດ້ຢ່າງໜ້າຊົມເຊີຍ ສະນັ້ນຊາວພຸທທົ່ວໂລກຈຶ່ງໄດ້ລະລຶກເຖິງບຸນຄຸນຂອງທ່ານໃນໂອກາສນີ້ ຕາມທີ່ພວກເຮົາໄດ້ມາທຳການສລອງວັນເກີດຄົບຮອບປີຂອງທ່ານຢູ່ເວລານີ້.

ຂໍໃຫ້ພຸທສາສນາຈົ່ງວັທນາຖາວອນຕໍ່ໄປ ໂດຍຂໍຊາວພຸທທັງຫລາຍເຂົ້າເຖິງຄຸນົນການຂອງພຸທສາສນາຢ່າງໂຈ່ງແຈ້ງ ເພື່ອຈະຮູ້ປະໂຍຊທີ່ຈະນຳເພັນຕົນຢູ່ໃນຄວາມດີອັນເປັນແນວທາງທີ່ຈະນຳໄປສູ່ຄວາມຫລຸດພົ້ນຈາກວັຕະສົງສານດັ່ງປະສົງເທີ້ນ.

ຄຳສຣູປ

ອະນຸໂມທະນາອັດພິທິ

ເນື່ອງໃນພິທີສລອງວັນເກີດຄົບຮ້ອຍປີ

ຂອງ

ອະນາຄາຣິກະທັມມະປາລະ

ໂດຍ

ພຣະອາຈາຣຍ໌ ມະຫາປາລ ອານັນໂທ

(ແປເປັນພາສາອັງກິດ ໂດຍ ມະຫາຫົງສາ ຈັນທະວົງສ໌ ປ.ຌ B.A.)

ຈເຣີນພອນ ທ່ານພຸທບໍຣິສັທຜູ້ໃຈບຸນທັງຫລາຍ

ວັນນີ້ທ່ານທັງຫລາຍໄດ້ສດັບຣັບຟັງ ປາຖະກະຖາຂອງທ່ານມະຫາກ້ວ ເຣື່ອງຊີວະປະວັດອະນາຄາຣິກະທັມມະປາລະ ແລະໄດ້ຟັງປາຖະກະຖາຂອງທ່ານພັນຕຳຣວດເອກ.ເລື່ອນ ວິໄລຫົງສ໌ເລຂາທິກາຣພຸທວົງສ໌ ເຣື່ອງສະດຸດີກາຣຟື້ນຟູພຸທຄະຍາ ຂອງທ່ານອະນາຄາຣິກະທັມມະປາລະໄດ້ສຳເຣັດລົງແລ້ວ ດ້ວຍຄວາມໄສພາບຣຽບຣ້ອຍ ຣູ້ສຶກວ່າທ່ານທັງສອງໄດ້ອຸດສາພະຍາຍາມຄົ້ນຄ້ວາຊີວະປະວັດ ຄຸນງາມຄວາມດີຂອງທ່ານອະນາຄາຣິກະທັມມະປາລະ ມາເລົ່າຊີ້ແຈ່ງໃຫ້ບັນດາເຣົາຊາວພຸທ ໃຫ້ຣູ້ແຈ້ງຊັດເປັນຢ່າງດີ ຄຳວ່າອະນາຄາຣິກະແປວ່າ ຜູ້ບໍ່ມີເຣືອນຫລືຜູ້ເສັຍສລະ ຄຳວ່າທັມມະແປວ່າ ຜູ້ຊົງໄວ້ຊຶ່ງສະພາບອັນດີ ປາລະ ແປລວ່າຜູ້ຣັກສາ ເມື່ອຕໍ່ເຂົ້າກັນອະນາຄາຣິກະທັມມະປາລະ ແປວ່າຜູ້ຣັກສາທັມ ດ້ວຍຄວາມເສັຍສລະ ເມື່ອພິຈາຣະນາໄດ້ຄວນແລ້ວ ຕັ້ງແຕ່ຕົ້ນຈົນອະວະສານກາຣສຸດທ້າຍແລ້ວ ຣູ້ສຶກວ່າທ່ານອະນາຄາຣິກະທັມມະປາລະ ເປັນຄົນສຳຄັນຜູ້ນຶ່ງ ໃນເຣື່ອງກາຣຟື້ນຟູພຸທສາສນາ ແລະທາງດ້ານວັດຖຸໂບຣານ ໃນປະເທສອິນເດັຍ ທີ່ເຊື່ອມໂຊມເສັຍຫາຍແລ້ວກັບກອບກູ້ຟື້ນຟູຄືນໄດ້ອີກ ເຊັ່ນຕົວຢ່າງສັງເວຊະນີຍະສຖານທັງ ໔ ທີ່ປະສຸຕິ ຕຣັສຮູ້ ສແດງທັມມະ ປະຣິນິພພານເປັນຕົ້ນ ເພື່ອໃຫ້ເປັນຫລັກຖານຍືນຍັນ ໃຫ້ບຸຄຄົລຜູ້ທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຜູ້ທີ່ເຫລື້ອມໃສແລ້ວໃຫ້ເຫລື້ອມໃສຍິ່ງໆຂຶ້ນ ນັບວ່າເປັນຜູ້ສ້າງຄຸນງາມຄວາມດີ ໃຫ້ແກ່ຊາວພຸທທົ່ວໂລກ ໃຫ້ມີຄວາມສົນໃຈສຶກສາທັມມະແລະປະຕິບັດທັມ ບັ້ງກາຣເຜີຍແຜ່ພຸທສາສນາ ໃຫ້ກັບຈເຣີນກ້ວາງຂວາງຍິ່ງຂຶ້ນອີກ ເມື່ອເຣົາຊາວພຸທໄດ້ພິຈາຣະນາສັງເກດ ກາຣເຄື່ອນໄຫວຂອງພຣະພຸທສາສນາ ເຣີ່ມຕົ້ນມາຕລອດຈົນເຖິງ ພ.ສ. ໒໕໐໗ ປີແລ້ວມີຢູ່ ມີ ຕອນໆ ທີ່ນຶ່ງ ເມື່ອພຣະອົງຄ໌ໄດ້ສຳເຣັດ ສັມໂພທິຍານເປັນພຣະພຸທເຈົ້າແລ້ວ ມີຜູ້ບັລລຸມັຄຄ໌ຜົລຕາມພຣະອົງຄ໌ເປັນຈຳນວນມາກມາຍ ຄືມີຜູ້ບັລລຸໂສດາສະກິທາຄາອະນາຄາ ອະຣະຫັນຕາ ເປັນຈຳນວນມາກ ພຣະພຸທອົງຄ໌ໄດ້ເຜີຍແຜ່ສາສນາຂອງພຣະອົງຄ໌ຢ່າງກ້ວາງຂວາງທົ່ວຊົມພູທວີປ ທີ່ປັຈຈຸບັນສມັຍນີ້ ຣຽກວ່າອິນເດັຍ ໄດ້ເຜີຍແຜ່ທົ່ວເຖິງໃນທັງ ໗ ແຄ້ວນຄື: ກາສີໂກສລະ ອັງຄະມະຄະທະ ສັກກະມັນລະ ວັຊຊີ ວັງສະ ກຸລຸ ຣູ້ສຶກວ່າສມັຍພຸທກາລນັ້ນ ສາສນາຈະເຣີນຣຸ່ງເຣືອງຢ່າງສູງສຸດ ມີຜູ້ບັລລຸມັຄຄ໌ຜົລເປັນຈຳນວນມາກ ດັ່ງກ່າວແລ້ວກາຣເຜີຍແຜ່ພຸທສາສນາໄດ້ສຳເຣັດຜົລ ໄດ້ກ້ວາງຂວາງໃນຄາວນັ້ນ ເພາະອາສັຍເຫດ ໕ ປະກາຣ ຄື ໑ ກະບວນ ກາຣເຜີຍແຜ່ດີ

໒ ປະຣິມານແລະສມັດຖະພາບນັກເຜີຍແຜ່ພໍ ໓ ນະໂຍບາຍການເຜີຍແຜ່ດີ ໔ ຫລັກທັມເໝາະສົມ ໕ ເຫດການອຳນວຍໃຫ້.

ກະບວນການເຜີຍແຜ່ດີນັ້ນຄື: ພຣະອົງຄ໌ເປັນຜູ້ເຜີຍແຜ່ ດ້ວຍການໃກ້ຊິດກັບພຣະສາວົກທັງຫລາຍ ຄືພຣະອົງຄ໌ເປັນທັມມະຣາຊາ ມີທັມມະເສນາບໍດີສາຣີບຸດ ເປັນພຣະສາວົກກ້າຂວາ ມີພຣະໂມຄຄັນລານະເປັນສາວົກກ້າຊ້າຍ ຂຍາຍການເຜີຍແຜ່ສາສນາເປັນກະບວນການ ຄືພຣະອົງຄ໌ລໍຄອງເບິ່ງເຫດການ ເມື່ອສາວົກທັງຫລາຍເຫລົ່ານັ້ນ ມີອຸປສັກຂັດຂ້ອງດ້ວຍວິທີໃດ ພຣະອົງຄ໌ກໍສເດັດໄປແກ້ໄຂໃຫ້ເປັນການຮຽບຮ້ອຍເໝືອນກັນກັບລໍ້ທັມມະຈັກຣ໌ ທີ່ວາງນອນລົງ ພຣະອົງຄ໌ເໝືອນກັນກັບດຸມລໍ້ ສາວົກທັງຫລາຍທີ່ຢູ່ໃນທິສຕ່າງໆເໝືອນກຳລໍ້ ຍ່ອມໝູນວຽນໄປຕາມກັນນັບວ່າເປັນກະບວນການເຜີຍແຜ່ເປັນຢ່າງດີ

ປະຣິມານແລະສະມັດຖະພາບນັກເຜີຍແຜ່ນັ້ນຄື: ສາວົກຜູ້ເປັນນັກເຜີຍແຜ່ກໍມີນວນມາກທີ່ເປັນອົງຄ໌ສຳຄັນມີປະມານ ໑໒໕໐ ອົງຄ໌ ລ້ວນແຕ່ເປັນຜູ້ມີຄຸນສົມບັດແລະສະມັດຖະພາບດີ ເປັນຜູ້ອົບຮົມຄຣູໄດ້ສົມບູນແລ້ວຈາກຈຕຸຣົງຄະມະຫາສັນນິບາດ ທັງນັ້ນນັບວ່າເປັນນັກເຜີຍແຜ່ມີຄຸນະພາບສົມບູນທຸກໆອົງຄ໌

ນະໂຍບາຍການເຜີຍແຜ່ດີນັ້ນຄື: ການເຜີຍແຜ່ຂອງພຣະອົງຄ໌ ເປັນໄປດ້ວຍການອ່ອນໂຍນ ຕາມລັດທິນິຍົມນັ້ນໆ ຄືພຣະອົງຄ໌ບໍ່ປະຕິເສທຄວາມນິຍົມຂອງລັດທິນັ້ນໆ ໃນເບື້ອງຕົ້ນພຣະອົງຄ໌ ຜ່ອນອ່ອນໂຍນຕາມເສັຽກ່ອນ ແລ້ວຈຶ່ງສັ່ງສອນເພີ້ມເຕີມທີຫລັງເຊັ່ນລັດທິພຣາມ ສອນໃຫ້ເຄົາຣົບນັບຖືພຣົມ ພຣະອົງຄ໌ຕັດສອນເພີ້ມເຕີ້ມວ່າ ບິດາມາຣດາ ຜູ້ມີເມດຕາ ກຣຸນາ ມຸທິດາ ອຸເປກຂາກໍຈັດເປັນພຣົມເໝືອນກັນ ລັດທິພຣະພຣົມສອນໃຫ້ໄຫວ້ເທວະດາ ພຣະອົງຄ໌ກໍເຫັນງາມບໍ່ປະຕິເສທ ແຕ່ພາງຫລັງຕັດສອນອີກວ່າ ມະນຸສເຮົາຜູ້ມີຫິຣິໂອຕັປປະຜູ້ປ້ານຕໍ່ບາປ ກໍຈັດເປັນເທວະດາເໝືອນກັນ ນີ້ເປັນຕົ້ນ ໝາຍຄວາມວ່າການເຜີຍແຜ່ຂອງພຣະອົງຄ໌ບໍ່ມີການກະທົບ ແລະບຽດບຽນ ຕໍ່ເຈົ້າລັດທິອື່ນໆ ນັບວ່າເປັນນະໂຍບາຍອັນດີຍິ່ງ

ຫລັກທັມມະເໝາະສົມນັ້ນຄື ທັມມະຄຳສັ່ງສອນຂອງພຣະອົງຄ໌ ເໝາະສົມກັບບຸຄຄົລທຸກຊັ້ນ ຄືຊັ້ນຕໍ່າ ຊັ້ນກາງ ຊັ້ນສູງ ຄົນຊັ້ນຕໍ່າ ພຣະອົງຄ໌ແນະນຳໃຫ້ເປັນຄົນຂຍັນໝັ່ນພຽຣ. ຮັກສາຊັບທີ່ຫາມາໄດ້, ໃຫ້ຄົບບຸຄຄົລຜູ້ມີສີລທັມ໌, ໃຫ້ປະຢັດໃຊ້ຊັບຍ໌ ພໍເໝາະ ພໍຄວນ

ເພື່ອປະໂຍຊນ໌ສຸຂໃນປັຈຈຸບັນ, ຄືນຊັ້ນກາງ ພຣະອົງຄ໌ແນະນຳໃຫ້ມີສັທທາ ເຊື່ອເຫດຜົລ ປະກອບໄປດ້ວຍສີລ ມີກາຍ ວາຈາລຽບຮ້ອຍ, ບໍ່ບຽດບຽນຊຶ່ງກັນແລະກັນ, ແບ່ງປັນຊັບຍ໌ສິນ ບັນຜູ້ທີ່ຄວນໃຫ້ປັນ, ຫມັ່ນຂຍັນຂວາຍ ປັນຍາຄວາມຮູ້ ຄວາມສລາດ ສາມາດປ່ຽນແປງ ສິ່ງທີ່ບໍ່ເປັນແກ່ນສາຣໃຫ້ເປັນແກ່ນສາຣໃຫ້ເປັນແກ່ນສາຣ ໃຫ້ວົນບັນດານໄດ້ຮັບສຸຂປະໂຍຊນ໌ໃນຄາວຫນ້າ ຄືນຊັ້ນສູງພຣະອົງຄ໌ແນະນຳສັ່ງສອນ ພິຈາຣະນາສັງຂາຣຮ່າງກາຍ ໃຫ້ເຫັນຕາມເປັນຈິງວ່າ ບໍ່ທ່ຽງ ບໍ່ທົນທານ ບໍ່ເປັນສາຣະແກ່ນສາຣໃຫ້ເກີດນິພພິທາ ຄວາມເບື່ອຫນ່າຍ ໃຫ້ຄາຍຄວາມຍິນດີແລະຍຶດຖື ໃຫ້ໝົດສິ້ນໄປຈະໄດ້ດັບກິເລສ ຄວາມເສົ້າໝອງ ຍັງຈິດໃຈໃຫ້ຜ່ອງໃສ ຈະໄດ້ພົ້ນທຸກຂ໌ ຄືຈະບໍ່ເກີດ ບໍ່ແກ່ ບໍ່ຕາຍ ຕໍ່ໄປອີກເລີຍ ນັບວ່າຫລັກທັມຂອງພຣະອົງຄ໌ ເໝາະສົມແກ່ບຸຄຄົລທຸກຊັ້ນ ນອກຈາກນັ້ນທັມຂອງພຣະອົງຄ໌ ຍັງເໝາະຣະວ່າງສາມີກັບພັຣຍາ ຣະຫວ່າງອາຈາຣຍ໌ກັບລູກສິສ ຣະຫວ່າງພໍ່ແມ່ກັບລູກ ເຫລົ່ານີ້ເປັນຕົ້ນ.

ເຫດການອຳນວຍໃຫ້ນັ້ນ ຄື: ບຸຄຄົລສມັຍນັ້ນ ເປັນບຸຄຄົລດີ້ນເດັ້ນ ໃນການຄົ້ນຄ້ວາຫາຄວາມຈິງແລະເປັນຜູ້ມີຈິດຕະວິທະຍາ ປຣັຊຍາສູງ ຈຶ່ງເປັນເຫດໃຫ້ບັລລຸມັຄຄ໌ຜົລໄດ້ວ່ອງໄວຕອນທີ່ສອງເມື່ອພຣະອົງປຣິນິພພານແລ້ວ ຄົນຜູ້ຮູ້ທັມບັລລຸທັມມ໌ກໍມີຈຳນວນນ້ອຍຖອຍລົງຮູ້ສຶກວ່າສາສນາເຊື່ອມໂຊມ ມີອະລັຊຊີປອມບວຊຢ່າງມາກມາຍ ແຕ່ໂຊຄດີເມື່ອສມັຍສັຕະວັຕທີ ປີ ພ.ສ ໒໐໑ ມີພຣະມະຫາກະສັຕຜູ້ມີບຸນອົງຄ໌ນຶ່ງຊື່ວ່າເຈົ້າອະໂສກມະຫາຣາຊ ເປັນກະສັຕຍ໌ທີ່ສຳຄັນເຫລື້ອມໃສໃນພຣະພຸທທະສາສນາ ໄດ້ຟື້ນຟູພຣະສາສນາຂອງພຣະພຸທທະອົງຄ໌ ໃຫ້ຈເຣີນອີກຄາວນຶ່ງພ້ອມດ້ວຍຄນະສົງຄ໌ ມີພຣະໂມຄຄັລລີບຸຕຕິສສະເຖຣະເປັນປະທານໄດ້ສັງຄາຍນາຮ້ອຍກອງທັມວິນັຍ ໄດ້ສ້າງສັງເວຊະນີຍະສະຖານທັງ ໔ ໄດ້ກໍ່ສະຖູປແລະຫລັກຫີນໄວ້ ເພື່ອເປັນຫລັກຖານຫມັ້ນຄົງ ແລ້ວຍັງພຣະຣາຊບຸຕ ແລະທິດາໃຫ້ບວຊເປັນພຣະພິກຂຸ ແລະພິກຂຸນີຄືພຣະມະຫິນທະເຖຣະແລະນາງສັງຄະມິຕຕາໃຫ້ມາເຜີຍແຜ່ ຕັ້ງສາສນາຢູ່ທວີປລັງກາ ຍັງສາສໃຫ້ແຜ່ກວ້າງຂວາງອອກໄປ ທັງພຣະມ້າ ຂເມນ ໄທແລະປະເທສລາວນັບວ່າພຣະເຈົ້າອະໂສກຣາຊເປັນນັກປຣາຊຍ໌ຄົນສຳຄັນຜູ້ນຶ່ງ ໄດ້ທຳຄຸນງາມຄວາມດີປະໂຍຊນ໌ ໃຫ້ແກ່ໂລກບໍ່ນ້ອຍເໝືອນກັນ ຖ້າຮູ້ຈັກວັນເກີດຂອງພຣະອົງຄ໌ກໍຄວນທຳບຸນວັນເກີດ ເພື່ອຣະນຶກຄຸນງາມຄວາມດີຂອງພຣະອົງຄ໌,

ເມື່ອ ພ.ສ ໒໐໕໘ ປີ ກະສັດ໌ ມຸສລິມມາແຜ່ອຳນາຈທຳສົງຄາມໄດ້ປາບປາມສາສນາພຸທທະສາສນາຣິບດູ ເປັນເຫດໃຫ້ສາສນາເສື່ອມລົງຈົນບໍ່ມີພຣະພິກຂຸ ພຣະອົງທຳລາຍສະຖານທີ່ແລະໂບຮານວັດຖຸຂອງຊາວພຸທ ຢ່າງສິ້ນເຜດເວທນາ ເມື່ອ ພ.ສ. ໒໑໘໐ ເສສ ມີຊາວຢູໂຣປ ຝຣັ່ງ ອັງກິສໄດ້ເດີນທາງເຂົ້າມາຄ້າຂາຍ ຕໍດວ່າກັບອິນເດັຽໃນທີ່ສຸດອັງກິສກໍເຂົ້າຄອບຄອງອິນເດັຽໄດ້ ອັງກິສຈຶ່ງປະກາສໃຫ້ ຖືສາສນາຢ່າງເສຣີ ສາສນາລັດທິຣິບດູ ກໍມະຫັນບຶດເອົາສະຖານທີ່ວັດຂອງຊາວພຸທ ມີສັງເວຊະນີຍະສະຖານທັງ ໔ ເປັນຕົ້ນມາເປັນຂອງລາສນາພຣາມໃນຄາວນັ້ນ ສາສນາພຸທນັບວ່າບໍ່ມີອັສມີຈັກນ່ອຍເລີຍ ຕອນທີ່ ມີ ເມື່ອ ພ.ສ. ໒໔໓໕ ຈຶ່ງປາກົດມີຄົນສຳຄັນຜູ້ນຶ່ງ ຄືອະນາຄາຣິກະທັມມະປາລະ ຊຶ່ງເປັນຊາວລັງກາ ເປັນລູກຜູ້ຮັ່ງມີຫລືຮຽກວ່າເສດຖີກໍວ່າໄດ້ ເມື່ອໄດ້ອ່ານໜັງສືກ່ຽວກັບພຸທທະສາສນາເຫລົ່ານັ້ນແລ້ວມີຄວາມເຫລື້ອມໃສຈຶ່ງໄດ້ອອກເດີນທາງຈາກລັງກາ ມາອິນເດັຽ ເພື່ອນັສກາຣພຸທທະສັງເວຊະນີຍະສະຖານທັງ ໔ ແລະໄດ້ມາເຫັນພຣະເຈດີພຸທທະຄະຍາ ຢູ່ໃນສະພາບທີ່ສຸດໂຊມ ແລະຢູ່ໃນຄວາມຍຶດຄອງຂອງມະຫັນຊຶ່ງເປັນພຣະຣິບດູ ແລ້ວເກີດຄວາມສັງເວດສລົດໃຈ ຕໍ່ສະພາບທີ່ເຫັນ ຈຶ່ງໄດ້ປະຕິຍານຕົນກໍ່ພຣະເຈດີມະຫາໂພທິ ວ່າຈະຟື້ນຟູພຸທທະສາສນາໃນອິນເດັຽແລະໄດ້ຕັ້ງໃຈວ່າ ຖ້າບໍ່ໄດ້ຄືນມາສະຖານທັງ ໔ ນີ້ ຕາຍເສັຽດີກວ່າ ແລ້ວທ່ານຈຶ່ງເດີນທາງກັບໄປລັງກາ ແລະໄດ້ຈັດຕັ້ງສະມາຄົມ ມະຫາໂພທິ ທີ່ເມືອງໂຄລັມໂບປະເທສລັງກາ ໃນປີດຽວກັນນີ້ໃນປີດຽວກັນນັ້ນທ່ານໄດ້ຈັດສົ່ງພຣະ ໔ ຮູປມາປະຈຳພຸທທະຄະຍາ ເພື່ອປະກາສພຸທທະສາສນາແລ້ວທ່ານຈຶ່ງເດີນທາງໄປຕ່າງປະເທສ ເພື່ອຂໍຄວາມຮ່ວມມືແລະຊ່ວຍເຫລືອຈາກຊາວພຸທ ຜູ້ໃຈບຸນທັງຫລາຍໃນປະເທສຕ່າງໆ ຕໍ່ມາທ່ານໄດ້ຮັບເຊີນຈາກ ດ.ຣ. ບຸລພັດແຫ່ງສຫະຣັດອະເມຣິກາ ໃຫ້ໄປປາຖະກະຖາ ທີ່ອະເມຣິກາ ທ່ານຈຶ່ງຕັດສິນໃຈເດີນທາງໄປອະເມຣິກາ ອີກເປັນຄັ້ງທີ່ ກໍໄດ້ປາຖະກະຖາ ເຣື່ອງພຣະພຸທທະສາສນາ ຫລາຍເຣື່ອງແລະມີຊາວອະເມຣິກັນເຫລື້ອມໃສເປັນຈຳນວນມາກ.

ໂດຍສເພາະ ນາງແມຣີ ອີຟອສເຕີ໌ ແຫ່ງໂຮໂນລູລ ເຫລື້ອມໃສໃນທ່ານທັມມະປາລະມາກ ດັ່ງທີ່ທ່ານມະຫາກ້າວໄດ້ເລົ່າສແດງມາແລ້ວວ່າ ນາງແມຣີອີຟອສເຕີ ບອກໃຫ້ທ່ານທັມມະປາລະຊາບວ່າ ນາງເປັນຄົນຄຽດງ່າຍ ຈະຫາວິທີແກ້ຢ່າງໃດ "ຈຶ່ງຈະຫາຍ" ທ່ານທັມມະປາລະ ກ່າວວ່າມູລເຫດທີ່ພາໃຫ້ ຄຽດແລະຮ້າຍງ່າຍ ເພາະຢາກໃຫ້ຜູ້ອື່ນເຮັດ ຖືກໃຈໂຕ ເມື່ອບໍ່ໄດ້ດັ່ງໃຈແລ້ວກໍຄຽດຮ້າຍ ຄວາມຈິງໂຕເອງກໍທຳ

ບໍ່ໄດ້ຕາມໃຈເອງ ຈະໃຫ້ຜູ້ອື່ນທຳໄດ້ດັ່ງໃຈເຮົາຢ່າງໃດ ຄ້າຍກັບກັບຫາຂອງບໍ່ມີ ເມື່ອຄົ້ນຫາ ບໍ່ໄດ້ດັ່ງໃຈກໍເປັນທຸກ ແລ້ວທ່ານທັມມະປາລະ ແນະນຳໃຫ້ນັ່ງສະມາທິຈເຣີນອານາປານະສະຕິກັມມັດຖານ ກຳໜົດລົມຫັນໃຈເຂົ້າອອກ ນາງແມຣີ ອີຟອສເຕີ້ ກໍປະຕິບັດຕາມຈົນເກີດສະມາທິ ພໍສົມຄວນທຳໃຫ້ນາງມີຄວາມສຸຂໃຈຢ່າງບໍ່ເຄີຍມີ ຈຶ່ງບອກທ່ານທັມມະປາລະວ່າ ຂນະນີ້ຂ້າພະເຈົ້າມີຄວາມສຸຂມາກ ແຕ່ກ່ອນເຄີຍມີເງິນຫລາຍລ້ານ ແຕ່ບໍ່ເຄີຍມີຄວາມສຸຂ ເໝືອນດຽວນີ້ແລ້ວໄດ້ມອບຕົນເປັນພຸທທະສາສນິກະຊົນ ພ້ອມໄດ້ບໍຣິຈາກຊັພຍ໌ ໑ ລ້ານຣູປີໃຫ້ແກ່ທ່ານທັມມະປາລະ ນັບວ່າເປັນກຳລັງອັນສຳຄັນອັນນຶ່ງ ໃນການຟື້ນຟູເຜີຍແຜ່ພຣະພຸທທະສາສນາ ຂອງທ່ານທັມມະປາລະ ເປັນຢ່າງດີ ຫລັງຈາກນັ້ນ ທ່ານທັມມະປາລະໄດ້ເດີນທາງກັບມາອິນເດັຍອີກ ເມື່ອ ພ.ສ. ໒໔໔໕ ໄດ້ກໍ່ຕັ້ງສມາຄົມມະຫາໂພທິ ຂຶ້ນຫລາຍແຫ່ງ ຕັ້ງແຕ່ບັດນັ້ນເປັນຕົ້ນມາ ກິຈການຂອງສະມາຄົມມະຫາໂພທິ ແລະການຟື້ນຟູ ພຸທທະຄະຍາ ກໍໄດ້ຈະເຣີນຂຶ້ນເລື້ອຍໆ ຈົນມີສາຂາຢູ່ຕາມຫົວເມືອງໃຫຍ່ໆທົ່ວໄປໃນອິນເດັຍ ແລະໃນປະເທສຕ່າງໆໃນໂລກ ທ່ານທັມມະປາລະໄດ້ອຸດສາຫະພຍາຍາມກອບກູ້ຟື້ນຟູສັງເວສນີຍະສະຖານທັງ ໔ ໃຫ້ຄືນເປັນຂອງຊາວພຸທ ແລະຊາວໂລກ ຜູ້ນັບຖືພຣະພຸທທະສາສນາ ໂດຍເອົາຊີວິຕແລກປ່ຽນ ທ່ານທັມມະປາລະໄດ້ວິ່ງຂວາຍແລ່ນເຕັ້ນ ຕິດຕໍ່ກັບຜູ້ປົກຄອງນະຄອນໃນແຄວ້ນຕ່າງໆ ແລະຊາວພຸທທັງຫລາຍ ໃຫ້ມາຮ່ວມໄມ້ຮ່ວມມືປະຕິສັງຂອນສ້ອມແຊມໃນສະຖານທັງ ໔ ດັ່ງທ່ານນາຍພັນຕຳຣວຈເອກເລື່ອນ ວິໄລຫົງສ໌.ເລຂາທິການພຸທວົງສ໌ ໄດ້ຊີ້ແຈງມາແລ້ວການຟື້ນຟູພຸທທະຄະຍາຂອງທ່ານທັມມະປາລະ ມີອຸປສັຄຢ່າງມາກມາຍ ເຊັ່ນພຣະພິກຂຸບາງຮູປຖືກມະຫັນບຽດບຽນ ບໍ່ສາມາຖທີ່ປະກອບກິຈໄດ້ ແມ່ນຈະໄປໄຫວ້ພຣະ ທີ່ພຣະເຈດີກໍຖືກມະຫັນຂັດຂວາງ ບາງອົງຄ໌ຖືກທຸບຕີ ຈົນເຖິງແກ່ມໍຣະນະພາບ ບາງອົງຄ໌ກໍຫລົກໜີທັນ ເຖິງຢ່າງນັ້ນທ່ານອະນາຄາຣິກະທັມມະປາລະ ກໍຍັງມີນ້ຳໃຈໃນການດຳເນີນຕໍ່ໄປໂດຍບໍ່ທໍ້ຖອຍ ໄດ້ຈັດຕັ້ງສຖານທີ່ປາຖະກະຖາ ແລະສຖານທີ່ລ້ຽງເດັກອະນາຖາ ຈົນທຳໃຫ້ຄົນຊາວອິນເດັຍວົນເຕັ້ນສົນໃຈ ກັບມານັບນັບຖືພຣະພຸທສາສນາ ເປັນຈຳນວນຫລາຍລ້ານ ທຳໃຫ້ສາສນາພຸທຂະຍາຍຕົວ ຈະເຣີນມາໂດຍລຳດັບ ທ້າຍທີ່ສຸດທ່ານອະນາຄາຣິກະທັມມະປາລະ ໄດ້ຕັດສິນໃຈອຸປສົມບົທເມື່ອແກ່ປະມານ ມີ ເດືອນ ກໍເຖິງມໍຣະນະພາບ ເມື່ອ ພ.ສ. ໒໔໗໖ ໂຮມອາຍຸໄດ້ ໗໑ ປີ ທ່ານກໍໜີຈາກຊາວພຸທຢ່າງງຽບສງົດ ກ່ອນທ່ານຈະມໍຣະ

ນະພາບ ທ່ານໄດ້ຕັ້ງສັຈຈະອະທິດຖານ ຂໍໃຫ້ກັບມາເກີດໃນປະເທສອິນເດັຽອີກສັກ ໒໕ ເທື່ອ ເພື່ອມາຟື້ນຟູພຣະພຸທສາສນາອີກ ດອນນີ້ນັບວ່າທ່ານທັມມະປາລະເປັນຄົນສຳຄັນ ແລະໃຫ້ຕົວຢ່າງໃຫ້ແກ່ຊາວໂລກເປັນຢ່າງດີ ເປັນໜ້າເຄົາຣົບແລະນັບຖື ເພາະເປັນນ້ຳໃຈວີຣະບູຣຸສ ແລະພຣະໂພທິສັດຈິງໆ ໃນປີທີ່ທ່ານນໍຣະນະພາບນັ້ນເອງ ວິຫານພຸທຄະຍາກໍຫລຸດພົ້ນຈາກຄວາມຍຶດຄອງຂອງມະຫັນ ດ.ຣ. ກິສິສນາສິງຫ໌ ຜູ້ຄອງປະຈຳແຄ້ວນວິຫາຣ ໄດ້ຕັ້ງຄນະກັມມະການບໍຣິຫາຣດູແລ ວິຫາຣພຸທຄະຍາ ຣວມ ໙ ຄົນ ມີຜູ້ວ່າຣາຊການແຂວງຄະຍາເປັນປະທານໂດຍຕຳແໜ່ງປະກອບດ້ວຍກັມມະການ ໗ ທ່ານ ເປັນຊາວພຸທ ໔ ຮິນດູ ໔ ມະຫັນນຶ່ງນາຍ ຕັ້ງແຕ່ບັດນັ້ນເປັນຕົ້ນມາ ວິຫາຣພຸທຄະຍາກໍພົ້ນຈາກເງື້ອມມືຂອງພວກນິດສາທິດີ ແລະພວກມະຫັນກໍເຮີ້ມເຊື່ອມອຳນາດລົງເລື້ອຍໆ ຈົນກະທັ້ງວ່າເກືອບຈະບໍ່ມີອຳນາດອັນໃດ ກ່ຽວກັບວິຫາຣພຸທ-ຄະຍາເລີຍ.

ນັບແຕ່ອິນເດັຽໄດ້ເອກຣາຊ ເມື່ອ ພ.ສ. ໒໕໙໐ ເປັນຕົ້ນມາ ຣັຖບາລອິນເດັຽໄດ້ພຍາຍາມທຸກວິທີທາງ ເພື່ອຈະປັບປຸງປະເທສຊາດ ແລະສາສນາພຸທໃຫ້ຈະເຣີນ ຫຽມທ່ອາຣະຍະປະເທສທັງຫລາຍ ຊົນຊັ້ນນຳຂອງອິນເດັຽ ເຫັນວ່າການທີ່ປະເທສຊາດຈະຈເຣີນໄດ້ນັ້ນ ກໍຕ້ອງອາສັຍເຫດຫລາຍປະການ ພຣະພຸທສາສນາມີສ່ວນສຳຄັນບໍ່ນ້ອຍ ທີ່ຈະສາມາດທຳໃຫ້ປະເທສຊາດ ແລະປະຊາຊົນຊາວອິນເດັຽຈເຣີນທຽມທັນອາຣະຍະປະເທສທັງຫລາຍໄດ້ ທ່ານບັນດິດເນຣູ ນາຍົກຣັຖມົນຕຣີອິນເດັຽ ກ່າວເມື່ອປີ ພ.ສ. ໒໕໐໐ ວ່າ "ບໍ່ມີເວລາໃດໃນປະວັດສາດທີ່ອິນເດັຽຕ້ອງການພຣະພຸທສາສນາມາກກວ່າເວລານີ້ ແລະວ່າຂ້າພະເຈົ້າບໍ່ນັບຖືສາສນາໃດແຕ່ຖ້າມີການບັງຄັບໃຫ້ນັບຖືສາສນາໃດ ສາສນານຶ່ງ ຂ້າພະເຈົ້າຈະເລືອກເອົາພຣະພຸທສາສນາ" ຣັຖບາລອິນເດັຽໄດ້ສນັບສນູນ ສົ່ງເສີມພຣະພຸທສາສນາ ໂດຍຈັດຕັ້ງສະຖາບັນການສຶກສາຂັ້ນທີ່ນາລັນທາ ຈັດໃຫ້ມີການສຶກສາພຸທສາສນາໃນມະຫາວິທຍາລັຍຕ່າງໆ ແລະປັບປຸງບຳຣຸງສຖານທີ່ສຳຄັນຂອງພຣະພຸທສາສນາໃຫ້ຊາຍໜຸ່ມຍິງສາວອິນເດັຍ ຫັນມາສົນໃຈໃນພຣະພຸທສາສນາມາກຂຶ້ນຕາມລຳດັບ ຕລອດເຖິງປັຈຈຸບັນນີ້ ຊົນຊາວອິນເດັຽເຂົ້າມານັບຖືພຣະພຸທສາສນາເກືອບປະມານ ໓໐ ລ້ານ ກໍເພາະທ່ານທັມມະປາລະເປັນຕົ້ນເຫດ ມີເຣື່ອງເຣີ່ມຟື້ນຟູພຣະພຸທສາສນາຊາວພຸທທຸກຄົນຮູ້ສຶກຊາບວ່າສາສນາກຳລັງຈະຈະເຣີນຂຶ້ນແລະເປັນຂອງແນ່ນອນວ່າພຸທສາສນາຈະຕ້ອງຈະເຣີນຂຶ້ນອີກໃນອນາຄົດຂ້າງໜ້າບໍ່ຕ້ອງສົງສັຍ ນັບວ່າທ່ານທັມມະປາລະໄດ້ສ້າງຄຸນ

ງານຄວາມດີ ໄວ້ໃຫ້ແກ່ຊາວໂລກ ເໝືອນຫງາຍພາຊນະທີ່ຂວ່ຳໄວ້ ຫລືເໝືອນຊີ້ທາງໃຫ້ຄົນຕາດີເດີນໄດ້

ພຸທສາສນາຈະເຈີນຫລືເສື່ອມກໍ່ຢູ່ກັບພຸທບໍຣິສັທນັ້ນເອງ ໝາຍຄຳວ່າສາສນາເສື່ອມບໍ່ແມ່ນໂທສຢູ່ກັບລັດທິແລະສາສນາອື່ນຫລືຄົນອື່ນ ແມ່ນໂທສກັບຊາວພຸທເອງນັກປາຊເຄີຍກ່າວວ່າ "ສັກຣູອັນຮ້າຍແຮງຄືຕົວເອງ ຄົນອື່ນທຳຮ້າຍເຮົາບໍ່ເທົ່າເຮົາທຳຮ້າຍເອງ" ສາສນາຈະເຊື່ອມອາສັຍເຫດ ໓ ປະການ.

໑. ພຸທບໍຣິສັທຫລືພຣະພິກຂຸ ບໍ່ປອງດອງກັນ ບໍ່ມີຄວາມສາມັຄຄີພ້ອມພຽງກັນເພາະຈິດໃຈບໍ່ເຂົ້າເຖິງທັມມະ.

໒. ຜູ້ອຸປຖັມພຸທສາສນາລ້ວນແຕ່ພຣະມຫາກະສັດ (ຜູ່ມີອຳນາຈປົກຄອງບ້ານເມືອງ) ເມື່ອຂາດກະສັດ (ຜູ່ປົກຄອງ) ຜູ້ໃຈບຸນແລ້ວສາສນາກໍ່ເຊື່ອມໂຊມ.

໓. ເພາະລັດທິສາສນາອື່ນເຂົ້າມາເຜີຍແຜ່ທຳໃຫ້ຊາວພຸທເຮົາຫລົງໄຫລໄປຕາມ ທຳອັນໃດທີ່ບໍ່ຄວນມີພິທີກໍ່ໃຊ້ພິທີເກີນໄປ ທີ່ຈິງພຸທສາສນາບໍ່ເສື່ອມບຸຄຄົລເຮົາເສື່ອມຕ່າງຫາກ.

ເມື່ອສັງເກດເບິ່ງມາເຖິງ ພ.ສ. ໒໕໐໗ ນີ້ ຮູ້ສຶກວ່າປະຊາຊົນໃນປະເທສຕ່າງໆ ໃນທົ່ວໂລກໄດ້ມີຄວາມສົນໃຈໃນພຣະພຸທສາສນາເປັນຈຳນວນມາກ.

ແລະພາກັນຣະນຶກຄຸນງານຄວາມດີຂອງທ່ານທັມມະປາລະ ເມື່ອເຖິງວັນທີ ໑໗ ກັນຍາປີນີ້ ຊຶ່ງເປັນວັນຄ້າຍກັນກັບວັນເກີດຂອງທ່ານຄົບຮ້ອຍປີ ທັງສມາຄົມມຫາໂພທິ ໄດ້ປະກາສເຊີນຊວນຮ່ວມທຳບຸນວັນເກີດ ເພາະເຫດນີ້ຄະນະພຸທວົງສ໌ສຳນັກວັດມະຫາພຸທວົງສາປ່າຫລວງພຣະນະຄອນວຽງຈັນທນ໌ ຈຶ່ງໄດ້ຈັດຂຶ້ນດ້ວຍຄວາມພ້ອມພຽງຂອງຄນະຊາວພຸທທັງຫລາຍ ການທຳບຸນວັນເກີດຂອງທ່ານທັມມະປາລະນີ້ບໍ່ແມ່ນແຕ່ພາຍໃນສຳນັກເຮົາ ໃນສມາຄົມອື່ນໆ ທົ່ວໂລກກໍ່ທຳເຊັ່ນດຽວກັນ ແລະການທຳບຸນໃນຄາວນີ້ທີ່ເປັນດ້ວຍຄວາມຮຽບຮ້ອຍດີ ກໍ່ເພາະອາສັຍຄວາມສາມັຄຄີພ້ອມພຽງກັນ ຖ້າຊາວພຸທເຮົາມີຄວາມມັຄຄີດ້ວຍກັນແລ້ວພວກເຮົາກໍ່ຈະໄດ້ຮັບຄວາມສຸຂໂດຍບໍ່ຕ້ອງສົງສັຍ ເພາະເຫດນັ້ນບຸນໃດໆ ທີ່ໄດ້ມາຈາກການບຳເພັນໃນຄາວນີ້ຂໍອຸທິສໄປຮອດໄປເຖິງດວງວິນຍານຂອງທ່ານທັມມະປາລະຕາມເຈຕນານີ້ ເທີນ.

ທ້າຍທີ່ສຸດ ອາຕະມາພາບໃນນາມຄນະສົງຄ໌ຂໍອ້າງອີງເອົາຄຸນພຣະຣັດນະຕັຍອັນເປັນທຸງໄຊຍ໌ໃນທາງພຣະພຸທສາສນາ ຈົ່ງດົນບັນດານໃຫ້ທ່ານພຸທບໍຣິສັທຜູ່ໃຈບຸນທັງຫລາຍຈົ່ງສົມບູຣໄປດ້ວຍພອຣ ໔ ປະການຄື ອາຍຸ ວັນນະ ສຸຂະ ພະລະ ຕລອດການະນີຣັນດຣ ເທີນ.

ພິມທີ່ໂຮງພິມ "ປະສານມິດ" ໒໘ ຖນົນໜໍ່ແກ້ວກຸມານ ວຽງຈັນທນ໌ ບັນລູນ ປຸ່ມພົງສານ ຜູ້ພິມຜູ້ໂຄສະນາ

ໂຜດແກ້ໃຫ້ຖືກກ່ອນ

ຄຳຜິດ	ຄຳຖືກ	ແຖວ	ໜ້າ
ຕິງກັບ	ຕິກລິງກັບ	໓	໑໑
ຝ່ານ	ຝ່າຍ	໑໓	໑໒
ວ໌ງ	ວິງ	໙	໑໓
ກ໖໐	ຖືກ	໑໑	໒໐
ເສືລນ	ເສືອນ	໑໓	໒໓
ຫ້ງ	ຫັງ	໒໔	໒໓
ເອດນິລ	ເອດວິລ	໑	໒໗
ຖາບຫັ້ງ	ຖາບຫັງ	໑໑	໒໗
ພູທະສາສນາ	ພຸທສາສນາ	໑໙	໒໘
ສຶບສາ	ສຶກສາ	໒	໒໙
ວິບິສໄສ	ວິນິຈສັບ	໖	໒໓
ຣາຊວັງ	ຣາຊວິງ	໒໔	໖໘
ໃຫ້	ໃຫ້ຄວາມອຸດໜຸນ	໒໕	໔໒
ພາບ ໆ	ພາບໃນ ໆ	໑໒	໔໔
ຕຸລາຄົມ	ຕຸລາ	໕	໔໙
ໂອລອິຕ໌	ໂອລຄອດ	໑໙	໕໑
ທັມມະປາລະໄຕ້	ທັມມະປາລະ	໑໐	໕໖
ບິສໄສສັບ	ບິສສັບ	໔	໕໐
ເສຖຖິ	ເສດຖິ	໘	໕໔
ສັ້ງສອນ	ສັ່ງສອນ	໕	໖[illegible]
ເຫລັ້ນບ໌	ເຫລັ້ນບຶງ	໓	໖໖
ຜູ່ກຄອງ	ຜູ່ຄອງ	໕	໖໘